CHAMPA 占芭
02/2015 ສະບັບທີ 113

# ຈຳປາ



## ດ່ານອາກາດນານນິງກວາງຊີ

## ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນ

## ຟື້ນຟູເສັ້ນທາງສາຍໄໝໃຫ້ຈະເລີນຍືນ ເພີ່ມຄວາມຮັກແພງຈີນລາວໃຫ້ເລິກເຊິ່ງ

ISSN 1673-3266
02>
9 771673 326056









Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
*Muangthong Hotel*

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR







# 富鑫家具

## 富鑫家居 温馨港湾

富鑫家具城专业提供各式
高中档家居，引领家居风尚。
依照居住者的审美情趣，
以人为本，充分展示个性化
需求，不断满足人们对居住
环境的审美追求。
本家具城经营
以下几种高档、精品家居
饰品：欧式风格沙发；
中高端办公家具、卡座、
古典餐桌、灯饰、健身器械。
清新自然的家居生活
富鑫打造

地址：万象市安居建材市场
电话：020-55344968
55311778
55081368
QQ：310217504



# ເຟີນິເຈີຟູຊິນ:

ເຄື່ອງໃຊ້ເຮືອນຟູຊິນ ອ່າວທ່າເຮືອທີ່ອົບອຸ່ນ

ຕະຫລາດເຟີນິເຈີຟູຊິນ ສະເພາະຂາຍເຄື່ອງເຮືອນລະດັບສູງແລະກາງທຸກຮູບທຸກແບບ,ນຳໜ້າແຟຊັ້ນເຄື່ອງເຮືອນ.ຖືຄົນເປັນກົກຕາມລົດນິຍົມວິນິດໄສຄວາມງາມຂອງຜູ້ໃຊ້ເຮືອນ, ໄດ້ສະແດງໃຫ້ເຫັນຄວາມຮຽກຮ້ອງຕ້ອງການທາງຊີລະແລະຈິດໃຈສະເພາະບຸກຄະລິກຂອງຄົນຢ່າງເຕັມສ່ວນ.
ເພື່ອຕອບສະໜອງຄວາມສະແຫວງຫາວິນິດໄສຄວາມງາມຂອງຄົນທີ່ມີຕໍ່ສະພາບແວດລ້ອມຢ່າງຕໍ່ເນື່ອງ.
ຕະຫລາດເຟີນິເຈີແຫ່ງນີ້ໄດ້ຈຳໜ່າຍເຟີນິເຈີທີ່ມີລະດັບສູງແລະຍອດຢ້ຽມຫຼາຍຊະນິດມີດັ່ງລຸ່ມນີ້:
ໂຊຟາແບບເອີລົບ,
ເຄື່ອງເຮືອນຫ້ອງການລະດັບສູງແລະລະດັບ
ກາງແບບຈີນ,ເກົ້າອີ້,ໂຕະກິນເຂົ້າແບບບູຮານ,ດອກໄຟປະດັບແລະເຄື່ອງຫັດກາຍ
ຟູຊິນປະດິດສ້າງຊີວິດດ້ານເຄື່ອງເຮືອນທຳມະຊາດ ແລະ ເຢັນສະບາຍແລະສົດຊື່ນ
ສະຖານທີ່: ຕະຫລາດວັດສະດຸກໍ່ສ້າງອານຈີນະຄອນຫຼວງວຽງຈັນ

ເບີໂທ: 020-55344968 55311778 55081368
QQ: 310217504

# ຮາວເຫຼັກຟູຊິນ:

ລະອຽດ,ຕັ້ງໃຈ,ຕັ້ງໜ້າ, ການບໍລິການຖືກໃຈຈີນເທົ່າໃດໃດ

ບໍລິສັດຈຳໜ່າຍແລະເຊົ່າທໍ່ເຫຼັກ,ຮາວເຫຼັກຟູຊິນລາວດຳເນີນທຸລະກິດຕົ້ນຕໍທໍ່ເຫຼັກທຸກຮູບທຸກແບບແລະທຸກນໍ້າເບີ,ໃຫ້ເຊົ່າແລະຂາຍຮາວເຫຼັກແບບເຄື່ອນທີ່.ເຊິ່ງມີຈຸດພິເສດຜະລິດຕະພັນຂອງບໍລິສັດ,ການຕິດຕັ້ງ,ມ້າງອອກງ່າຍດາຍ,ການນຳໃຊ້ຢ່າງປອດໄພ,ການຕິດແປະສະດວກສະບາຍ.ສະເພາະບໍລິການທີ່ດີເລີດໃຫ້ຫົວໜ່ວຍກໍ່ສ້າງຕ່າງໆຢ່າງມີຄວາມປອດໄພ.
ສະຖານທີ່: ຕະຫລາດວັດສະດຸກໍ່ສ້າງອານຈີນະຄອນຫຼວງວຽງຈັນ
ເບີໂທ: 020-55344968 55311778 55081368
QQ: 310217504

## 富鑫脚手架

**细心 精心 用心 服务永远称心**

老挝富鑫钢管、脚手架租售公司主营各种型号的钢管、移动式脚手架出租、出售。
本公司产品具有搭设简单、装拆方便、使用安全、附着简便等特点。
专门为各种施工单位提供最佳的安全服务。
地址：万象市安居建材市场 电话：020-55344968 55311778 55081368 QQ：310217504



# ລົດໂອໂຕຟູຊິນ:

ຮ້ານຂາຍລົດຟູຊິນ,ເຮືອນແຫ່ງຂັນຄຳຮວາເຊີນ.
ຍຸກສະໄໝໃໝ່ຂັນຄຳ,ອະນາຄົດໃໝ່ຂອງທຸລະກິດການຄ້າ

ສະຖານທີ່: ຖະໜົນ T2 ນະຄອນຫຼວງວຽງຈັນ
ເບີໂທ: 020–54588500 55565537

## 富鑫汽车

**富鑫汽车行，华晨金杯之家**
**金杯新时代，商务新未来**

汽车行地址：万象市T2路
电话：020–54588500 55565537 55344968



ໂຮງແຮມເມືອງທອງ
Muangthong Hotel



孟通酒店
孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。
房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适
自2014年7月1日至9月30日止到琅勃拉邦旅游的客人可乘飞机由万象-琅勃拉邦-万象,总价为1.460.000吉普；巴色-琅勃拉邦-巴色总价为1.700.000吉普，可享受：1.机票内含税费 2.免费住孟通酒店2晚上
3.免费早餐 4.可以在酒店办登机手续和出机票 5.可用车接送
琅勃拉邦机场到酒店。





www.muangthonglpb.com

ການບິນລາວ
Lao Airlines

ຈຳປາໂຮລິເດ
Champa Holidays

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ



云南建工集团有限公司是在云南建工集团总公司基础上，于2009年11月6日改制而成。目前，集团已发展成为集工程总承包、房地产开发、城市建设投资开发、建筑工程施工、机电设备安装、商品混凝土生产、路桥市政工程施工、钢结构工程施工、水利水电工程施工、地基工程施工、建材与设备供销、建筑科研、勘察设计、建筑劳务于一体的多层次大型企业集团；是云南省政府国资委履行出资人职责的20户省管企业和15户省属重要骨干企业之一。集团现有全资子公司、控股公司和直管企事业单位31个；现有在职职工16000人，各类专业技术人员7797人，其中具有高级职称的751人。

近年来，集团努力进行结构调整，千方百计拓展市场，综合实力显著增强，为云南的经济建设和社会发展做出了显著贡献。2013年完成总产值434.23亿元，完成竣工面积828.1万平方米。科技水平显著提高，国际市场的开拓能力不断增强。截至2013年12月，集团累计获得全国建筑工程鲁班奖22项，国家优质工程银质奖32项，詹天佑土木工程大奖提名奖1项，全国用户满意工程13项，全国和省级以上科技进步奖400多项，获部省级优质工程奖390项，连续9次入选中国承包商60强。截至2013年9月，集团公司连续22次入选中国企业500强。集团先后在也门、南非、泰国、老挝、乌干达、伊拉克、马尔代夫、毛里求斯、赤道几内亚、柬埔寨等国家承接各类工程，并荣获老挝政府颁发的“发展勋章”、“劳动勋章”等荣誉。2010年至2013年，集团公司连续四年进入美国《工程新闻记录》（ENR）杂志全球最大225家国际承包商排行榜，创造了良好的国际声誉。集团以高效、优质的服务和重合同、守信用的严谨作风，赢得了广大客户、行业主管部门、金融机构的充分信赖，连年被评为AA级企业，享有较高的商誉，“云南建工”品牌已经成为中国国内建筑业界的知名品牌。

在实现较快发展的基础上，集团全力加快战略转型的步伐，加快企业的股份制改造，将集团进一步发展成拥有设计、科研、施工、咨询、投融资建设一体化发展能力的核心竞争力更强的现代大型建筑企业集团和中国西部一流建工集团。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນບໍລິສັດທີ່ປ່ຽນແປງມາຈາກພື້ນຖານບໍລິສັດແມ່ວິສະວະກຳກໍ່ສ້າງຢຸນນານໃນວັນທີ 6 ພະຈິກ 2009.ປັດຈຸບັນນີ້,ບໍລິສັດໄດ້ພັດທະນາກາຍເປັນກຸ່ມວິສາຫະກິດຂະໜາດໃຫຍ່ທີ່ມີຫຼາຍຊັ້ນລະດັບເຊິ່ງເຕົ້າໂຮມການຮັບເໝົາລວມເອົາທາງດ້ານວິສະວະກຳ,ພັດທະນາເຄຫາສະຖານທີ່ດິນ,ພັດທະນາການລົງທຶນສ້າງສາຕົວເມືອງ,ການກໍ່ສ້າງວິສະວະກຳ,ການຕິດຕັ້ງເຄື່ອງອຸປະກອນກົນຈັກໄຟຟ້າ,ການຜະລິດທຸລະກິດເບຕົງ,ກໍ່ສ້າງຂົວທາງຜັງເມືອງ,ກໍ່ສ້າງວິສະວະກຳໂຄງປະກອບເຫຼັກ,ກໍ່ສ້າງຊົນລະປະທານ ແລະ ເຂື່ອນໄຟຟ້ານ້ຳຕົກ,ກໍ່ສ້າງວິສະວະກຳພື້ນຖານ,ການສະໜອງ ແລະ ຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງອຸປະກອນ,ການຄົ້ນຄວ້າສະຖາປັດຕະຍະກຳ,ການສຳຫຼວດອອກແບບ,ການກໍ່ສ້າງ ແລະ ແຮງງານ ແລະ ອື່ນໆເປັນອັນໜຶ່ງອັນດຽວກັນ; ແມ່ນ 1 ໃນວິສາຫະກິດຫລັກແຫຼ່ງທີ່ສຳຄັນ 15 ແຫ່ງຂຶ້ນກັບແຂວງ ແລະ 20 ແຫ່ງສັງກັດແຂວງຄຸ້ມຄອງເຊິ່ງແມ່ນຄະນະກຳມະການຄຸ້ມຄອງຊັບສິນຂອງລັດປະຕິບັດພາລະໜ້າທີ່ຂອງຜູ້ອອກທຶນ.ປັດຈຸບັນນີ້,ກຸ່ມບໍລິສັດມີບໍລິສັດລູກທີ່ມີທຶນທັງໝົດ,ບໍລິສັດຖືຫຸ້ນ,ແລະ ຫົວໜ່ວຍວິສາຫະກິດຄຸ້ມຄອງໂດຍກົງ 31 ບໍລິສັດ.ມີພະນັກງານພະລາກອນ 16,000 ກວ່າຄົນ,ມີພະນັກງານວິຊາການປະເພດຕ່າງໆ 7797 ຄົນ,ໃນນັ້ນ,ຜູ້ທີ່ມີຕຳແໜ່ງຊັ້ນສູງ 751 ຄົນ.

ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດພະຍາຍາມດຳເນີນການປັບປຸງໂຄງປະກອບ,ຂະຫຍາຍຕະຫລາດໃຫ້ກວ້າງອອກດ້ວຍທຸກວິທີ,ກຳລັງສັງລວມຂອງກຸ່ມບໍລິສັດໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.ໄດ້ປະກອບສວນອັນພົ້ນເດັ່ນເຂົ້າໃນການສ້າງສາເສດຖະກິດ ແລະ ການພັດທະນາສັງຄົມຂອງແຂວງຢຸນນານ.ໃນປີ 2013,ໄດ້ສຳເລັດຍອດມູນຄ່າການຜະລິດ 43,423 ຕື້ຢວນຈີນ,ເນື້ອທີ່ກໍ່ສ້າງໄດ້ປະຕິບັດສຳເລັດ 828,1 ໝື່ນຕາແມັດ.ລະດັບວິທະຍາສາດເຕັກໂນໂລຊີໄດ້ຍົກສູງຂຶ້ນຢ່າງຊັດເຈນ,ຄວາມສາມາດບຸກເບີກຕະຫລາດສາກົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.ຈົນເຖິງເດືອນທັນວາປີ 2013,ກຸ່ມບໍລິສັດລວມໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດ 22 ລາຍການ,ລາງວັນເງິນວິສະວະກຳດີເລີດແຫ່ງຊາດ 32 ລາຍການ,ມະຫາລາງວັນສະຖາປັດຕະຍະກຳດ້ານດິນ ແລະ ໄມ້ຈັນທຽນຢຽວສະເໜີລາຍຊື່ 1 ລາຍ,ວິສະວະກຳທີ່ລູກຄ້າທົ່ວປະເທດເພິ່ງພໍໃຈ 13 ລາຍ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີທົ່ວປະເທດ ແລະ ຂັ້ນແຂວງຂຶ້ນໄປ 400 ກວ່າລາຍ,ໄດ້ຮັບລາງວັນວິສະວະກຳດີເລີດຂັ້ນແຂວງ 390 ລາຍ,ໄດ້ຖືກຄັດເລືອກເຂົ້າໃນຖັນແຖວນັກທຸລະກິດຮັບເໝົາ 60 ແຂງແກ່ນຂອງຈີນລຽນຕິດ 9 ເທື່ອ,ຈົນເຖິງເດືອນກັນຍາ 2013,ກຸ່ມບໍລິສັດໄດ້ຖືກເລືອກເຂົ້າສູ່ຖັນແຖວ 500 ວິສາຫະກິດແຂງແກ່ນຂອງຈີນລຽນຕິດ 22 ເທື່ອ.ກຸ່ມບໍລິສັດໄດ້ຮັບເໝົາໂຄງການປະເພດຕ່າງໆຢູ່ຕ່າງປະເທດເຊັ່ນ:ເຢແມນ,ອະຟຼິກກາໃຕ້,ໄທ,ລາວ,ອູການດາ,ອີລັກ,ມານໄດຟ໌,ໂມຣິດ,ກິເນເອກົວເຕີ,ກຳປູເຈຍ ແລະ ປະເທດອື່ນໆ,ໄດ້ຮັບກຽດຕິຍົດຈາກລັດຖະບານລາວໂດຍການປະດັບຫລຽນໄຊພັດທະນາ,ຫຼຽນໄຊແຮງງານໃຫ້ແກ່ກຸ່ມບໍລິສັດ.ໃນປີ 2010-2013,ກຸ່ມບໍລິສັດໄດ້ຖືກຈັດເຂົ້າໃນສາລະບານນັກທຸລະກິດຮັບເໝົາກໍ່ສ້າງສາກົນ 225 ບໍລິສັດທີ່ໃຫຍ່ສຸດໃນໂລກຂອງວາລະສານ ENR ບັນທຶກຂ່າວວິສະວະກຳຂອງອາເມລິກາ,ໄດ້ສ້າງຊື່ສຽງສາກົນທີ່ດີເດັ່ນ.ກຸ່ມບໍລິສັດຖືເອົາການບໍລິການທີ່ມີປະສິດທິພາບສູງ ແລະ ມີຄຸນນະພາບດີເລີດ ແລະ ທ່ວງທ່າທຳນອງທີ່ເຂັ້ມງວດໃນການນັບຖືສັນຍາ,ປະຕິບັດຕາມຄຳໝັ້ນສັນຍາ,ໄດ້ຮັບຄວາມເຊື່ອໃຈຢ່າງເຕັມທີ່ຈາກລູກຄ້າອັນກວ້າງໃຫຍ່ໄພສານ,ກົມກອງຄຸ້ມຄອງຂະແໜງການວິສາຫະກິດ,ວົງການການເງິນ,ໄດ້ຮັບການຕີລາຄາເປັນວິສາຫະກິດຂັ້ນ AA ຫລາຍປີລຽນຕິດ,ໄດ້ຮັບນາມມະຍົດຂັ້ນສູງ.“ຍີ່ຫໍ້ດັງວິສະວະກຳກໍ່ສ້າງຢຸນນານ”ໄດ້ກາຍເປັນ“ຍີ່ຫໍ້ດັງທີ່ມີຊື່ສຽງ”ໃນວົງການວິສະວະກຳກໍ່ສ້າງພາຍໃນປະເທດ.

ບົນພື້ນຖານແຫ່ງການພັດທະນາຕົວຈິງທີ່ໄວສົມຄວນນັ້ນ,ກຸ່ມບໍລິສັດໄດ້ອອກແຮງເລັ່ງລັດບາດກ້າວຫັນປ່ຽນທາງດ້ານຍຸດທະສາດ,ເລັ່ງລັດການປັບປຸງລະບົບຫຸ້ນສ່ວນຂອງວິສາຫະກິດ,ຈະພັດທະນາກຸ່ມບໍລິສັດໃຫ້ກາຍເປັນກຸ່ມບໍລິສັດກໍ່ສ້າງແຖວໜ້າໃນພາກຕາເວັນຕົກຂອງຈີນ ແລະ ເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງທັນສະໄໝຂະໜາດໃຫຍ່ທີ່ມີແກນກາງແຫ່ງຄວາມສາມາດແກ່ງແຍ້ງທີ່ຍິ່ງເຂັ້ມແຂງກວ່າເກົ່າໃນດ້ານການລະດົມທຶນກໍ່ສ້າງເປັນອັນໜຶ່ງອັນດຽວກັນ,ກາຍເປັນທີ່ປຶກສາ,ການກໍ່ສ້າງ,ການຄົ້ນຄ້ວາວິທະຍາສາດ ແລະ ການອອກແບບ.




ວຽງຈັນເຊັນເຕີລາວ
老挝万象中心



# ສາລະບານ

02/2015 ສະບັບທີ 113










## ສາລະຄະດີພິເສດ 本刊特稿


08.ການລົງເລິກປະຕິຮູບຂອງຈີນສ້າງຜົນປະໂຫຍດໃຫ້ແກ່ທົ່ວໂລກ

12.ຍິ່ງເປີດກວ້າງຍິ່ງປະຕິຮູບ ຍິ່ງປະຕິຮູບຍິ່ງເປີດກວ້າງ


## ຄວາມໄຝ່ຝັນຂອງຈີນ 中国梦


16.ດ່ານອາກາດນານນິງກວາງຊີ


## ປະຕູເມືອງຈີນ 中国之窗


18.ກຸ່ມບໍລິສັດລຸ້ຍຕີ້ຈີນສ້າງທຸລະກິດຂະໜາດໃຫຍ່ຢູ່ຕ່າງປະເທດ


## ການໄປມາຫາສູ່ກັນສັມຖະວະໄມຕີຈິດ 友好往来


22.ຟື້ນຟູເສັ້ນທາງສາຍໄໝໃຫ້ຈະເລີນຄືນ ເພີ່ມຄວາມຮັກແພງຈີນລາວໃຫ້ເລິກເຊິ່ງ

26.ປີແລກປ່ຽນວັດທະນະທຳຈີນ-ອາຊຽນ 2014 ໄດ້ຮັບໝາກຜົນຢ່າງຫລວງຫລາຍ

30.ງານສິລະປະວັດທະນະທຳປະເທດລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງປີ 2014 ຈັດຂຶ້ນຢູ່ສິບສອງພັນນາ


## ລວມຈຸດຢຸນນານ 聚焦云南


34.ການພັດທະນາຍຸດທະສາດ "1 ແຖບ 1 ເສັ້ນທາງ" ນະຄອນປາວຊານ--ພິທີໄຂຕະຫລາດການຄ້າສາກົນອີອູນາວຣວາປາວຊານ ແລະ ການລິເລີ່ມກິດຈະກຳທຸລະກິດເອເລັກໂຕຼນິກຕຽນຊີ (ພາກຕາເວັນຕົກຢຸນນານ)

38.ສູນການຄ້າແບບສວນດອກໄມ້ທີ່□າມທີ່ສຸດຂອ□ອາຊີເປີດບໍລິການຢ່າ□ເປັນທາ□ການສຳ□ນານບັດໃໝ່ດ້ານການທ່ອ□ທ່ຽວຂອ□ຢຸນນານ


## ວິສະວະກຳກໍ່ສ້າງຢຸນນານ 云南建工


40.ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ຮັບການພັດທະນາຢ່າງຫລວງຫລາຍ


## ການທ່ອງທ່ຽວທົ່ວສະມາຈອນ 旅游纵横


48.ລະດູແຫ່ງຫິມະ ແລະ ນ້ຳກ້າມະໄປຫລິ້ນສະກີ້ຢູ່ພູຊາງໄບ


## ລຽບຊົມວັດທະນະທຳ 文化博览


52.ຮູບປັ້ນ "ລຸງກະຕ່າຍ" ຂອງປັກກິ່ງ


## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校


54.ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນ


## ປະຊາຊາດຈີນ 中华民族


56.ຊື່ລານຄາພູະສິ່ງອັດສະຈັນໃນຫັດຖະກຳເຜົ່າທູເຈ່ຍ


## ຮຽນພາສາຈີນ 学汉语


60.ຮຽນພາສາຈີນ



主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社

总 顾 问　赵　金　卯稳国
顾　　问　杨文虎　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　茜
副 社 长　郭建初　吴静波　田虎青　海　江

总 编 辑　杨　云
总编室主任　禹正玉
总编室副主任　汪伟云
编辑总监　王志谦　李　可
编辑部副主任　苏雯雯
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳　杨　滢
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君　施艳琼
发行部主任　邹和平
发　　行　陈　龙
编　　务　陆　蕊　何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ ຫ້ອງການຂ່າວປົກຄອງແຂວງຢຸນນານ
ອົງການປະສານງານ ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ
ຮຽບຮຽງພິມຈຳໜ່າຍ ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່ ຈາວຈີນ ເມົາເວີນກົວ

ທີ່ປຶກສາ ຢາງເວີນຮູ ຊຽນຢູຍໄຊ ໄຊຊຸນແຊງ
ຈ່າງຢູ້ຍໄຊ ລີລຽນປິ່ນ ລິວຢົງ
ຜູ້ອຳນວຍການໃຫຍ່ ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່ ກົວຈຽນຊູ ອູຈີນໂປ ທຽນຫູຊິນ ໄຮຈຽງ
ຫົວໜ້າບັນນາທິການໃຫຍ່ ຢາງຢູນ
ຫົວໜ້າພິມຈຳໜ່າຍ ຢູຍເຈິງຢູຍ
ຮອງຫົວໜ້າພິມຈຳໜ່າຍ ຫວ່າງເວີຍຢູນ
ຫົວໜ້າບັນນາທິການ ຫວາງຈື້ຊ່ຽນ ຫຼີ້ເຄີ
ຮອງຫົວໜ້າພະແນກບັນນາທິການ ຊູ່ເວີນເວີນ
ຜູ້ແປພາສາລາວ ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
ຫຼີຊຽວຢວນ ອຸດົນສິນ ລິວເຢີນເຫີ
ຜູ້ກວດແກ້ພາສາລາວ ລິວເຢີນເຫີ
ບັນນາທິການພາສາລາວ ປາຍຍຽນ ຢາງຢິງ
ຜູ້ຄຸມງານຝ່າຍສິລະປະ ຈູ້ສິນ
ຜູ້ຄຸມງານຝ່າຍອິນເຕີເນັດ ຈາງເຊີຍີ ຜູ້ຊ່ວຍຜູ້ຄຸມງານ ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ ລີທາວ ບັນນາທິການ ລີເວີນຈູນ ຊື່ຢຽນສົງ
ຫົວໜ້າພະແນກແຈກຈ່າຍ ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ ແຊງລົງ
ພະນັກງານຝ່າຍປົກຄອງ ລູຢູຍ ເຫຍູລານ



发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86–871–64112975
办公室电话：86–871–64101644
传真：86–871–64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856–21–254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D
ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86–871–64112975 64101644
ແຟກ: 86–871–64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ¥10

图 / 新华社

# ການລົງເລິກປະຕິຮູບຂອງຈີນສ້າງຜົນປະໂຫຍດໃຫ້ແກ່ທົ່ວໂລກ

## 中国深化改革红利惠泽世界

**30 多年前，中国义无反顾地开启了改革开放的大幕，让人民富了起来，让国家强了起来。30 多年后的今天，站在新的历史起点上，作为世界第二大经济体的中国开启了新一轮改革。**

ເມື່ອ 30 ກວ່າປີກ່ອນ,ຈີນໄດ້ເລີ່ມດຳເນີນການປະຕິຮູບ ແລະ ເປີດປະຕູສູ່ພາຍນອກຢ່າງອົງອາດກ້າຫານ, ເຮັດໃຫ້ປະຊາຊົນຮັ່ງມີຂຶ້ນ,ປະເທດເຂັ້ມແຂງຂຶ້ນ.30 ກວ່າປີຜ່ານໄປແລ້ວ,ຂູ່ມື້ນີ້, ໂດຍຢືນຢູ່ຈຸດເລີ່ມໃໝ່ດ້ານປະຫວັດສາດ,ປະເທດຈີນທີ່ເປັນອົງກອນເສດຖະກິດໃຫຍ່ອັນດັບ 2 ຂອງໂລກໄດ້ເປີດການປະຕິຮູບຮອບໃໝ່.ໃນເວລາທີ່ວິກິດການດ້ານເສດຖະກິດ ແລະ ການທະນາຄານຂອງໂລກຍັງບໍ່ທັນໝົດໄປນັ້ນ,ການລົງເລິກປະຕິຮູບຂອງຈີນໄດ້ສ້າງຜົນປະໂຫຍດຢ່າງໃຫຍ່ຫຼວງໃຫ້ແກ່ທົ່ວໂລກ.

ການລົງເລິກປະຕິຮູບເປັນໂຄງການອັນໃຫຍ່ຫຼວງ ແລະ ສັບສົນ,ຕ້ອງການປັບປຸງດ້ານຕ່າງໆຂອງສັງຄົມຈີນ.ສຳລັບໂລກແລ້ວ,ປະເທດຈີນທີ່ລົງເລິກການປະຕິຮູບແລ້ວຈະມີຄວາມແຕກຕ່າງກັນກັບເມື່ອກ່ອນແນວໃດ? ເວົ້າໂດຍຫຍໍ້ແລ້ວ,ກໍ່ແມ່ນຕະຫຼາດກວ້າງຂວາງກວ່າເກົ່າ, ການຄ້າສະດວກສະບາຍກວ່າເກົ່າ,ການລົງທຶນແຂງແຮງກວ່າເກົ່າ ແລະ ການປົກຄອງປະເທດດ້ວຍກົດໝາຍຢ່າງໂປ່ງໃສກວ່າເກົ່າ.ໃນຍຸກສະໄໝແຫ່ງອິນເຕີເນັດດ້ານວັດຖຸ(Internet of Things),ຈີນໄດ້ເຜີຍແຜ່ກຳລັງຊີວິດດ້ານເສດຖະກິດຢ່າງຫຼວງຫຼາຍ ໂດຍແມ່ນໂອກາດສຳຄັນສຳລັບໂລກ.ກ່ຽວກັບເລື່ອງນີ້,ໜັງສືພິມໂລກຂອງເຢຍລະມັນເຫັນວ່າ,ຈີນໄດ້ເຊີດຊູຄວາມຫວັງຂອງເສດຖະກິດໂລກ.

ຕະຫຼາດກວ້າງຂວາງກວ່າເກົ່າ,ໝາຍຄວາມວ່າບັນດາປະເທດຊ່ອງຫວ່າງຫຼາຍກວ່າເກົ່າໃນການສົ່ງອອກສິນຄ້າ.ຫຼຸດຜ່ອນການຄຸ້ມຄອງໃຫ້ກະທັດຮັດກວ່າເກົ່າ ແລະ ປ່ອຍສິດໃຫ້ຂັ້ນລຸ່ມເພື່ອປ່ອຍກຳລັງຊີວິດດ້ານການຕະຫຼາດ,ປັບປຸງລະບົບປະກັນສັງຄົມເພື່ອສະໜອງໂອກາດການຄ້າຢ່າງບໍ່ມີຄວາມຈຳກັດ……ຢູ່ເບື້ອງຫຼັງຂອງການປະຕິຮູບທຸກດ້ານ,ລ້ວນແຕ່ມີຕະຫຼາດທີ່ເປີດກວ້າງອອກຢ່າງບໍ່ຢຸດຢັ້ງ.ຕະຫຼາດທີ່ກວ້າງອອກກໍ່ໝາຍເຖິງການເຕີບໂຕດ້ານການບໍລິໂພກ ແລະ ຈະຊຸກຍູ້ການນຳເຂົ້າສິນຄ້າ.ເຫຼົ້າວາຍຂອງຝຣັ່ງ,ກາເຟຂອງໂກລົມເບຍ,ຊີ້ນງົວຂອງອູຣູໄກວ,ເຄື່ອງຫອມຂອງອິນເດຍ ແລະ ອື່ນໆ….ຈີນໄດ້ດຶງດູດສິນຄ້າຈາກແຫ່ງຕ່າງໆຂອງໂລກ, ກໍ່ໄດ້ດຶງເອົາເສັ້ນກົ່ງແຫ່ງຄວາມຕ້ອງການຂອງໂລກ



ພາບລວມເຂດປອດພາສີກາວຊຽວເຂດນອກນະຄອນຊຽງໄຮ
上海市外高桥保税区全景



ລະບົບກຳເນີດໄຟຟ້າດ້ວຍແສງສະຫວ່າງຢູ່ຈອມອາຄານເຂດ 4 ຕະຫລາດການຄ້າສາກົນອີອູ
义乌国际商贸城四区楼顶光伏发电系统

ຂຶ້ນສູ່ລະດັບສູງກວ່າເກົ່າ.

ເຂດການຄ້າເສລີຊ່ວຍໃຫ້ຊຸກຍູ້ໃຫ້ການຄ້າສາກົນ ມີຄວາມສະດວກຫຼາຍກວ່າເກົ່ານັ້ນກໍ່ເປັນກໍລະນີອັນໜຶ່ງ ທີ່ຈີນຫຼຸດຜ່ອນການຈຳກັດດ້ານການບໍລິຫານ ແລະ ປ່ອຍ ສິດໃຫ້ຂັ້ນລຸ່ມໃນຂົງເຂດການຄ້າກັບຕ່າງປະເທດ. ໃນການ ປະຕິຮູບດ້ວຍຕົນເອງຄັ້ງນີ້, ປະຊາຄົມໂລກໄດ້ເຫັນເຖິງ ການຍົກລະດັບຄວາມສາມາດປົກຄອງປະເທດແບບທັນ ສະໄໝຂອງຈີນ ແລະ ຄວາມຈິງໃຈໃນການເປີດກວ້າງ ການຄ້າກັບປະເທດຕ່າງໆໃນໂລກ. ພາຍໃຕ້ການຊຸກຍູ້ ຂອງຄວາມຈິງໃຈດັ່ງກ່າວ, ວິສາຫະກິດທຶນຕ່າງປະເທດ ພາກັນມາສ້າງທຸລະກິດຢູ່ເຂດການຄ້າເສລີ, ວິສາຫະກິດ ຕ່າງປະເທດທີ່ສ້າງຕັ້ງຂຶ້ນໃໝ່ໄດ້ມີປະມານ 1800 ແຫ່ງ. ຕົວເລກທີ່ເພີ່ມຂຶ້ນເລື້ອຍໆນັ້ນສະແດງໃຫ້ເຫັນວ່າ, ອົງ ກອນເສດຖະກິດຕ່າງໆຂອງໂລກຍິນດີດຳເນີນການຄ້າ ກັບຈີນ ແລະ ໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍ.

ການລົງທຶນແຂງແຮງກວ່າເກົ່າ, ກໍ່ໝາຍຄວາມວ່າ, ປະເທດຕ່າງໆໄດ້ຮັບຜົນປະໂຫຍດຫຼາຍກວ່າເກົ່າຈາກ ການລົງທຶນຂອງປະເທດຈີນ. ໃນຊຸມປີມໍ່ໆມານີ້, ຈີນໄດ້ ເພີ່ມການລົງທຶນຕໍ່ພາຍນອກເລື້ອຍໆ, ເຊິ່ງໄດ້ຊຸກຍູ້ການ ຍົກລະດັບຜະລິດຕະພັນ ແລະ ການພັດທະນາຢ່າງເປັນ ເຈົ້າຕົນເອງຂອງປະເທດທີ່ໄດ້ຮັບການລົງທຶນຂອງຈີນ. ການລົງທຶນຂອງຈີນບໍ່ພຽງແຕ່ໄດ້ສິ່ງທຶນຮອນ, ເຕັກໂນ ໂລຊີໄປເທົ່ານັ້ນ, ແຕ່ຍັງໄດ້ສ້າງໂອກາດປະກອບອາຊີບ ແລະ ລາຍຮັບຈາກພາສີອາກອນຂອງທ້ອງຖິ່ນແຫ່ງນັ້ນ.

ໃນກອງປະຊຸມຜູ້ນຳອຸດສາຫະກຳການຄ້າຂອງອົງ ການເອເປັກທີ່ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງນັ້ນ, ທ່ານ ສີ ຈິ້ນຜິງ, ປະທານປະເທດຈີນໄດ້ຊີ້ແຈ້ງອີກເທື່ອໜຶ່ງເຖິງ ເສັ້ນທາງລົງເລິກການປະຕິຮູບຢ່າງຮອບດ້ານຂອງຈີນ, ຄືກະຕຸກຊຸກຍູ້ກຳລັງບົ່ມຊ້ອນຂອງຕະຫຼາດ; ເປີດກວ້າງ ເສັ້ນທາງໃຫ້ແກ່ການປະດິດສ້າງໃໝ່; ຊຸກຍູ້ການເປີດປະ ຕູສູ່ພາຍນອກສູ່ລະດັບສູງ; ນຳເອົາຜົນປະໂຫຍດຫຼາຍກວ່າ ເກົ່າມາໃຫ້ແກ່ປະຊາຊົນ, ສົ່ງເສີມຄວາມຍຸຕິທຳ ແລະ ຄວາມເປັນທຳຂອງສັງຄົມ. ເວົ້າສຳລັບໂລກແລ້ວ, ວຽກ 4 ດ້ານທີ່ກ່າວມານັ້ນ, ລ້ວນແຕ່ຈະສ້າງໂອກາດການຄ້າ ຢ່າງຫຼວງຫຼາຍ.

ປະຈຸບັນ, ເສດຖະກິດຈີນໄດ້ຮັກສາທ່າອຽງເຕີບໂຕ ຢ່າງແຂງແຮງ, ຕໍ່ເນື່ອງ ແລະ ສົມດູນກັນ, ມູນຄ່າເພີ່ມ ຂຶ້ນທຸກປີເທົ່າທຽມກັບເສດຖະກິດຂອງປະເທດທີ່ພັດທະ ນາແລ້ວລະດັບກາງ. ໃນ 5 ປີຂ້າງໜ້າ, ຈີນຈະນຳເຂົ້າ ສິນຄ້າຫຼາຍກວ່າ 10000 ຕື້ໂດລາ, ການລົງທຶນຕໍ່ຕ່າງ ປະເທດຈະຫຼາຍກວ່າ 500 ຕື້ໂດລາ. ເຊິ່ງໄດ້ສ້າງຄວາມ ຕ້ອງການຫຼາຍກວ່າເກົ່າຕໍ່ເສດຖະກິດໂລກ, ສ້າງໂອກາດ ດ້ານການຕະຫຼາດ, ການລົງທຶນ ແລະ ການເຕີບໂຕຫຼາຍ ກວ່າເກົ່າ.

ໂດຍປະເຊີນກັບຄວາມສ່ຽງ ແລະ ສິ່ງທ້າທາຍ ຕ່າງໆຂອງເສດຖະກິດໂລກ, ຈີນຍິນດີຕ້ອນຮັບບັນດາ ປະເທດໃນໂລກນຳໃຊ້ໂອກາດພັດທະນາຂອງຈີນ, ຊົມໃຊ້ ໂອກາດ ແລະ ພັດທະນາພ້ອມກັນ. ພາຍໃຕ້ສະພາບການ ທີ່ປະເທດຝ່າຍຕາເວັນຕົກທີ່ພັດທະນາແລ້ວບໍ່ມີວິທີຫຼາຍ ປານໃດໃນການຊຸກຍູ້ການເຕີບໂຕດ້ານເສດຖະກິດນັ້ນ, ການລົງເລິກການປະຕິຮູບຢ່າງຮອບດ້ານຂອງຈີນຈະ ເພີ່ມກຳລັງທາງບວກໃຫ້ແກ່ການຟື້ນຕົວຄືນໃໝ່ ແລະ ການເຕີບໂຕຢ່າງໝັ້ນທ່ຽງຂອງເສດຖະກິດໂລກ.



ເວທີສາກົນຍີ່ຫໍ້ດັ□ຂອ□ຈີນສ່ອງແສງແວວວາວ
中国品牌世界舞台放异彩

图 / 新华社

# ຍິ່ງເປີດກວ້າງຍິ່ງປະຕິຮູບ ຍິ່ງປະຕິຮູບຍິ່ງເປີດກວ້າງ

## 越开放越改革 越改革越开放

中国的开放已经经历了 30 多年的历程。在层出不穷的“深圳奇迹”背后，除了开放带来的巨大发展成就，同样不容忽视的是开放带来的“倒逼改革”。这种“倒逼”，说到底是一种反向的促进作用。全面深化改革的今天，中国许多地方正在进行这样的实践。

ຈາກນະຄອນເສິ່ນເຈີ້ນຮອດເຂດການຄ້າເສລີຊຽງໄຮ້,ການເປີດປະຕູສູ່ພາຍນອກຂອງຈີນໄດ້ຜ່ານຂະບວນການ 30 ກວ່າປີແລ້ວ.ຢູ່ເບື້ອງຫຼັງທີ່ໄດ້ຮັບຜົນສຳເລັດທີ່ອັດສະຈັນຢູ່ເສິ່ນເຈີ້ນມາໂດຍຕະຫລອດນັ້ນ,ນອກຈາກໝາກຜົນແຫ່ງການພັດທະນາຢ່າງຫຼວງຫຼາຍທີ່ໄດ້ມາຈາກການເປີດປະຕູສູ່ພາຍນອກແລ້ວ,ສິ່ງທີ່ເບິ່ງຂ້າມບໍ່ໄດ້ນັ້ນແມ່ນການເປີດປະຕູສູ່ພາຍນອກຮຽກຮ້ອງໃຫ້ດຳເນີນການປະຕິຮູບລົງສູ່ລວງເລິກຕື່ມອີກ.

ການເປີດປະຕູສູ່ພາຍນອກ,ໄດ້ຂະຫຍາຍຈາກແຄມທະເລໄປສູ່ຮອບດ້ານຂອງເຂດແຜ່ນດິນໃຫຍ່ຈີນ

ເດືອນ ກັນຍາ ປີ 2013,ເຂດການຄ້າເສລີຈີນ(ຊຽງໄຮ້)ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການ.ຊຽງໄຮ້ມີຄວາມໝາຍອັນສຳຄັນຕໍ່ການເປີດປະຕູສູ່ພາຍນອກຂອງຈີນ.ຈາກ“ຄຸ້ມສິນຄ້າຕ່າງປະເທດ”ໃນເມື່ອກ່ອນຮອດເຂດໃໝ່ພູຕົ່ງທີ່ນຳໜ້າໃນກະແສເຂດໃໝ່ລະດັບຊາດຂອງຈີນ,ໃນໜຶ່ງສະຕະວັດຜ່ານມາ,ຊຽງໄຮ້ເປັນປ່ອງຢ້ຽມ,ເປັນແວ່ນແຍງທັງເປັນແບບຢ່າງອັນໜຶ່ງໃນການເປີດປະຕູສູ່ພາຍນອກຂອງຈີນ.



ເຮືອນຢູ່ຂອງປະຊາຊົນທີ່ເປັນລະບຽບຮຽບຮ້ອຍຄຸ້ມບ້ານທີ່ຈັດສັນກອມລວມຂອ□ປະຊາຊົນທີ່ຖືກຍົກຍ້າຍບ້ານກາວທຸບາຕາແສງຢາງເຫີເມືອງຊີຊຽງນະຄອນຫານຈົງແຂວງສານຊີ
陕西省汉中市西乡县杨河镇高土坝移民搬迁集中安置社区整齐的民居





ເຊີນເຈີນໄດ້ເລັ່ງລັດການປະດິດສ້າງການທະນາຄານຊຽນໄຫເພື່ອຊຸກຍູ້ເສດຖະກິດຫັນປ່ຽນຮູບແບບຍົກລະດັບ
深圳加快推动前海金融创新 促进经济转型升级

ສຳລັບຊຽງໄຮ້ໃນປະຈຸບັນນີ້,ກໍ່ແມ່ນຍ້ອນໄດ້ປະຕິບັດມາດຕະການປະຕິຮູບທີ່ຕິດແທດຕົວຈິງເປັນຕົ້ນແມ່ນລະບອບບັນຊີລາຍຊື່ຂໍ້ຈຳກັດ,ນະໂຍບາຍເອື້ອອຳນວຍພົນລະເມືອງປະເທດຕົນເອງກ່ອນອະນຸຍາດໃຫ້ນັກທຸລະກິດເຂົ້າມາລົງທຶນ ແລະ “ຊຽງໄຮ້ກັບຮົງກົງເຊື່ອມຈອດກັນ”,ໃຫ້ເປັນທິດນຳທາງການປະຕິຮູບຂອງຈີນໃນອະນາຄົດ.ເພາະວ່າຈຸດປະສົງແຫ່ງການສ້າງຕັ້ງເຂດການຄ້າເສລີຊຽງໄຮ້,ກໍ່ແມ່ນເພື່ອຊອກຄົ້ນທາງອອກສຳລັບການປະຕິຮູບຂອງທົ່ວປະເທດຈີນ,ຊອກຫາບົດຮຽນທີ່ສາມາດເຜີຍແຜ່ຢ່າງກວ້າງຂວາງໄດ້.

ບົດບາດແບບຢ່າງກະຕຸກຊຸກຍູ້ຂອງຊຽງໄຮ້ໄດ້ສະແດງອອກມາແລ້ວ

ນະຄອນຊິ່ງຕາວຂອງແຂວງຊ່ານຕົ່ງກໍ່ແມ່ນຕົວເມືອງແຄມທະເລເຊັ່ນກັນ,ມີເສດຖະກິດແບບເປີດປະຕູສູ່ພາຍນອກ,ເພື່ອສະເໜີໃຫ້ສ້າງເປັນເຂດການຄ້າເສລີໃຫ້ໄດ້ໂດຍໄວ,ຊິ່ງຕາວໄດ້ໃຊ້ການເປີດປະຕູສູ່ພາຍນອກກະຕຸກຊຸກຍູ້ການປະຕິຮູບຢູ່ຫຼາຍທ້ອງຖິ່ນແລ້ວ.

ທຳອິດ,ຊິ່ງຕາວໄດ້ກຳແໜ້ນໂອກາດຍຸດທະສາດຂອງການສ້າງຕັ້ງເຂດການຄ້າເສລີຈີນ,ຍີ່ປຸ່ນ ແລະ ສ.ເກົາຫຼີໃນໂຄງປະກອບເຂດການຄ້າເສລີດັ່ງກ່າວ,ເຈຕະນາຍຸດທະສາດອັນໜຶ່ງຂອງຊິ່ງຕາວກໍ່ແມ່ນພັດທະນາຂະແໜງການບໍລິການສາທາລະນະ.ສະນັ້ນ,ຊິ່ງຕາວໄດ້ເລີ່ມຄົ້ນຄວ້ານະໂຍບາຍຢູ່ບ່ອນທົດລອງເປີດປະຕູສູ່ພາຍນອກໃນຂົງເຂດການທະນາຄານ,ປະກັນໄພ,ຫຼັກຊັບ,ຈໍລະຈອນສິນຄ້າ ແລະ ອື່ນໆ,ພ້ອມທັງຊອກຄົ້ນສ້າງສູນຄິດໄລ່ບັນຊີດ້ວຍເງິນວອນສ.ເກົາຫຼີ ແລະ ເງິນເຢນຍີ່ປຸ່ນ,ວາງແຜນສ້າງໃຫ້ເປັນສູນກາງທະນາຄານຕ່າງປະ

ເທດທີ່ອ່າຍໜ້າສູ່ຍີ່ປຸ່ນ ແລະ ສ.ເກົາຫຼີ.

ນະຄອນຈຸງກິງເປັນຕົວເມືອງທີ່ຕັ້ງຢູ່ພາກຕາເວັນຕົກຂອງຈີນ ແລະ ຢູ່ໃນຈຸດເຊື່ອມຈອດກັນລະຫວ່າງເຂດເສດຖະກິດ"ແຖບໜຶ່ງເສັ້ນທາງໜຶ່ງ"ກັບ"ແຖບເສດຖະກິດແມ່ນ້ຳຢາງເຊກຽງ",ນຳໃຊ້ທາງລົດໄຟຈຸງກິງ-ເຂດຊິ່ນຈ່ຽງ-ເອີຣົບເພື່ອເປີດເສັ້ນທາງໄປສູ່ພາກຕາເວັນຕົກ ແລະ ຕ່າງປະເທດ.ເພື່ອເຮັດໃຫ້ການຄ້າຕາມທາງລົດໄຟຈຸງກິງ-ເຂດຊິ່ນຈ່ຽງ-ເອີຣົບດຳເນີນໄປຢ່າງສະດວກສະບາຍກວ່າເກົ່າ,ລະບົບແຈ້ງດ່ານຂອງດ່ານພາສີຈຸງກິງໄດ້ດຳເນີນການປະຕິຮູບ.ປະຈຸບັນນີ້,ໃຊ້ເວລາພຽງແຕ່ເຄິ່ງຊົ່ວໂມງເທົ່ານັ້ນ,ຕູ້ຄອນເທັນເນີບັນທຸກສິນຄ້າທີ່ຂົນສົ່ງຕາມທາງລົດໄຟສາຍນີ້ກໍ່ສາມາດສຳເລັດການແຈ້ງດ່ານ ແລະ ຜ່ານການກວດກາຢູ່ບ່ອນນີ້ແລ້ວ,ກໍ່ສາມາດປ່ອຍໄປເລີຍຢູ່ 6 ປະເທດຕາມທາງລົດໄຟສາຍນີ້.

ປີ 2012,ເຂດທົດລອງເສດຖະກິດແບບເປີດປະຕູເຂດໃນນິງເຊັ່ຍໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນ,ປະຈຸບັນ,ໄດ້ຖອດຖອນບົດຮຽນນຳລະບອບທີ່ປະດິດສ້າງໃໝ່ 13 ຢ່າງຂອງເຂດການຄ້າເສລີຊຽງໄຮ້.ຢູ່ເຂດປອດພາສີສັງລວມຢິນຊ່ວນ,ໄດ້ປະຕິບັດຮູບການຜ່ານດ່ານທີ່"ແຈ້ງເຄື່ອງແຕ່ເທື່ອດຽວ,ກວດກາແຕ່ເທື່ອດຽວ ແລະ ອະນຸຍາດໃຫ້ຜ່ານດ່ານໃນເທື່ອດຽວ",ພ້ອມທັງສ້າງເຂດແບບຢ່າງທີ່ດີໃນການຜ່ານດ່ານເພື່ອສ້າງຄວາມສະດວກໃຫ້ແກ່ການລົງທຶນຕໍ່ຕ່າງປະເທດ.

ການຊຸກຍູ້ການເປີດປະຕູສູ່ພາຍນອກ:ການປະຕິວັດດ້ານສິດອຳນາດ ແລະ ຈິດສຳນຶກ

ໃນກະແສທີ່ການເປີດປະຕູສູ່ພາຍນອກກະຕຸກຊຸກຍູ້ການປະຕິຮູບຮອບໃໝ່ນີ້,ການຫຼຸດຜ່ອນຂັ້ນຕອນການບໍລິຫານໃຫ້ກະທັດຮັດ ແລະ ການປ່ອຍສິດໃຫ້ຂັ້ນລຸ່ມນັ້ນເປັນວິທີການຮ່ວມກັນ.ບົດບາດແບບຢ່າງຂອງຊຽງໄຮ້ພວມພົ້ນເດັ່ນຂຶ້ນ.

ໃນທ້າຍເດືອນ ກໍລະກົດ ປີ 2014 ນີ້,ແຂວງຫູເປີຍປະກາດວ່າ,ຈະ"ຮ່ຳຮຽນ ແລະ ຖອດຖອນບົດຮຽນນຳເຂດການຄ້າເສລີຊຽງໄຮ້,ລົງມືປະຕິບັດວຽກງານທົດລອງ",ຈັດເຂດໄຮເທັກຕົ່ງຫູຂອງແຂວງຫູເປີຍເປັນ"ເຂດໃຈກາງຂອງການທົດລອງ".

ຫຼັງຈາກນັ້ນບໍ່ເທົ່າໃດມື້,ບາງເຂດຂອງນະຄອນເສິງຕູ່ກໍ່ປະກາດວ່າ,ຈະຮຽນນຳນະໂຍບາຍບໍລິການຕິດຕາມຄຸ້ມຄອງຂອງຊຽງໄຮ້ ແລະ ຈະເປີດກວ້າງໄປສູ່ເຂດຕິດຕາມຄຸ້ມຄອງພິເສດອື່ນໆຂອງດ່ານພາສີໃນເວລາເໝາະສົມ.

ສຳລັບລະບອບບັນຊີລາຍຊື່ຂໍ້ຈຳກັດທີ່ໄດ້ຮັບຄວາມສົນໃຈຫຼາຍທີ່ສຸດຂອງເຂດການຄ້າເສລີຊຽງໄຮ້ນັ້ນ,ປະຈຸບັນໄດ້ເລີ່ມເຜີຍແຜ່ຢູ່ທົ່ວປະເທດ.ເດືອນ ເມສາ ແລະ ເດືອນ ພຶດສະພາ ປີ 2014,ຄະນະກຳມະການພັດທະນາ ແລະ ປະຕິຮູບແຫ່ງລັດໄດ້ປະກາດ"ວິທີພິຈາລະນາກວດກາ ແລະ ຄຸ້ມຄອງສຳເນົາໂຄງການລົງທຶນຢູ່ຕ່າງປະເທດ" ແລະ "ພິຈາລະນາກວດກາ ແລະ ຄຸ້ມຄອງສຳເນົາໂຄງການລົງທຶນຂອງນັກທຸລະກິດຕ່າງປະເທດ",ປະຕິບັດຮູບການຄຸ້ມຄອງທີ່ຮັກສາໄວ້ເປັນສຳເນົາທົ່ວໄປ ແລະ ພິຈາລະນາກວດກາໂດຍມີການຈຳກັດຕໍ່ໂຄງການລົງທຶນຂອງນັກທຸລະກິດຕ່າງປະເທດ ແລະ ໂຄງການລົງທຶນຢູ່ຕ່າງປະເທດ.ນັບແຕ່ວັນທີ 6 ຕຸລາ ເປັນຕົ້ນໄປ,ວິສາຫະກິດຈີນ 98% ໄປລົງທຶນຢູ່ຕ່າງປະເທດຈະບໍ່ຕ້ອງການພິຈາລະນາອະນຸມັດອີກແລ້ວ.

ພ້ອມກັນນັ້ນ,ໃນຖານະເປັນຜົນງານອັນສຳຄັນຂອງ





ເຂດພັດທະນາເສດຖະກິດນະຄອນອີລິນແຂວງຊານຊີ
陕西省榆林市经济开发区

ການປະຕິຮູບລະບຽບການລົງທະບຽນອຸດສາຫະກຳການຄ້າຂອງເຂດການຄ້າເສລີຊຽງໄຮ້,ລະບຽບການດ້ານທຶນລົງທະບຽນບໍລິສັດຫັນຈາກ"ຂາຫຸ້ນອອກທຶນຕົວຈິງ"ມາເປັນ"ຂາຫຸ້ນເຈຕະນາອອກທຶນຕາມໂກຕາ"ນັ້ນກໍ່ໄດ້ປະຕິບັດຢ່າງຮອບດ້ານຢູ່ທົ່ວປະເທດ.

ລວງເລິກຂອງການປະຕິຮູບ:ຕາມຂັ້ນຕອນປະຕິຮູບທີ່ລົງສູ່ລວງເລິກເປັນກ້າວໆ

ການເປີດປະຕູສູ່ພາຍນອກກະຕຸກຊຸກຍູ້ປະຕິຮູບ,ທຳອິດແມ່ນຢູ່ໃນລະດັບການປະຕິບັດຕົວຈິງ.

ວັນທີ 31 ກໍລະກົດ ປີ 2014,ຢູ່ຄຸ້ມການຄ້າເຈຍຟ້າງເປີ່ຍທີ່ຈະເລີນທີ່ສຸດຂອງນະຄອນຈຸງກິງ,ອົງການໜຶ່ງທີ່ມີຊື່ວ່າ"ເວທີເພີ່ມເຕີມຂອງສູນຄ້າຂາຍສິນຄ້າປອດພາສີ"ໄດ້ເລີ່ມເປີດບໍລິການຢ່າງເປັນທາງການ.ນີ້ເປັນສູນຄ້າຂາຍສິນຄ້າປອດພາສີແຫ່ງທຳອິດນອກຈາກເຂດປອດພາສີຫຼັງຈາກເຂດການຄ້າເສລີຊຽງໄຮ້.

ເວົ້າໂດຍຫຍໍ້ແລ້ວ,ນີ້ເປັນສະຖານທີ່ທີ່ຜູ້ບໍລິໂພກສາມາດຈັດຊື້ສິນຄ້າຕ່າງປະເທດໂດຍກົງ,ສິນຄ້າທີ່ນຳເຂົ້າຈາກຕ່າງປະເທດຈະສະສົມໄວ້ໃນສາງຢູ່ເຂດທ່າກຳປັ່ນປອດພາສີ,ຫຼັງຈາກນັ້ນໃຫ້ສູນຄ້າຂາຍຈັດສົ່ງສູ່ເວທີດັ່ງກ່າວ.ໃນຂັ້ນຕອນນີ້,ຈະບໍ່ຕ້ອງເສຍພາສີນຳເຂົ້າ.ຫຼັງຈາກຜູ້ບໍລິໂພກຊື້ສິນຄ້າແລ້ວ,ຈະຈ່າຍເງິນໂດຍຜ່ານລະບົບຂໍ້ມູນຂ່າວສານ,ຫຼັງຈາກນັ້ນຈະໃຫ້ອົງການທຸລະກິດສິນຄ້າເຮັດເອກະສານແຈ້ງດ່ານ ແລະ ເສຍພາສີ.ເຖິງວ່າກໍ່ຕ້ອງເສຍພາສີເຊັ່ນກັນ,ແຕ່ຍ້ອນມີນະໂຍບາຍພິເສດ,ລາຄາສິນຄ້າຢູ່ບ່ອນນີ້ຈະຖືກກວ່າລາຄາໃນຕະຫຼາດປະມານ 10%-50%.

文 / 楚 然 图 /CFP

# ດ່ານອາກາດນານນິງກວາງຊີ

### 广西南宁航空口岸

**南宁航空口岸位于广西南宁市南面 32 公里的吴圩机场。近年来，随着中国—东盟自由贸易区的推进，桂台、桂港、桂澳经济合作的不断深入，南宁口岸出入境客流量也大幅增长。目前，南宁已开通了直航韩国、泰国、柬埔寨、新加坡及港澳台等国家（地区）的 27 条定期和不定期客运航线，每周出入境航班 140 余架次。**

ດ່ານອາກາດນານນິງກວາງຊີຕັ້ງຢູ່ສະໜາມບິນອູຊູຍທີ່ຫ່າງຈາກເທສະບານນະຄອນນານນິງເຂດກວາງຊີໄປທາງທິດໃຕ້ 32 ກິໂລແມັດ.ໃນຊຸມປີມໍ່ໆມານີ້,ຄຽງຄູ່ກັບການພັດທະນາຂອງເຂດການຄ້າເສລີຈີນອາຊຽນ,ການຮ່ວມມືດ້ານເສດຖະກິດລະຫວ່າງເຂດກວາງຊີກັບໄຕ້ຫວັນ,ຮົງກົງ ແລະ ມາກາວລົງສູ່ລວງເລິກຢ່າງບໍ່ຢຸດຢັ້ງ,ຈຳນວນຜູ້ເຂົ້າອອກເມືອງຜ່ານດ່ານນານນິງກໍ່ເພີ່ມຂຶ້ນຢ່າງຫຼວງຫຼາຍ.ປະຈຸບັນ,ນານນິງໄດ້ເປີດເສັ້ນທາງການບິນປະຈຳ ແລະ ບໍ່ເປັນປະຈຳທັງໝົດ 27 ສາຍໄປສູ່ປະເທດ ແລະ ເຂດແຄວ້ນຕ່າງໆ,ເຊັ່ນ,ສ.ເກົາຫຼີ,ໄທ,ກຳປູເຈຍ,ສິງກະໂປ,ຮົງກົງ,ມາກາວ ແລະ ໄຕ້ຫວັນຈີນເປັນຕົ້ນ,ແຕ່ລະອາທິດມີຖ້ຽວບິນເຂົ້າອອກເມືອງ 140 ກວ່າຖ້ຽວ.

ເດືອນ ພຶດສະພາ ປີ 2006,ໂຄງການອາຄານກອດກາຂອງດ່ານອາກາດນານນິງເລີ່ມລົງມືກໍ່ສ້າງ.ອາຄານກວດກາທ່າອາກາດນານນິງແມ່ນໂຄງການທີ່ລັດຖະບານສູນກາງ ແລະ ອົງການປົກຄອງເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີຮ່ວມກັນໃຊ້ງົບປະມານສ້າງຂຶ້ນພາຍໃຕ້ພູມຫຼັງທີ່ນະຄອນນານນິງ,ເທສະບານເຂດກວາງຊີເປີດປະຕູສູ່ພາຍນອກຢ່າງກວ້າງຂວາງກວ່າເກົ່າ ແລະ ງານວາງສະແດງສິນຄ້າຈີນອາຊຽນປະຈຳຢູ່ນະຄອນນານນິງຢ່າງຖາວອນ,ໂຄງການດັ່ງກ່າວມີເນື້ອທີ່ປະມານ 3 ເຮັກຕາ,ໃຊ້ງົບປະມານທັງໝົດ 8 ລ້ານຢວນ,ເນື້ອທີ່ສິ່ງກໍ່ສ້າງ 3000 ຕາແມັດ.ການສ້າງສຳເລັດຂອງໂຄງການອາຄານກວດກາຂອງດ່ານອາກາດນານນິງກາຍເປັນຂີດໝາຍຂອງຕົວເມືອງດ່ານອອກເຂົ້າເມືອງແບບທັນສະໄໝ,ໄດ້ເສີມຂະຫຍາຍບົດບາດອັນສຳຄັນໃນການບູລະນະສະມັດຖະພາບຂອງສະໜາມບິນສາກົນນານນິງ,ຍົກສູງຄວາມໄວດ້ານການກວດກາການຜ່ານດ່ານຂອງຄົນ ແລະ ສິນຄ້າ.

ໂດຍປະເຊີນກັບທ່າອ່ຽງທີ່ຈຳນວນຄົນຜູ້ເຂົ້າອອກເມືອງເພີ່ມຂຶ້ນຢ່າງຫຼວງຫຼາຍ,ສະຖານີກວດກາການຜ່ານດ່ານນານນິງຈັດເອົາການບໍລິການກວດກາຜ່ານດ່ານເຂົ້າໃນສະພາບລວມແຫ່ງການພັດທະນາເສດຖະກິດສັງຄົມຂອງນານນິງ,ໃຊ້ຮູບການຕ່າງໆ,ເຊັ່ນ,ປັບປຸງອົງການບໍລິການໃຫ້ດີຂຶ້ນ,ເປີດທາງຜ່ານສີຂຽວ,ຍົກສູງປະສິດທິພາບແຫ່ງການປະຕິບັດກົດໝາຍ ແລະ ດຳເນີນຄະດີ ແລະ ອື່ນໆ,ປະຢັດເວລາຜ່ານດ່ານຂອງຜູ້ໂດຍສານໃຫ້ໜ້ອຍລົງເທົ່າທີ່ຈະໜ້ອຍໄດ້ ແລະ ໃຊ້ມາດຕະການອຳນວຍຄວາມສະດວກຕ່າງໆ,ຕົວຢ່າງວ່າ,ສ້າງສະພາບແວດລ້ອມທີ່ມີຄຸນນະພາບດີ,ປະສິດທິພາບສູງ ແລະ ສະດວກວ່ອງໄວຫຼາຍກວ່າເກົ່າ,ເພີ່ມຕູ້ໃຫ້ຄຳປຶກສາກ່ຽວກັບການຜ່ານດ່ານຢູ່ສະຖານທີ່ກວດກາ,ເປີດທາງຜ່ານສຳລັບຄະນະ,ເພື່ອຮັບປະກັນໃຫ້ຜູ້ໂດຍສານຜ່ານດ່ານຢ່າງສະດວກໃນໄລຍະຄົນຫຼາຍທີ່ສຸດ.ພະຍາຍາມພັດທະນາການບໍລິການກວດກາຜ່ານດ່ານທີ່ດີເດັ່ນ.ປະດິດສ້າງຍີ່ຫໍ້ດ້ານບໍລິການທີ່ເປັນໜຶ່ງ.



图/CFP

# ກຸ່ມບໍລິສັດລຸ້ຍຕີ້ຈີນສ້າງທຸລະກິດຂະໜາດໃຫຍ່ຢູ່ຕ່າງປະເທດ

**绿地海外开讲 "中国故事"**

**绿地集团是澳洲近两年最受关注的外资投资方，在四大洲、九国、十二城市落子投资，向全美最大开发商迈进。**

ກຸ່ມບໍລິສັດລຸ້ຍຕີ້ແມ່ນຜູ້ລົງທຶນຕ່າງປະເທດທີ່ໄດ້ຮັບຄວາມເອົາໃຈໃສ່ຫຼາຍທີ່ສຸດຢູ່ອົສຕຼາລີ,ໄດ້ລົງທຶນຢູ່ 4 ທະວີບ,9 ປະເທດ,12 ຕົວເມືອງ ແລະ ພວມກ້າວໄປເປັນຜູ້ລົງທຶນພັດທະນາຂະໜາດໃຫຍ່ທີ່ສຸດຢູ່ອາເມລິກາ.

ວັນທີ 17 ພະຈິກ ປີ 2014,ໃນກອງປະຊຸມໂຕະມົນ CEO ວົງການອຸດສາຫະກຳການຄ້າຈີນອົສຕຼາລີ,ທ່ານ ຈ່າງອີ້ລຽງ,ປະທານກຸ່ມບໍລິສັດທັງເປັນ CEO ຂອງກຸ່ມບໍລິສັດລຸ້ຍຕີ້ທີ່ຢູ່ໃນອັນດັບ 268 ຂອງ 500 ບໍລິສັດເຂັ້ມແຂງຂອງໂລກໄດ້ແຈ້ງສະພາບການລົງທຶນ ແລະ ການພັດທະນາຂອງກຸ່ມບໍລິສັດລຸ້ຍຕີ້ຢູ່ຕ່າງປະເທດ,ຄື:ໃນຂອບເຂດທົ່ວໂລກ,ເນື້ອທີ່ອະສັງຫາລິມະຊັບທີ່ກຳລັງກໍ່ສ້າງຢູ່ຫຼາຍກວ່າ 75 ລ້ານຕາແມັດ,ເງິນລົງທຶນທັງໝົດຫຼາຍກວ່າ 60 ຕື້ໂດລາ(ຍອດມູນຄ່າການລົງທຶນຢູ່ໂຄງການຕ່າງປະເທດຫຼາຍກວ່າ 20 ຕື້ໂດລາ),ມີໂຮງແຮມຫຼາຍກວ່າ 100 ແຫ່ງ,ປີນີ້ຍອດມູນຄ່າຈຳໜ່າຍຈາກກິດຈະການຕ່າງປະເທດຈະມີເຖິງ 20 ຕື້ໂດລາ.




ໃນເດືອນ ພະຈິກ ປີ 2014 ເຊັ່ນດຽວກັນ,ເຈົ້າຄອງນະຄອນຟີເຣັນເຊຂອງອີຕາລີ,ເຈົ້າຄອງນະຄອນຫຼວງເຊອຸນຂອງສ.ເກົາຫຼີໄດ້ໄປຢ້ຽມຢາມສຳນັກງານໃຫຍ່ຂອງກຸ່ມບໍລິສັດລຸ້ຍຕີ້.ໃນເວລາທີ່ເຈົ້າແຂວງແຂວງອິນທາຣິໂອຂອງການາດານຳພາຄະນະຜູ້ແທນເສດຖະກິດການຄ້າໄປຢ້ຽມຢາມນະຄອນຊຽງໄຮ້,ກໍ່ເຊີນຊວນກຸ່ມບໍລິສັດລຸ້ຍຕີ້ໄປລົງທຶນຢູ່ແຂວງນັ້ນ.ບໍ່ຕ້ອງສົງໄສວ່າ,ກຸ່ມບໍລິສັດລຸ້ຍຕີ້ພວມກາຍເປັນຕົວແທນຂອງວິສາຫະກິດຈີນຢູ່ກາງເວທີສາກົນ.


ຫຼັກໝາຍທາດຄູ່ອັນດັບທີ 1 ໃນພາກກາງຂອງຈີນເຊິ່ງແມ່ນກຸ່ມບໍລິສັດແດນຂຽວລົງທຶນປະດິດສ້າງຂຶ້ນ
由绿地集团投资打造的中国中部第一双子塔地标

ຕາມສະຖິຕິຫຼ້າສຸດຂອງກະຊວງການຄ້າຈີນ,ໃນ 9 ເດືອນທຳອິດປີນີ້,ມູນຄ່າການລົງທຶນຂອງຈີນຕໍ່ຕ່າງປະເທດໂດຍກົງທີ່ບໍ່ແມ່ນປະເພດການທະນາຄານນັ້ນແມ່ນ 74,96 ຕື້ໂດລາ,ເພີ່ມຂຶ້ນ 21,6% ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2013,ຄາດວ່າທົ່ວປີຈະມີເຖິງປະມານ 120 ຕື້ໂດລາ.ປີນີ້ຈີນອາດຈະກາຍເປັນປະເທດທີ່ມີມູນຄ່າລົງທຶນຕໍ່ຕ່າງປະເທດຫຼາຍກວ່າມູນຄ່າການລົງທຶນຈາກຕ່າງປະເທດເປັນຄັ້ງທຳອິດ.ໃນ 2 ປີຜ່ານມາ,ຕະຫຼາດທີ່ຈະເລີນໃໝ່ໄດ້ເປີດ"ກະແສກວ້ານຊື້ບໍລິສັດຄັ້ງທີ 6",ເຊິ່ງສ້າງໂອກາດໃໝ່ໃຫ້ແກ່ວິສາຫະກິດຈີນຈັດຊື້ບໍລິສັດຢູ່ຕ່າງປະເທດ.

ທ່ານ ຈ່າງອີ້ລຽງ ກ່າວວ່າ,"ເມື່ອທວນຄືນເຖິງຂະບວນການເຊື່ອມໂຍງກັບສາກົນຂອງກຸ່ມບໍລິສັດລຸ້ຍຕີ້ໃນ 2 ປີຜ່ານມາ,ຫຼາຍຄົນແມ່ນໄດ້ເຫັນເຖິງການພັດທະນາຢ່າງວ່ອງໄວ,ແຕ່ທີ່ຈິງແລ້ວ,ພວກຂ້າພະເຈົ້າຮູ້ສຶກວ່າ,ສິ່ງທີ່ມີຄຸນຄ່າຫຼາຍກວ່າຜົນກຳໄລນັ້ນແມ່ນໄດ້ຊອກຄົ້ນຮູບການພັດທະນາທີ່ສົມບູນກວ່າເກົ່າ ແລະ ວິຖີເຊື່ອມໂຍງເຂົ້າກັບຕະຫຼາດສາກົນ.ສິ່ງທີ່ສຳຄັນກວ່າເກົ່າແມ່ນ,ກົງກັນຂ້າມແລ້ວ,ພຶດຕິກຳທີ່ເຊື່ອມໂຍງກັບສາກົນກໍ່ໄດ້ກະຕຸກຊຸກຍູ້ໃຫ້ວິສາຫະກິດເຕີບໂຕຢ່າງຮອບດ້ານ."ທ່ານກ່າວວ່າ,ທຶນຮອນຈີນ ແລະ ວິສາຫະກິດຈີນພວມມີເຈຕະນາເຂົ້າສູ່ຕະຫຼາດທົ່ວໂລກໃນລະດັບສູງກວ່າເກົ່າ.

ຢູ່ທະວີບອາຊີ,ສື່ມວນຊົນສ.ເກົາຫຼີຍ້ອງຍໍວ່າ,ກຸ່ມບໍລິສັດລຸ້ຍຕີ້ແມ່ນວິສາຫະກິດທີ່ມີຄວາມໜ້າເຊື່ອຖືດ້ານການຕະຫຼາດສູງທີ່ສຸດ,ຂະໜາດໂຄງການພັດທະນາໃຫຍ່ທີ່ສຸດ ແລະ ໄດ້ຮັບຜົນສຳເລັດຫຼາຍທີ່ສຸດໃນວິສາຫະກິດ

ຈີນທີ່ລົງທຶນຢູ່ສ.ເກົາຫຼີ;ຢູ່ທະວີບໂອເຊອານີ, ໂຄງການຂອງບໍລິສັດລຸ້ຍຕີ້ພໍເປີດການຈຳໜ່າຍກໍ່ໄດ້ຮັບການຈັບຈອງໄປໝົດ;ຢູ່ອາເມລິກາເໜືອ, ໂຄງການລອສແອງເຈີລີສໄລຍະທີໜຶ່ງກ່ອນການຈຳໜ່າຍຢ່າງເປັນທາງການກໍ່ໄດ້ມີລູກຄ້າ 500 ກວ່າກຸ່ມ,ໃນນັ້ນ 80% ແມ່ນພົນລະເມືອງທ້ອງຖິ່ນແຫ່ງນັ້ນ;ຢູ່ເອີຣົບ, ໂຄງການຫໍແລນຂອງບໍລິສັດລຸ້ຍຕີ້ຢູ່ລອນດອນໄດ້ຈຳໜ່າຍຢູ່ຫຼາຍຕົວເມືອງຂອງທົ່ວໂລກ,ຫາກໍ່ເປີດການຈຳໜ່າຍກໍ່ຂາຍໄດ້ 525 ລ້ານປອນ.

ທ່ານ ຈ່າງອີ້ລຽງ ກ່າວວ່າ,ຕັ້ງແຕ່ການເລີ່ມຕົ້ນ, ຍຸດທະສາດເຊື່ອມໂຍງກັບສາກົນຂອງກຸ່ມບໍລິສັດລຸ້ຍຕີ້ກໍ່ແມ່ນ"ອະນຸຍາດໃຫ້ມີແຕ່ຜົນສຳເລັດເທົ່ານັ້ນ,ຫາກບໍ່ໃຫ້ປະລາໄຊ". ໂດຍຢູ່ບົນພື້ນຖານແຫ່ງບົດຮຽນຂອງວິສາຫະກິດໃຫຍ່ຂອງຈີນທີ່ດຳເນີນທຸລະກິດຢູ່ຕ່າງປະເທດ ແລະ ຮູບການເກົ່າຂອງຂະແໜງການ,ພວກຂ້າພະເຈົ້າໄດ້ດຳເນີນການຂຸດຄົ້ນໂດຍສົ່ງເສີມບາງດ້ານ,ພ້ອມທັງປະລະກິດຈະການບາງດ້ານ,ຫວັງຢາກພິສູດດ້ວຍພຶດຕິກຳຕົວຈິງວ່າ,ທຶນຮອນຈີນ ແລະ ຍີ່ຫໍ້ຈີນມີຄວາມສາມາດເຊື່ອມໂຍງເຂົ້າສູ່ຕະຫຼາດສາກົນໄດ້.ທ່ານຍັງກ່າວວ່າ, ໃນການລົງທຶນຢູ່ຕ່າງປະເທດ,ລະບອບກຳມະສິດປະສົມຂອງກຸ່ມບໍລິສັດລຸ້ຍຕີ້ໄດ້ເສີມຂະຫຍາຍທ່າແຮງຢ່າງພົ້ນເດັ່ນ,ກົນໄກຕັດສິນທີ່ຄ່ອງແຄ້ວ ແລະ ມີປະສິດທິພາບສູງໄດ້ຍົກສູງປະສິດທິພາບແຫ່ງການລົງທຶນຢ່າງຫຼວງຫຼາຍ,ການຕັດສິນລວມໝູ່ທີ່ມີກຸ່ມຜົນປະໂຫຍດຫຼາຍເຄົ້າສາມາດປ້ອງກັນຄວາມສ່ຽງ ແລະ ຮັບປະກັນຜົນກຳໄລຢ່າງມີປະສິດທິຜົນ,ເຊິ່ງເປັນສິ່ງຮັບປະກັນອັນສຳຄັນທີ່ກຸ່ມບໍລິສັດລຸ້ຍຕີ້ສາມາດກຳແໜ້ນໂອກາດການລົງທຶນຢ່າງສຳເລັດຜົນ.







## ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈຳກັດ
## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈຳກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊຳລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສຳນັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຍີວູ, ເມືອງນານນີງ, ເມືອງພິງຊຽງ, ເມືອງຄຸນໝິງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່າວຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ຢູ່ນເປັນ 4 ມື້ ແລະ ສຳຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກຳໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຄຸດຄົ້ນແຮ່ທາດແລະອື່ນໆ.ທອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມາຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊື່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:

-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້
-ບໍລິການຂົນສົ່ງສົມທົບທາງທະເລ ແລະ ທາງບົກຈາກກວາງໂຈວຈີນຫາວຽງຈັນລາວໂດຍຜ່ານບາງກອກ
-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ

ໂທລະສັບຈີນ: 86 20 36517965
ໂທລະສັບລາວ: 020 98000013
ພາສາລາວ: 020 98209598
EMAIL: ocean@transgz.com
ເວບໄຊ:www.transgz.com



广州共成运输代理有限公司
中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门高度赞扬。

我司提供的服务项目：
——中国广州到老挝万象4天汽车快运
——中国广州经曼谷到万象的海陆联运服务
——老挝出口到中国等国家的物流服务

中国热线：86 20 36517965
老挝热线：020-98000013
老挝文： 020-28140016
EMAIL:ocean@transgz.com
网址：www.transgz.com



# ຟື້ນຟູເສັ້ນທາງສາຍໄໝໃຫ້ຈະເລີນຄືນ
# ເພີ່ມຄວາມຮັກແພງຈີນລາວໃຫ້ເລິກເຊິ່ງ

## 复兴丝绸路 深化中老情

2014 年 12 月 26 日，"2014 年复兴南方丝绸之路国际研讨会"在昆明举行，由香港大公报、云南省东南亚南亚经贸合作发展联合会共同主办，会议主题是"互联互通互信—复兴南方丝绸之路的机遇与挑战"。



ທ່ານນາງ ຫວາງອີໝິງ ປະທານບໍລິຫານງານສະຫະພັນພັດທະນາການຮ່ວມມືເສດຖະກິດການຄ້າອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີໃຕ້ແຂວງຢຸນນານມອບປຶ້ມຫນັງສືໃຫ້ຜູ້ແທນທີ່ຮ່ວມງານ
云南省东南亚南亚经贸合作发展联合会执行主席王义明（右）向与会代表赠书

ວັນທີ 26 ທັນວາ ປີ 2014,"ກອງປະຊຸມສໍາມະນາສາກົນກ່ຽວກັບການຟື້ນຟູເສັ້ນທາງສາຍໄໝພາກໃຕ້ໃຫ້ຈະເລີນຄືນສົກປີ 2014",ໄດ້ຈັດຂຶ້ນທີ່ຄຸນໝິງເຊິ່ງໜັງສືພິມຕາກົງປາວຮົງກົງ ແລະ ສະຫະພັນການພັດທະນາການຮ່ວມມືເສດຖະກິດການຄ້າອາຊີຕາເວັນອອກສ່ຽງໃຕ້,ອາຊີໃຕ້ຮ່ວມກັນເປັນເຈົ້າພາບ.ຫົວຂໍ້ຂອງກອງປະຊຸມຄື"ເຊື່ອມຈອດກັນ,ໄວ້ເນື້ອເຊື່ອໃຈກັນ-ກາລະໂອກາດ ແລະ ການທ້າທາຍໃນການຟື້ນຟູເສັ້ນທາງສາຍໄໝພາກໃຕ້ໃຫ້ຈະເລີນຄືນ".

ທ່ານນາງ ຫວາງອີໝິງ ປະທານສະຫະພັນການພັດທະນາການຮ່ວມມືເສດຖະກິດການຄ້າອາຊີຕາເວັນອອກສ່ຽງໃຕ້,ອາຊີໃຕ້,ທ່ານ ຊິນມິນ ຜູ້ອໍານວຍການໜັງສືພິມຕາກົງປາວຮົງກົງສາຂາຢຸນນານພ້ອມດ້ວຍຜູ້ແທນ ແລະ ນັກຊ່ຽວຊານປະເທດຕ່າງໆຖືກເຊີນມາຮ່ວມກອງປະຊຸມ ແລະ ຂຶ້ນປະກອບຄໍາຄິດຄໍາເຫັນ,ໄດ້ເນັ້ນໜັກເປັນເອກະສັນກັນວ່າ,ຍຸດທະສາດ"1 ແຖບ 1 ເສັ້ນທາງ" ແມ່ນຍຸດທະສາດຈີນທັງແມ່ນຍຸດທະສາດໂລກ;ແລະແມ່ນຍຸດທະສາດໃນປັດຈຸບັນນີ້,ກໍແມ່ນຍຸດທະສາດໃນອະນາຄົດ.ແຖບເສດຖະກິດເສັ້ນທາງສາຍໄໝພາກໃຕ້ກໍມີພື້ນຖານປະຫວັດສາດຢ່າງເລິກເຊິ່ງ,ດັ່ງນັ້ນ,ນັກຊ່ຽວຊານສະເໜີວ່າ,ລັດອາໄສເສັ້ນທາງສາຍໄໝພາກໃຕ້ດໍາເນີນການສ້າງສາແຖບເສດຖະກິດເສັ້ນທາງສາຍໄໝພາກໃຕ້ເສັ້ນໜຶ່ງທີ່ເຊື່ອມໂຍງທາງຂວາງກັບຊີອານ-ເຊີນຕູ-ຄຸນໝິງຈີນເຖິງອາຊີຕາເວັນອອກສ່ຽງໃຕ້,ອາຊີໃຕ້,ດ້ວຍເຫດນີ້,ຖືເອົາ"1 ແຖບ 1 ເສັ້ນທາງ"ເຊື່ອມໂຍງກັນຢ່າງມີອິນຊີ.ລົງເລິກການເຊື່ອມຈອດກັນກັບຢຸນນານ ແລະ ບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີໃຕ້,ບັນລຸເຖິງເສັ້ນທາງພັດທະນາໄດ້ຮັບຜົນປະໂຫຍດຮ່ວມກັນໃຫ້ປະກົດເປັນຈິງ.




ທ່ານ ພົນເອກ ຈັກຕີ ພັດທະນາພັນຮອ □ປະທານກອງທຶນພັດທະນາຊົນນະບົດປະເທດໄທຂຶ້ນກ່າວຄໍາປາໄສ
泰国城乡发展基金会副主席查迪·帕塔纳攀上将致辞


ທ່ານ ອູອັງເຈຍວຸ ກົງສຸນໃຫຍ່ມຽນມາປະຈໍາຄຸນໝິງຂຶ້ນກ່າວຄໍາປາໄສ
缅甸驻昆总领事吴·昂觉悟致辞

ທ່ານນາງ ອາດີນາ ມະຫາວົງ ປະທານບໍລິສັດໂທລະພາບ MV ລາວຕາງໜ້າຜູ້ແທນລາວທີ່ຮ່ວມປະຊຸມຂຶ້ນປະກອບຄໍາເຫັນ,ນາງໄດ້ນໍາເອົາຟີມຂ່າວສານຮີດຄອງປະເພນີລາວຕອນໜຶ່ງສາຍໃຫ້ຜູ້ແທນທີ່ຮ່ວມປະຊຸມເບິ່ງ,ເຮັດໃຫ້ບັນດາຜູ້ແທນເຂົ້າໃຈສະພາບການຂອງລາວ,ກໍາລັງບົ່ມຊ້ອນໃນການພັດທະນາຂອງລາວ ແລະ ສະພາບການການຮ່ວມມືລາວຈີນຢ່າງສັງເຂບ.ນາງຢືນຢູ່ໃນຖານະສື່ມວນຊົນຜູ້ໜຶ່ງ,ມີຄວາມມຸ່ງມາດປາຖະໜາຕໍ່ການຟື້ນຟູເສັ້ນທາງສາຍໄໝພາກໃຕ້ໃຫ້ຈະເລີນຄືນ ແລະ ພັດທະນາ.ນາງມີຄວາມຫວັງຢ່າງຍິ່ງວ່າ,ການຟື້ນຟູເສັ້ນທາງສາຍໄໝພາກໃຕ້ໃຫ້ຈະເລີນຄືນ,ບໍ່ພຽງແຕ່ຈະຕ້ອງເນັ້ນໜັກການຮ່ວມມືດ້ານເສດຖະກິດ ແລະ ໄດ້ຮັບຜົນປະໂຫຍດຮ່ວມກັນເທົ່ານັ້ນ,ກໍຈະຕ້ອງເນັ້ນໜັກຍິ່ງຂຶ້ນທາງດ້ານເຊື່ອມຈອດກັນລະຫວ່າງວັດທະນະທໍາ,ການສຶກສາ ແລະ ຂໍ້ມູນຂ່າວສານສື່ມວນຊົນ,ທີ່ເປັນຖານະຂົວຕໍ່ສື່ມວນຊົນທີ່ເຜີຍແຜ່ຂໍ້ມູນຂ່າວສານເຊື່ອມຈອດ



ສະຖານທີ່ຈັດງານສໍາມະນາ
研讨会现场



ທ່ານ ປ່ອງດອງ ຮອງກົງສຸນສະຖານກົງສຸນໃຫຍ່ລາວປະຈຳຄຸນໝິງ
老挝驻昆明总领馆副领事邦当



ກັນແລ້ວ,ຂໍ້ມູນຂ່າວສານລະຫວ່າງປະເທດພາກພື້ນຈຶ່ງຈະສາມາດເຊື່ອມຈອດກັນໂດຍໄວໄດ້.ຂໍ້ມູນຂ່າວສານເຊື່ອມໂຍງກັນແລ້ວເປັນສິ່ງສຳຄັນທີ່ສຸດຕໍ່ການເພີ່ມທະວີການຮ່ວມມືທຸກໆດ້ານ.

ໃນການສຳພາດຂ່າວນັ້ນ,ນາງ ອາດີນາ ເວົ້າດ້ວຍພາສາຈີນຢ່າງລ່ຽນໄຫລດີວ່າ,ຂ້າພະເຈົ້າເອງມັກຮັກປະເທດຈີນທີ່ສຸດ,ເຄີຍມາຈີນຕັ້ງຫຼາຍເທື່ອ,ໂດຍສະເພາະຢຸນນານ,ກໍໄດ້ສວຍໂອກາດຮຽນຮູ້ສະພາບການຂອງຊົນເຜົ່າ,ວັດທະນະທຳ ແລະ ການສ້າງສາຕົວເມືອງ ແລະ ອື່ນໆ.ນາງຍ້ອງຍໍສັນລະເສີນຢ່າງສູງຕໍ່ວາລະສານ《ຈຳປາ》ທີ່ມີບົດບາດອັນສຳຄັນໃນການເຊື່ອມຈອດກັນລະຫວ່າງລາວຈີນ ແລະ ສະແດງຄວາມມັກຮັກຕໍ່ວາລະສານ《ຈຳປາ》.ນາງເຊື່ອແນ່ວ່າ,ໃນຄວາມຄືບໜ້າການຟື້ນຟູເສັ້ນທາງສາຍໄໝພາກໃຕ້ໃຫ້ຈະເລີນຄືນນັ້ນ,ບໍ່ພຽງແຕ່ລັດຖະບານລາວຈີນທັງສອງປະເທດຈະຕ້ອງລົງເລິກການຮ່ວມມືທາງດ້ານເສດຖະກິດການຄ້າ,ວັດທະນະທຳ,ການສຶກສາ,ຂໍ້ມູນຂ່າວສານ ແລະ ອື່ນໆເທົ່ານັ້ນ,ພ້ອມກັນນັ້ນ,ກໍຈະຕ້ອງເພີ່ມທະວີລົງເລິກມິດຕະພາບໄມຕີຈິດລະຫວ່າງປະຊາຊົນລາວຈີນອີກດ້ວຍ.



ສະຖານທີ່ຈັດງານສຳມະນາ
研讨会现场





图/中新社

# ປີແລກປ່ຽນວັດທະນະທຳຈີນ–ອາຊຽນ 2014 ໄດ້ຮັບໝາກຜົນຢ່າງຫລວງຫລາຍ

## 2014 中国—东盟文化交流年硕果累累

2014 年 12 月初，“21 世纪海上丝绸之路艺术之旅——中国—东盟文化交流年书画大展”在印度尼西亚首都雅加达举办，中国和东盟成员国的近 200 名艺术家携 300 多幅作品参展，形象生动地展示了他们对建设 21 世纪海上丝绸之路，加强中国与东盟文化交流的热切期待。而这仅仅是文化交流年开幕以来，双方丰富多彩活动的一个缩影。截至 2014 年 11 月，双方在文化交流年框架下举办了近 120 项活动，覆盖十余个领域。

ຕົ້ນເດືອນ ທັນວາ ປີ 2014,“ການເດີນທາງຂອງສິລະປະກຳຕາມເສັ້ນທາງສາຍໄໝເທິງທະເລສະຕະວັດທີ 21-ງານວາງສະແດງໜັງສືຂຽນງາມ ແລະ ຮູບແຕ້ມຂອງປີແລກປ່ຽນວັດທະນະທຳຈີນ-ອາຊຽນ”ໄດ້ຈັດຂຶ້ນຢູ່ນະຄອນຫຼວງຈາກາຕາຂອງອິນໂດເນເຊຍ,ນັກສິລະປິນເກືອບ 200 ທ່ານຂອງຈີນ ແລະ ປະເທດອາຊຽນໄດ້ນຳເອົາບົດແຕ່ງ 300 ກວ່າສະບັບເຂົ້າຮ່ວມງານວາງ



ງານວາງສະແດງໝາກຜົນໃນການສຶກສາສິລະປະຈີນ-ອາຊຽນ "ກອງທອງແດງ" ຄັ້ງທີ 10 (2014)ໄດ້ໄຂຂຶ້ນທີ່ນານນິງກວາງຊີ

第十届（2014）“红铜鼓”中国—东盟艺术教育成果展演在广西南宁开展

ສະແດງ,ເຊິ່ງໄດ້ສະແດງໃຫ້ເຫັນຄວາມປາຖະໜາຢ່າງສຸດໃຈຕໍ່ການພັດທະນາເສັ້ນທາງສາຍໄໝເທິງທະເລສະຕະວັດທີ 21 ແລະ ເພີ່ມທະວີການແລກປ່ຽນດ້ານວັດທະນະທຳລະຫວ່າງຈີນກັບອາຊຽນ.ນີ້ພຽງແຕ່ເປັນກິດຈະກຳໜຶ່ງເທົ່ານັ້ນໃນກິດຈະກຳຫຼາຍຢ່າງນັບແຕ່ປີແລກປ່ຽນວັດທະນະທຳເລີ່ມຕົ້ນມານີ້.ມາຮອດເດືອນ ພະຈິກ ປີ 2014,ສອງຝ່າຍໄດ້ຈັດກິດຈະກຳເກືອບ 120 ຄັ້ງພາຍໃນຂອບປີແລກປ່ຽນວັດທະນະທຳເຊິ່ງກວມລວມ 10 ກວ່າຂົງເຂດ.

ແລກປ່ຽນຫຼາຍດ້ານ:ຮ່ວມກັນຊົມງານມະຫະກຳວັດທະນະທຳ

ປີ 2014,ຈີນໄດ້ສົ່ງກອງສິລະປິນລະດັບສູງຫຼາຍຄະນະໄປສະແດງຢູ່ປະເທດອາຊຽນ,ເພື່ອຊຸກຍູ້ໃຫ້ປະຊາຊົນປະເທດຕ່າງໆຮັບຮູ້ສິລະປະມູນເຊື້ອ ແລະ ສະໄໝປະຈຸບັນຂອງຈີນ.ສະມາຄົມແລກປ່ຽນກັບຕ່າງປະເທດຂອງຈີນໄດ້ສົ່ງກອງສິລະປິນ“ວັດທະນະທຳຈີນທົ່ວໂລກຮ່ວມກັນສະຫຼອງບຸນກຸດຈີນ”ໄປຢ້ຽມຢາມມະເລເຊຍໃນຕົ້ນປີ 2014,ກອງສິລະປະຊົນເຜົ່າສ່ວນໜ້ອຍຂອງຈີນຈັດງານລາຕີຕ້ອນຮັບບຸນກຸດຈີນພາຍໃຕ້ຫົວເລື່ອງທີ່ວ່າ“ປະຊາຊາດຈີນທີ່ມີຫຼາກຫຼາຍສີສັນ”ຢູ່ນະຄອນໂຮຈິມິນຂອງຫວຽດນາມ,ກະຊວງວັດທະນະທຳຈີນຈັດງານວາງສະ





ການວາງສະແດງວັດທະນະທຳຂອງງານວາງສະແດງສິນຄ້າຈີນ-ອາຊຽນປີ 2014 ທີ່ມີຈຸດຮຸ່ງໃສຫລວງຫຼາຍ

2014 中国—东盟博览会文化展亮点纷呈

ແດງ ແລະ ການສະແດງຕ່າງໆຢູ່ອິນໂດເນເຊຍພາຍໃຕ້ຫົວຂໍ້ທີ່ວ່າ“ສິລະປະການສະແດງອັນດີເດັ່ນຂອງອາຊຽນ-ຈີນເປັນປະເທດຫຼັກ”.

ປີ 2014,ຈີນ ແລະ ອາຊຽນໄດ້ຈັດກິດຈະກຳວາງສະແດງ,ເຮັດໃຫ້ປະຊາຊົນປະເທດອາຊຽນໄດ້ສຳຜັດກັບມໍລະດົກວັດທະນະທຳອັນລ້ຳຄ່າຂອງປະເທດຈີນຢ່າງໃກ້ຊິດ.

ວັນທີ 2 ມີນາ ປີ 2014,ງານວາງສະແດງ“ເຄື່ອງຖັກແສ່ວຊູໂຈ່ວ”ທີ່ເປັນສິລະປະມູນເຊື້ອທີ່ມີຊື່ສຽງຂອງຈີນໄດ້ຈັດຂຶ້ນຢູ່ຫໍວາງສະແດງໂຮແຢວດອກຂອງບຣູໄນ,ນັກສິລະປິນທີ່ມາຈາກນະຄອນຊູໂຈ່ວຈີນໄດ້ສະແດງສິລະປະຖັກແສ່ວຊູໂຈ່ວອັນເປັນມູນເຊື້ອທີ່ດີເລີດ,ໄດ້ດຶງດູດຜູ້ຊົມຫຼາຍພັນຄົນເຊິ່ງລວມທັງເຈົ້າຊຸນມູນນາຍ ແລະ ບຸກຄົນສຳຄັນໃນສັງຄົມ.

ວັນທີ 1 ເມສາ ປີ 2014,ສາງຮູບເງົາ ແລະ ໂທລະພາບຫ້ອງການຖະແຫຼງຂ່າວຄະນະລັດຖະບານຈີນ ແລະ ບໍລິສັດສື່ເຊວຕານວິນຂອງມຽນມາໄດ້ເຊັນສັນຍາສະໜອງລະຄອນໂທລະພາບຢູ່ສະຖານີໂທລະພາບສະກາຍເນັດຂອງຢາງກຸງ,ຈີນຈະສະໜອງລະຄອນໂທລະພາບຫົວຂໍ້ສະເພາະ ແລະ ສາລະຄະດີໃຫ້ຝ່າຍມຽນມາ.

ບົດບາດຂອງດາລາ:ສ້າງຂົວຕິດຕໍ່ ແລະ ແລກປ່ຽນ

ເດືອນ ມັງກອນ ປີ 2014,ໂດຍອີງຕາມການເຊື້ອເຊີນຂອງທ່ານ ເຈົ້າຊຽງລິນ,ເອກອັກຄະລັດຖະທູດຈີນປະຈຳບຣູໄນ,ທ້າວ ອູຈຸ່ນ,ດາລາທີ່ມີຊື່ສຽງພ້ອມກັບທ່ານອູຈິງທ່ຽນ ທີ່ເປັນພໍ່ຂອງທ້າວອູຈຸ່ນໄປຢ້ຽມຢາມສະຖານທູດ.ທ່ານທູດ ເຈົ້າຊຽງລິນ ກ່າວວ່າ,ໃນຖານະເປັນດາລາທີ່ມີຊື່ສຽງດັ່ງດັງ,ທ້າວ ອູຈຸ່ນ ໄດ້ຮັບຄວາມນິຍົມຫຼາຍ

ຈາກປະຊາຊົນຈີນ ໂດຍສະເພາະແມ່ນໄວໜຸ່ມເຢົາວະຊົນ, ຫຼາຍຄົນໄດ້ຮັບຮູ້ປູໄນ ໂດຍຜ່ານຈາກທ້າວ ອູຈຸ່ນ.ທ່ານ ຫວັງວ່າທ້າວ ອູຈຸ່ນ ສືບຕໍ່ເສີມຂະຫຍາຍບົດບາດອັນຕັ້ງໜ້າໃນປີແລກປ່ຽນວັດທະນະທຳຈີນອາຊຽນ,ສົ່ງເສີມການແລກປ່ຽນວັດທະນະທຳລະຫວ່າງສອງປະເທດ.

ໂຮງວັດທະນະທຳເວທີໃໝ່ໃນການເຜີຍແຜ່ວັດທະນະທຳຈີນຢູ່ຕ່າງປະເທດ

ວັນທີ 19 ພະຈິກ ປີ 2014, ໂຮງວັດທະນະທຳຈີນພົ້ນທະເລແຫ່ງທຳອິດໄດ້ສ້າງຕັ້ງຂຶ້ນຢູ່ນະຄອນຫຼວງພະນົມເປັນຂອງກຳປູເຈຍ,ທ່ານ ຕົງເວີຍ,ລັດຖະມົນຕີຊ່ວຍວ່າການກະຊວງວັດທະນະທຳຈີນໄດ້ມອບປ້າຍໃຫ້. ໂຮງວັດທະນະທຳມີເນື້ອທີ່ 5000 ຕາແມັດ,ມີສະຖານທີ່ແລກປ່ຽນວັດທະນະທຳຊະນິດຕ່າງໆ,ເຊັ່ນ,ຫ້ອງວາງສະແດງ, ຫ້ອງຮຽນ,ບ່ອນສາຍຮູບເງົາຢູ່ກາງແຈ້ງ,ຫ້ອງສະໝຸດ ແລະ ອື່ນໆ.ນີ້ແມ່ນກຸ່ມບໍລິສັດຊິ່ນຈີ່ຢຸນນານຈີນປະດິດສ້າງຂຶ້ນໃນພຶດຕິກຳເຜີຍແຜ່ວັດທະນະທຳຈີນຢູ່ຕ່າງປະເທດ, ໂດຍພາຍໃຕ້ການສະໜັບສະໜູນຂອງກະຊວງວັດທະນະທຳຈີນ,ອົງການປົກຄອງແຂວງຢຸນນານ ແລະ ສະຖານທູດຈີນປະຈຳກຳປູເຈຍ.

ທ່ານນາງ ປູ້ຈ້ຽນກົວ,ເອກອັກຄະລັດຖະທູດຈີນປະຈຳກຳປູເຈຍໄດ້ຕີລາຄາສູງຕໍ່ ໂຮງວັດທະນະທຳ,ເຫັນວ່າການຈັດກິດຈະກຳຕ່າງໆຈະກາຍເປັນປ່ອງຢ້ຽມທີ່ປະຊາຊົນກຳປູເຈຍຮັບຮູ້ ແລະ ສຳຜັດກັບວັດທະນະທຳທີ່ດີງາມຂອງຈີນ.

ໃນເວລາໃຫ້ສຳພາດຕໍ່ນັກຂ່າວຂ່າວສານຊິ່ນຮວາຈີນ,ທ່ານນາງ ຢາງຊິ້ວຜິງ,ເອກອັກຄະລັດຖະທູດຈີນປະຈຳອາຊຽນກ່າວວ່າ,ວັດທະນະທຳເປັນໜຶ່ງໃນຂົງເຂດການຮ່ວມມືອັນສຳຄັນລະຫວ່າງຈີນກັບອາຊຽນ,ຍິນດີຕ້ອນຮັບປະເທດຕ່າງໆຂອງອາຊຽນເຂົ້າຮ່ວມຢ່າງຕັ້ງໜ້າ,ຮ່ວມກັນສຳຜັດກັບຄວາມມີສະເໜ່ທີ່ວັດທະນະທຳຂອງຈີນ ແລະ ປະເທດຕ່າງໆຂອງອາຊຽນເຊື່ອມໂຍງເຊິ່ງກັນ ແລະ ກັນ.



ການສະແດງສິລະປະວັນນະຄະດີ "ປີການແລກປ່ຽນວັດທະນະທຳຈີນ-ອາຊຽນ" --《ທະເລສາຍໄໝສະແຫວງຫາຄວາມໃຝ່ຝັນ》ລະຄອນຟ້ອນຂະໜາດໃຫຍ່ສະບັບຕົ້ນ
"中国—东盟文化交流年"文艺演出——大型原创舞剧《丝海梦寻》





文、图／杨 滢

# ງານສິລະປະວັດທະນະທຳປະເທດລ້ອງແມ່ນ້ຳລ້ານຊ້າງ–ແມ່ນ້ຳຂອງປີ 2014 ຈັດຂຶ້ນຢູ່ສິບສອງພັນນາ

**2014 年澜沧江・湄公河流域国家文化艺术节在西双版纳举行**

2014 年 12 月 18 日，2014 澜沧江・湄公河流域国家文化艺术节在西双版纳州景洪市拉开帷幕。民族森林音乐会、湄公河流域国家商品展销、美食展等活动精彩纷呈。

ວັນທີ 18 ທັນວາ ປີ 2014,ງານສິລະປະວັດທະນະທຳປະເທດລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງປີ 2014 ໄດ້ຈັດຂຶ້ນຢູ່ນະຄອນຊຽງຮຸ່ງກິ່ງແຂວງສິບສອງພັນນາ.ໃນນັ້ນມີກິດຈະກຳຕ່າງໆ,ເຊັ່ນ,ງານດົນຕີຊົນເຜົ່າໃນປ່າໄມ້,ງານວາງສະແດງ ແລະ ຈຳໜ່າຍສິນຄ້າຂອງປະເທດລ້ອງແມ່ນ້ຳຂອງ,ງານວາງສະແດງອາຫານ ແລະ ອື່ນໆ.

ຕອນຄ່ຳວັນທີ 18 ທັນວາ 2014,ງານສິລະປະໄດ້ຈັດຂຶ້ນຢ່າງຄຶກຄື້ນຢູ່ກ້ອງທາດຄຳໃຫຍ່ຂອງເຂດເກົ້າຈອງສິບສອງຈີງຂອງສິບສອງພັນນາ.ແຂກຜູ້ມີກຽດທີ່ເຂົ້າຮ່ວມພິທີເປີດຂອງງານສິລະປະວັດທະນະທຳຄັ້ງນີ້ມີ:ທ່ານຄຳໝັ້ນ ສຸນວິເລີດ,ກຳມະການສູນກາງພັກ,ເລຂາຄະນະພັກທັງເປັນເຈົ້າແຂວງແຂວງບໍ່ແກ້ວ,ທ່ານ ຄຳເຈນ ວົງໂພສີ,ກຳມະການສູນກາງພັກ,ເລຂາຄະນະພັກທັງເປັນເຈົ້າແຂວງແຂວງຜົ້ງສາລີ,ທ່ານ ສາຍສະໝອນ ຄົມທະວົງ,ກຳມະການປະຈຳຄະນະພັກແຂວງທັງເປັນຮອງເຈົ້າແຂວງແຂວງຫຼວງພະບາງ,ທ່ານ ພັນທອງ ພົດທຸມມາ,ຮອງເລຂາຄະນະພັກທັງເປັນຮອງເຈົ້າແຂວງແຂວງຫຼວງນ້ຳທາ,ທ່ານ ຕ່ານເຈີ່ງ,ຮອງປະທານສະຫະພັນວັນນະຄະດີຈີນ,ທ່ານ ຈ້າວຈີ່ນ,ກຳມະການປະຈຳຄະນະພັກແຂວງຢຸນນານທັງເປັນຫົວໜ້າຄະນະໂຄສະນາຂອງຄະນະພັກແຂວງຢຸນນານ,ທ່ານ ຢ້ຽນຢີວຊົ໋ງ,ອະດີດຮອງຫົວໜ້າປະຈຳການຂອງຄະນະປະຈຳສະພາປະຊາຊົນແຂວງຢຸນນານ ແລະ ທ່ານຜູ້ນຳອື່ນໆ,ພ້ອມດ້ວຍກອງສິລະປິນທີ່ມາຈາກລາວ,ໄທ,ມຽນມາ,ຫວຽດນາມ ແລະ ກຳປູເຈຍໄດ້ເຂົ້າຮ່ວມພິທີເປີດງານ.






ແຂກຜູ້ມີກຽດ ແລະ ການນຳທີ່ເຂົ້າຮ່ວມພິທີເປີດ
出席开幕式的嘉宾和领导

ໃນພິທີເປີດງານ,ທ່ານ ລົວຫົງຈ່ຽງ,ຮອງເລຂາຄະນະພັກກິ່ງແຂວງສິບສອງພັນນາ,ຜູ້ວ່າການອົງການປົກຄອງກິ່ງແຂວງສິບສອງພັນນາກ່າວວ່າ,ສິລະປະວັດທະນະທຳເປັນໝາກຜົນຈາກສະຕິປັນຍາຂອງມະນຸດ,ງານສິລະປະວັດທະນະທຳປະເທດລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ,ມີຈຸດປະສົງທີ່ວ່າຜ່ານເວທີດັ່ງກ່າວ,ປະເທດໃນພາກພື້ນນີ້ຮ່ວມກັນວາງສະແດງວັດທະນະທຳ ແລະ ສິລະປະທີ່ດີງາມໃຫ້ຊາວໂລກ,ສະແດງໃຫ້ເຫັນນ້ຳໃຈຮັກຫອມສັນຕິພາບຂອງປະຊາຊົນ ແລະ ມູນເຊື້ອໄມຕີຈິດມິດຕະພາບແບບບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນຢູ່ໃນພາກພື້ນ.ໂດຍຜ່ານຄວາມພະຍາຍາມຮ່ວມກັນຂອງບັນດາປະເທດໃນພາກພື້ນນີ້,ງານສິລະປະວັດທະນະທຳດັ່ງກ່າວໄດ້ມີບົດບາດສູງຂຶ້ນຢູ່ອາຊີຕາເວັນອອກສ່ຽງໃຕ້ກໍ່ຄືທົ່ວໂລກ,ໄດ້ກາຍເປັນງານມະຫະກຳວັດທະນະທຳທີ່ມີຊື່ສຽງຢູ່ໃນອະນຸພາກພື້ນແມ່ນ້ຳຂອງ.ການແລກປ່ຽນແມ່ນພະລັງແຮງທີ່ຊຸກຍູ້ໃຫ້ຄວາມສີວິໄລຂອງມະນຸດກ້າວໄປໜ້າຢ່າງບໍ່ຢຸດຢັ້ງ.ຄຽງຄູ່ກັບການຮ່ວມມືດ້ານເສດຖະກິດຢູ"ແຖບໜຶ່ງເສັ້ນທາງໜຶ່ງ" ແລະ ອະນຸພາກພື້ນແມ່ນ້ຳຂອງ,ເຂດການຄ້າເສລີຈີນ-ອາຊຽນພັດທະນາກ້າວສູ່ລວງເລິກ,ປະຊາຊົນບັນດາປະເທດໃນພາກພື້ນໄປມາຫາສູ່ກັນຫຼາຍກວ່າເກົ່າ,ການແລກປ່ຽນດ້ານສິລະປະວັດທະນະທຳກວ້າງຂວາງກວ່າເກົ່າ,ການຮ່ວມມືດ້ານເສດຖະກິດການຄ້າໃກ້ຊິດກວ່າເກົ່າ.ມິດຕະພາບຖານບ້ານໃກ້ເຮືອນຄຽງ,ຕ່າງຝ່າຍຕ່າງມີຜົນປະໂຫຍດ,ຮ່ວມກັນສ້າງຄວາມຈະເລີນຮຸ່ງເຮືອງໄດ້ກາຍເປັນຄວາມປາຖະໜາຮ່ວມກັນຂອງປະຊາຊົນບັນດາປະເທດໃນພາກພື້ນ.ງານສິລະປະ



ພິທີກອນລາວ
老挝主持人

ວັດທະນະທຳຄັ້ງນີ້ມີຫົວຂໍ້ວ່າ“ມິດຕະພາບຖານບ້ານໃກ້ເຮືອນຄຽງ,ຮ່ວມກັນສ້າງຄວາມຈະເລີນຮຸ່ງເຮືອງ”,ນັກສິລະປິນຈາກປະເທດຕ່າງໆໄດ້ສະແດງສິລະປະວັດທະນະທຳທີ່ມີສີສັນພິເສດ, ໂດຍຜ່ານການແລກປ່ຽນດ້ານສິລະປະວັດທະນະທຳ,ຈະປາກົດມີແນວຄິດປະດິດສ້າງອັນໃໝ່,ຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືກັນຕື່ມອີກ ແລະ ຈະຊຸກຍູ້ໃຫ້ບັນດາປະເທດໃນພາກພື້ນຈະເລີນຮຸ່ງເຮືອງ ແລະ ພັດທະນາຮ່ວມກັນ.

ຕອນຄ່ຳວັນທີ 19 ທັນວາ 2014,ງານດົນຕີຊົນເຜົ່າໃນປ່າໄມ້ໄດ້ເປີດສາກຢູ່ທ່າມກາງສຽງເພງ“ໄອ້ເສີນເນີຊີຫານ”ແປວ່າຄວາມຮັກບໍ່ແມ່ນສິ່ງທີ່ຫາຍາກ,ທັງໝົດມີ 20 ລາຍການ,ເຊັ່ນ:ການຟ້ອນບົດເພງສະຕິງ“ໝາກໂປມນ້ອຍ”,ການຮ້ອງເພງ“ເອື້ອຍນ້ອງ” “ຄອບຄົວໃຫຍ່ແຫ່ງປະຊາຊາດຈີນ” ແລະ ອື່ນໆໄດ້ຮັບສຽງຕົບມືດັງໆຈາກຜູ້ຊົມ.ໃນງານດົນຕີຄັ້ງນີ້ໄດ້ເຕົ້າໂຮມນັກຮ້ອງ ແລະ ວົງດົນຕີຊົນເຜົ່າສ່ວນໜ້ອຍທີ່ມີຊື່ສຽງຂອງແຂວງປຸນນານ,ສິບສອງພັນນາ ແລະ ວົງດົນຕີທີ່ມີສີສັນພິເສດຂອງປະເທດລ້ອງແມ່ນ້ຳຂອງ,ການສະແດງຮ້ອງເພງພື້ນເມືອງ,ບົດຟ້ອນ ແລະ ບົດຮ້ອງເພງຍອດນິຍົມສະຕິງຢູ່ເທິງເວທີດຽວກັນ,ເຊິ່ງແມ່ນງານມະຫະກຳດົນຕີທີ່ມີສີສັນພິເສດດ້ວຍຮູບການສິລະປະທີ່ປະຊາຊົນມັກເບິ່ງມັກຊົມ,ໄດ້ສະແດງໃຫ້ເຫັນຈຸດພິເສດດ້ານວັດທະນະທຳຂອງສິບສອງພັນນາ ແລະ ປະເທດລ້ອງແມ່ນ້ຳຂອງ.

ຕາມຂ່າວແຈ້ງວ່າ,ງານສິລະປະວັດທະນະທຳປະເທດລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຄັ້ງທຳອິດຈັດຂຶ້ນຢູ່ສິບສອງພັນນາຂອງແຂວງປຸນນານໃນເດືອນ ທັນວາ ປີ 2011,ຮອດປະຈຸບັນນີ້ໄດ້ຈັດ 4 ຄັ້ງແລ້ວ.



ການສະແດງສິລະປະວັດທະນະທຳໃນພິທີໄຂງານ
开幕式上的文艺表演





文 / 杨 滢

# ການພັດທະນາຍຸດທະສາດ "1 ແຖບ 1 ເສັ້ນທາງ" ນະຄອນປາວຊານ

## --ພິທີໄຂຕະຫລາດການຄ້າສາກົນອີອູນາວຣວາປາວຊານ ແລະ ການລິເລີ່ມກິດຈະກຳທຸລະກິດເອເລັກໂຕຼນິກຕາເວັນຕົກຢູນນານ(ພາກຕາເວັນຕົກຢູນນານ)



ທ່ານ ອູສົງ ຮອງເລຂາພັກຄະນະພັກ,ເຈົ້າຄອງນະຄອນປາວຊານແຂວງຢູນນານຂຶ້ນກ່າວຄຳປາໄສ
云南省保山市市委副书记、市长吴松致辞　陈灿霞 图




ທ່ານ ຊາວຮວາຊຽງ ຮອງເຈົ້າຄອງນະຄອນອຳນາດການປົກຄອງນະຄອນຈິນຮວາແຂວງເຈີ້ຈຽງຂຶ້ນກ່າວຄຳປາໄສ
浙江省金华市政府副市长邵华强致辞　陈灿霞 图

### 保山市"一带一路"战略发展

——保山茂华义乌国际商贸城开业庆典暨滇西电子商务产业启动

**2014 年 12 月 28 日，由保山茂华义乌国际商贸城有限公司主办、保山市委宣传部协办的保山茂华义乌国际商贸城开业庆典暨滇西电子商务产业仪式在保山市隆阳区保山茂华义乌国际商贸城现场正式启动。**

ວັນທີ 28 ທັນວາ ປີ 2014,ພິທີໄຂຕະຫລາດການຄ້າສາກົນອີອູນາວຣວາປາວຊານ ແລະ ພິທີກິດຈະກຳທຸລະກິດເອເລັກໂຕຼນິກຕຽນຊີເຊິ່ງແມ່ນບໍລິສັດຕະຫລາດການຄ້າສາກົນອີອູນາວຣວາປາວຊານຈຳກັດເປັນຜູ້ຈັດທຳແລະ ຄະນະໂຄສະນາຄະນະພັກນະຄອນປາວຊານເປັນຜູ້ປະສານງານນັ້ນໄດ້ລິເລີ່ມຂຶ້ນຢູ່ສະຖານທີ່ຕະຫຼາດການຄ້າສາກົນອີອູນາວຣວາປາວຊານເມືອງລົງຢາງນະຄອນປາວຊານຢ່າງເປັນທາງການ.

ຕະຫລາດການຄ້າສາກົນອີອູນາວຣວາປາວຊານແມ່ນໂຄງການຈຸດສຸມທີ່ຮັບເອົານັກທຸລະກິດດຶງດູດທຶນເຂົ້າມາເຊິ່ງຄະນະພັກສອງຂັ້ນ ແລະ ອຳນາດການປົກຄອງສອງຂັ້ນຂອງນະຄອນປາວຊານ ແລະ ເມືອງລົງຢາງກັບອົງເຂດແຄມທະເລພາກຕາເວັນອອກຮ່ວມມືກັນທີ່ມີທ່າແຮງທົດແທນກັນ,ກໍານົດຖານະຂອງຕະຫຼາດການຄ້າສາກົນອີອູນາວຣວາປາວຊານຄື"ຢືນຢູ່ປາວຊານ,ອວ່າຍໜ້າໃສ່ຕຽນຊີ(ພາກຕາເວັນຕົກຢູນນານ),ໄປສູ່ອາຊີໃຕ້",ເປັນບ້ວງໜຶ່ງທີ່ສຳຄັນຂອງລັດໃນການສ້າງສາຍຸດທະສາດ"ເມືອງດ່ານໜ້າອາຊີໃຕ້" ແລະ ກໍແມ່ນເວທີດ່ານໜ້າດ້ານການຄ້າແຫ່ງການພັດທະນາຍຸດທະສາດ"1 ແຖບ 1 ເສັ້ນທາງ 1 ລະບຽງ".

ທ່າແຮງພູມີພາກແຕ່ແຫ່ງດຽວຂອງປາວຊານ



ປາວຊານຕັ້ງຢູ່ຄໍຫອຍພາກຕາເວັນຕົກຢູນນານ,ແຕ່ໃດມາ,ເປັນສະຖານທີ່ພັກເຊົາທີ່ສຳຄັນຂອງທາງບູຮານເສັ້ນທາງສາຍໄໝພາກໃຕ້,ເປັນປະຕູທາງບົກຂອງຈີນທີ່ໄປສູ່ອາຊີໃຕ້,ອາຊີຕາເວັນອອກສ່ຽງໃຕ້ ແລະ ສະຖານທີ່ເຕົ້າໂຮມ ແລະ ແຈກຢາຍການຄ້າຈີນກັບມຽນມາ,ທັງແມ່ນເຂດທີ່ຖືກກວມເອົາຈາກຄຸນໝິງຫາຢູຍຫລີທີ່ນອນຢູ່ໃນແຜນການຂອງຈີນ ແລະ ຊ່ອງທາງໃຫຍ່ສາກົນທັງສອງເສັ້ນຈາກຄຸນໝິງຫາເຖິງຊົງກວນໄປເຖິງໝີຈີນາ,ທັງເປັນຈຸດຕໍ່ສຳຄັນ ແລະ ໃຈກາງຈຸດສຸມແຖບເສດຖະກິດກັບຕ່າງປະເທດທັງສອງ.



ທ່ານ ລິນເວີນຈາວ ຜູ້ອຳນວຍການໃຫຍ່ບໍລິສັດຈຳກັດຕະຫລາດການຄ້າສາກົນອີອູນາວຣວາປາວຊານ
保山茂华义乌国际商贸城有限公司总经理林文照致辞　陈灿霞 图

ການສ້າງສາປາວຊານເປັນພື້ນຖານຈໍລະຈອນສິນຄ້າດ້ານການຄ້າສາກົນລັກສະນະພາກພື້ນ,ຫັນປ່ຽນຮູບແບບຈໍລະຈອນສິນຄ້າໃນເມື່ອກ່ອນເປັນຕົ້ນແມ່ນຮັບໃຊ້ມວນຊົນໃນທ້ອງຖິ່ນ,ອວ່າຍໜ້າໃສ່ຕະຫລາດອາຊີໃຕ້,ອາຊີຕາເວັນອອກສ່ຽງໃຕ້,ນຳເຂົ້າຕະຫລາດການຄ້າສາກົນອີອູເຂົ້າສູ່ປາວຊານ,ໂດຍຜ່ານການຄ້າໃຫຍ່ຊຸກດັນຈໍລະຈອນສິນຄ້າໃຫຍ່ເພື່ອຊຸກຍູ້ການພັດທະນາໃຫຍ່.ປັດຈຸບັນນີ້,ຕະຫຼາດການຄ້າສາກົນອີອູໄດ້ສ້າງສຳເລັດແລ້ວ,ຄຽງຄູ່ກັບນັກທຸລະກິດໄດ້ເຂົ້າປະຈຳຢູ່ແຫ່ງນີ້ ແລະ ໄດ້ເປີດເວທີການຄ້າເອເລັກໂຕຼນິກແລ້ວ,ຕະຫລາດຈະເລີນຮຸ່ງເຮືອງຂຶ້ນເປັນເທື່ອລະກ້າວ.ມີສິນຄ້ານ້ອຍ



ແຂກຜູ້ມີກຽດຮ່ວມກັນກົດປຸ່ມບານແກ້ວ
嘉宾共同启动水晶球　陈灿霞 图




陈灿霞 图

ເປັນຈຳນວນຫລວງຫຼາຍຈະເຂົ້າສູ່ຕະຫລາດອາຊີໃຕ້ຈາກແຫ່ງນີ້ເຊັ່ນ:ມຽນມາ,ອິນເດຍ ແລະ ປະເທດອື່ນໆ.

ຕະຫລາດການຄ້າສາກົນອີອູປາວຊານຊັກນຳການພັດທະນາເສດຖະກິດທ້ອງຖິ່ນ

ການທີ່ສ້າງສຳເລັດຕະຫລາດການຄ້າສາກົນອີອູປາວຊານບໍ່ພຽງແຕ່ແມ່ນການພັດທະນາຂອງໂຄງການພານິດອັນໜຶ່ງເທົ່ານັ້ນ,ຍັງມີຜົນດີແກ່ການພັດທະນາຕົວເມືອງປາວຊານອີກດ້ວຍ.

ການສ້າງສາຕະຫລາດການຄ້າແມ່ນຄວາມຮຽກຮ້ອງຕ້ອງການທີ່ຈຳເປັນເພື່ອຍົກລະດັບອຸດສາຫະກຳພາກພື້ນ,ການພັດທະນາຕົວເມືອງ ແລະ ການຫັນປ່ຽນການຕະຫລາດ,ຈະປ່ຽນແປງບົດບາດທຳງານຂອງຕະຫລາດທີ່ເປັນມູນເຊື້ອໃນເຂດໂຄງການ ແລະ ວິທີການຄຸ້ມຄອງ,ລ້ວນແຕ່ມີຄວາມໝາຍສຳຄັນທີ່ມີຕໍ່ການຊຸກດັນກິດຈະການການຄ້າໝູນວຽນ,ຊຸກຍູ້ການພັດທະນາກິດຈະການການຄ້າປາວຊານ,ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຜູ້ບໍລິໂພກ ແລະ ຊັກນຳການພັດທະນາອຸດສາຫະກຳຫຼາຍປະການຂອງຢຸນນານ.

ຕະຫລາດການຄ້າສາກົນອີອູປາວຊານເປັນປະຕູນຳເຂົ້າທຶນຮອນຂອງຕະຫຼາດການຄ້າສາກົນອີອູເຈີ້ຈຽງ,ໄດ້ຮັບເອົາການນຳເຂົ້າອຸດສາຫະກຳຈັດເຂົ້າກັນ ແລະ ຫັນປ່ຽນຢ່າງເຕັມສ່ວນ,ນຳໃຊ້ປະສິດທິຜົນເຕົ້າໂຮມຂອງຕະຫລາດ,ຊັກນຳຜະລິດຕະກຳ ແລະ ກິດຈະການຂາຍສົ່ງຂາຍຍ່ອຍຂອງພາກຕາເວັນຕົກຢຸນນານຈົນເຖິງຂົງເຂດແຄມທະເລພາກຕາເວັນອອກກາງພັດທະນາ ແລະ ເຄື່ອນຍ້າຍຕື່ມອີກກ້າວໜຶ່ງ,ກາຍເປັນປະຕູດ່ານໜ້າທີ່ມີຊີວິດຊີວາທີ່ສຸດທີ່ໄດ້ເຊື່ອມໂຍງອາຊີໃຕ້,ອາຊີຕະເວັນອອກສ່ຽງໃຕ້ ແລະ ເປີດປະຕູສູ່ພາກຕາເວັນຕົກສ່ຽງໃຕ້. ທັງໄດ້ປະດິດສ້າງເປັນຕະຫລາດການຄ້າທີ່ມີສະພາບແວດລ້ອມຊື້ຂອງດີທີ່ສຸດຂອງປາວຊານຈົນເຖິງທົ່ວເຂດຕາເວັນຕົກຢຸນນານສຸດທີ່ສອດຄ່ອງກັບລະດັບສາກົນ,ໄດ້ຊັກນຳເສດຖະກິດທ້ອງຖິ່ນແມ່ນຄວາມຕ້ອງການໃນການພັດທະນາເສດຖະກິດສັງຄົມທ້ອງຖິ່ນ. ໂຄງການດັ່ງກ່າວນີ້ໂດຍຜ່ານການພັດທະນາ ແລະ ນຳໃຊ້ກິດຈະການການຄ້າໝູນວຽນຂອງປາວຊານ,ຈະນຳເອົາອຸດສາຫະກຳທີ່ເປັນທ່າແຮງຂອງທ້ອງຖິ່ນຍູ້ໄປສູ່ຕະຫລາດພາຍໃນປະເທດ ແລະ ຕະຫລາດສາກົນ,ນຳເຂົ້າຍີ່ຫໍ້ຊື່ດັງ ແລະ ເຕັກນິກທີ່ກ້າວໜ້າພາຍໃນປະເທດ ແລະ ນອກປະເທດສູ່ປາວຊານ,ເພື່ອສະໜອງເວທີທີ່ດີເດັ່ນໃຫ້ແກ່ພວກເຂົາເຈົ້າ,ທັງໄດ້ເຮັດໃຫ້"ຕ່ອງໂສ້ການສະໜອງ ແລະ ການຈຳໜ່າຍ"ສິນຄ້າໝູນວຽນໃຫ້ສັ້ນເຂົ້າ,ຈະຕ້ອງຊຸກຍູ້ເສດຖະກິດປາວຊານພັດທະນາກ້າວກະໂດດໂດຍໄວຢ່າງແນ່ນອນ,ເພື່ອປະກອບສ່ວນອັນໃຫຍ່ຫລວງເຂົ້າໃນການສ້າງສາປາວຊານກາຍເປັນສູນການຄ້າລັກສະນະພາກພື້ນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້.



杨滢 图



刘蓉 图




陈灿霞 图

# ສູນການຄ້າແບບສວນດອກໄມ້ທີ່ງາມທີ່ສຸດຂອງອາຊີເປີດບໍລິການຢ່າງເປັນທາງການສ້າງນາມບັດໃໝ່ດ້ານການທ່ອງທ່ຽວຂອງຢູນນານ

## 亚洲最美花园商城开业　打造云南旅游新名片

**2014 年 12 月 21 日，亚洲最美花园商城之一——昆明花之城正式开业运营。据了解，花之城创造了多个中国、亚洲和世界之最。**

ວັນທີ 21 ທັນວາ ປີ 2014,ເມືອງແຫ່ງດອກໄມ້ຄຸນໝິງທີ່ເປັນສູນການຄ້າແບບສວນດອກໄມ້ທີ່ງາມທີ່ສຸດຂອງອາຊີໄດ້ເປີດບໍລິການຢ່າງເປັນທາງການ.ສູນການຄ້າແຫ່ງນີ້ໄດ້ສ້າງສະຖິຕິຫຼາຍຢ່າງຂອງຈີນ,ອາຊີກໍ່ຄືຂອງໂລກ:ສວນດອກໄມ້ເຮືອນແກ້ວທີ່ມີເນື້ອທີ່ເກືອບ 6000 ຕາແມັດຖືວ່າເປັນ“ເຮືອນແກ້ວພາຍໃຕ້ຫົວຂໍ້ດອກໄມ້ທີ່ມີຂະໜາດໃຫຍ່ທີ່ສຸດຂອງໂລກ”;ໂຄງການນີ້ໄດ້ຊື່ນຳດອກໄມ້,ຈະສ້າງ“ສູນການຄ້າພາຍໃຕ້ຫົວຂໍ້ດອກໄມ້ແຫ່ງທຳອິດຂອງໂລກ”;ໄດ້ນຳເຂົ້າເຄື່ອງສຳອາງຍີ່ຫໍ້ລະດັບຊາດຂອງຝຣັ່ງ,ສ້າງສູນບຳລຸງຜິວດ້ວຍນ້ຳດອກໄມ້ທີ່ໃຫຍ່ທີ່ສຸດຂອງໂລກ ແລະ ຫໍພິພິທະພັນສຳຜັດວັດທະນະທຳການຄ້າເຄື່ອງຫອມ 300 ປີຈີນ-ຝຣັ່ງແຫ່ງທຳອິດໃນໂລກ;ໂຮງແຮມສາກົນທາວເຊີ່ງເມືອງແຫ່ງດອກໄມ້ທີ່ມີຫ້ອງນອນ 2400 ຫ້ອງເປີດບໍລິການແລ້ວຈະກາຍເປັນໂຮງແຮມ 5 ດາວໃຫຍ່ທີ່ສຸດຂອງຈີນ;ໃນໂຄງການດັ່ງກ່າວຍັງມີໂຮງສາຍຮູບເງົາ 4D ຫຼັງຄາກົ່ງເຊິ່ງເປັນທີ່ໃຫຍ່ທີ່ສຸດຂອງຈີນ.

ຕາມຂ່າວແຈ້ງວ່າ,ການເປີດບໍລິການຂອງສູນການຄ້າເມືອງແຫ່ງດອກໄມ້ຈະເປັນຄວາມຄືບໜ້າໃໝ່ຂອງການທ່ອງທ່ຽວແຂວງຢູນນານ.ໂຄງການດັ່ງກ່າວຈະຍົກສູງປະສິດທິພາບ ແລະ ຄຸນນະພາບດ້ານການທ່ອງທ່ຽວຢ່າງຫຼວງຫຼາຍ ແລະ ເພີ່ມທະວີກຳລັງແຂ່ງຂັນຂອງການທ່ອງທ່ຽວຢູນນານຢູ່ໃນຕະຫຼາດທົ່ວປະເທດຈີນ;ໃນຖານະເປັນໂຄງການຕົວແທນທີ່ປະສົມປະສານກັບສະໜາມບິນຊາງສຸຍ,ສູນການຄ້າດັ່ງກ່າວຍັງຈະເພີ່ມທະວີພາບພົດອັນດີງາມຂອງຕົວເມືອງ ແລະ ຄວາມຮູ້ສຶກດ້ານການທ່ອງທ່ຽວຂອງຜູ້ໂດຍສານໃຫ້ດີຂຶ້ນ,ເສີມຂະຫຍາຍບົດບາດອັນຕັ້ງໜ້າໃນການປັບປຸງສະພາບແວດລ້ອມດ້ານການຄ້າຂອງແຂວງຢູນນານໃຫ້ດີຂຶ້ນ;ອີງການທ່ອງທ່ຽວຕ່າງໆສາມາດຖືໂອກາດທີ່ຜູ້ໂດຍສານຕໍ່ຍົນສາກົນຢູ່ສະໜາມບິນຊາງສຸຍສາມາດຍົກເວັ້ນວີຊາພາຍໃນ 72 ຊົ່ວໂມງ,ຜ່ານສູນການຄ້າດັ່ງກ່າວໄປສູ່ແຫຼ່ງທ່ອງທ່ຽວຕ່າງໆທີ່ກະແຈກກະຈາຍ,ສົ່ງເສີມບົດບາດຂອງຄຸນໝິງທີ່ເປັນສູນເຕົ້າໂຮມນັກທ່ອງທ່ຽວທີ່ບໍ່ເປັນຄະນະ;ບູລະນະ ແລະ ຍົກສູງລະດັບວັດທະນະທຳຂອງຕົວເມືອງ,ພັດທະນາເປັນສູນກາງ ແລະ ຈຸດເດັ່ນໃໝ່ໃນຊີວິດຕົວເມືອງຂອງນະຄອນຄຸນໝິງ.

ທ່ານ ເຫີຊີຄ່າງ,ຮອງຫົວໜ້າຄະນະກຳມາທິການພັດທະນາການທ່ອງທ່ຽວແຂວງຢູນນານກ່າວວ່າ,ການໝູນວຽນຢ່າງສຳເລັດຜົນຂອງສູນການຄ້າດັ່ງກ່າວຈະເສີມຂະຫຍາຍບົດບາດອັນຕັ້ງໜ້າໃນການຊຸກຍູ້ໃຫ້ຂະແໜງການທ່ອງທ່ຽວຂອງຄຸນໝິງປັບປຸງໂຄງປະກອບໃຫ້ດີຂຶ້ນ,ຫັນປ່ຽນຮູບການພັດທະນາ ແລະ ເລື່ອນລະດັບ,ຍົກຄຸນນະພາບ ແລະ ປະສິດທິຜົນໃຫ້ສູງຂຶ້ນ.ສາມາດຈັດສັນຊັບພະຍາກອນການທ່ອງທ່ຽວຢ່າງມີປະສິດທິຜົນ,ບູລະນະແຜນຜັງພັດທະນາ ແລະ ປັບປຸງໂຄງປະກອບດ້ານການຄ້າ,ວັດທະນະທຳ ແລະ ການທ່ອງທ່ຽວໃນຕົວເມືອງ,ຊຸກຍູ້ການພັດທະນາຂອງເຂດໄປຊ່າເຫີກໍ່ຄືພາກຕາເວັນອອກຂອງນະຄອນຄຸນໝິງ,ປະກອບສ່ວນອັນຕັ້ງໜ້າເຂົ້າໃນການຊຸກຍູ້ການພັດທະນາການທ່ອງທ່ຽວຂອງແຂວງຢູນນານ.

ທ່ານ ລິນເຄີ້ຈຽນ,ຮອງຫົວໜ້າຄະນະກຳມາທິການພັດທະນາການທ່ອງທ່ຽວນະຄອນຄຸນໝິງກ່າວວ່າ,ນະຄອນຄຸນໝິງໄດ້ທຳຄວາມພະຍາຍາມຕະຫຼອດມາເພື່ອສ້າງຈຸດເດັ່ນໃໝ່ໃນດ້ານການທ່ອງທ່ຽວ,ດຶງດູດນັກທ່ອງທ່ຽວຢູ່ຄຸນໝິງຫຼາຍກວ່າເກົ່າ,ສຳລັບສູນການຄ້າເມືອງແຫ່ງດອກໄມ້ກໍ່ເປັນຈຸດເດັ່ນດ້ານການທ່ອງທ່ຽວ.ທ່ານກ່າວເນັ້ນຕື່ມວ່າ,ປີ 2013,ຈຳນວນຂົນສົ່ງຜູ້ໂດຍສານຂອງສະໜາມບິນຊາງສຸຍມີປະມານ 30 ລ້ານເທື່ອຄົນ,ໃນນັ້ນ,ມີ 16 ລ້ານເທື່ອຄົນແມ່ນມີຈຸດປະສົງທ່ອງທ່ຽວ.ໂດຍອີງໃສ່ສະໜາມບິນຊາງສຸຍ,ເມືອງແຫ່ງດອກໄມ້ຈະເປັນປ້າຍໜຶ່ງທີ່ງາມທີ່ສຸດຂອງຢູນນານ,ການໝູນວຽນຢ່າງສຳເລັດຜົນຂອງໂຄງການດັ່ງກ່າວຈະເພີ່ມພະລັງຊີວິດໃຫ້ແກ່ການພັດທະນາການທ່ອງທ່ຽວຂອງນະຄອນຄຸນໝິງ.



文、图 / 云南建工集团

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານຈຳກັດ ໄດ້ຮັບການພັດທະນາຢ່າງຫລວງຫລາຍ

ປີ 2014 ແມ່ນປີໜຶ່ງທີ່ບໍ່ທຳມະດາສຳລັບກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານຈຳກັດ,ແມ່ນປີໜຶ່ງທີ່ຄວນຈົດຈຳ,ກໍ່ເປັນປີໜຶ່ງທີ່ກ້າວໄປສູ່ຄວາມມີສະຫງ່າລາສີ.

## 云南建工：扬帆远航

2014 年，在云南建工集团有限公司（以下简称云南建工）的历史上是不平凡的一年，是值得铭记的一年，是走向辉煌的一年。



ຄະນະການນຳຂອງບໍລິສັດວິສະວະກຳກໍ່ສ້າງຢູນນານ
云南建工领导班子



ວຽງຈັນເຊັນເຕີລາວ
老挝万象中心



ເຂດພັດທະນາກວມລວມໄຊເສດຖາລາວ--ເຂດໃຈກາງພາກຕາເວັນຕົກ
老挝赛色塔综合开发区——西部核心区

ປີ 2014,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດຜ່ານຜ່າຄວາມຫຍຸ້ງຍາກ,ຄົ້ນຫາຈຸດເຕີບໂຕອັນໃໝ່ໃນເສດຖະກິດຕະຫຼາດ,ຫັນປ່ຽນຮູບການພັດທະນາທີ່ເນັ້ນໃສ່ຄຸນນະພາບ ແລະ ປະສິດທິຜົນຢ່າງໝັ້ນທ່ຽງ, ແລະ ໄດ້ເປີດໜ້າໃໝ່ໃນປະຫວັດການພັດທະນາ.

ຕະຫຼາດແມ່ນມີໂອກາດຕໍ່ວິສາຫະກິດທີ່ມີຍຸດທະສາດອັນຈະແຈ້ງ,ປົດປ່ອຍແນວຄິດ ແລະ ມີຄວາມກ້າຫານເພື່ອກ້າວໄປໜ້າ.ທ່ານ ເສິນເວິນສ່ານ,ເລຂາຄະນະພັກທັງເປັນປະທານກຸ່ມບໍລິສັດ,ທ່ານ ລິວຢົງ,ຮອງເລຂາຄະນະພັກ,ຜູ້ອຳນວຍການໃຫຍ່ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ,ພ້ອມດ້ວຍຄະນະນຳກຸ່ມບໍລິສັດໃຫ້ຄວາມສຳຄັນໃນລະດັບສູງຕໍ່ການວາງແຜນຍຸດທະສາດການພັດທະນາ.ຄົນໃນກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດເຊື່ອໝັ້ນວ່າ,ມີແຕ່ກ້າທ້າທາຍ ແລະ ປະດິດສ້າງໃໝ່ຢ່າງບໍ່ຢຸດຢັ້ງ,ຈຶ່ງຈະສາມາດໄດ້ປຽບໃນສະພາບແວດລ້ອມທີ່ມີການແຂ່ງຂັນຢ່າງດຸເດືອດ. ໃນຂະບວນການພັດທະນາຕາມຫຼັກວິທະຍາສາດ,ເຂົາເຈົ້າໄດ້ອາໄສສະຕິປັນຍາຂອງລວມໝູ່ ແລະ ຄວາມພະຍາຍາມພ້ອມກັນຂອງພະນັກງານທັງຫຼາຍ,ສ້າງພາບພົດທີ່ດີ,ຍີ່ຫໍ້ຊື່ດັງແມ່ນມາຈາກຜົນສຳເລັດອັນດີເດັ່ນຢ່າງຄົບຖ້ວນຂອງເຂົາເຈົ້າ,ໃນປະຫວັດສາດໄດ້ບັນຈຸຜົນງານອັນໃຫຍ່ຫຼວງຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ.

ເມື່ອຫວນຄືນເຖິງປະຫວັດການພັດທະນາອັນສົດໃສຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດຈະໄດ້ເຫັນຜົນງານອັນດີເດັ່ນ.ປີ 2014,ພາຍໃຕ້ສະພາບການທີ່ເສດຖະກິດພາຍນອກມີທ່າອຽງພັດທະນາຊັກຊ້າລົງນັ້ນ,ຕົວເລກຄາດໝາຍດ້ານຕ່າງໆຂອງກຸ່ມບໍລິສັດໄດ້ຂຶ້ນສູ່ລະດັບສູງກວ່າເກົ່າ,ກາຍເປັນໄຂ່ມຸກອັນປະຈັກຕາໃນລັດວິສາຫະກິດດ້ານການກໍ່ສ້າງຂະໜາດໃຫຍ່ຢູ່ພາກຕາເວັນຕົກຂອງຈີນ.ພາຍໃຕ້ການຊີ້ນຳຂອງຍຸດທະສາດຫັນປ່ຽນຮູບແບບ ແລະ ຍົກລະດັບນັ້ນ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດມີກຳລັງສັງລວມເພີ່ມຂຶ້ນຢ່າງພົ້ນເດັ່ນ,ບົດບາດຂອງຍີ່ຫໍ້ສູງຂຶ້ນຢ່າງຕໍ່ເນື່ອງ.ໄດ້ຖືກຄັດເລືອກໃນການປະກວດເປັນ 500 ວິສາຫະກິດເຂັ້ມແຂງຂອງຈີນ 23 ເທື່ອລຽນຕິດ,ຢູ່ໃນອັນດັບທີ 295,ໂດຍເພີ່ມສູງຂຶ້ນ 23 ອັນດັບ;ໄດ້ເຂົ້າເປັນບໍລິສັດຮັບເໝົາໂຄງການສາກົນໃຫຍ່ທີ່ສຸດໃນໂລກທີ່ປະກວດຄັດເລືອກໂດຍ“ປຶ້ມບັນທຶກຂ່າວວິສະວະກຳ”ຂອງອາເມລິກາ 5 ເທື່ອລຽນຕິດ,ຢູ່ໃນອັນດັບທີ 166;ຕົວເລກດັດຊະນີຂ້າມແດນຢູ່ອັນດັບທີ 72 ໃນ 100 ບໍລິສັດຂ້າມແດນທີ່ເຂັ້ມແຂງຂອງຈີນ;ຢູ່ອັນດັບທີ 9 ໃນ 100 ບໍລິສັດເຂັ້ມແຂງຂອງແຂວງຢຸນນານ.

ເມື່ອຫວນຄືນເຖິງປະຫວັດການພັດທະນາອັນສົດໃສຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດຈະໄດ້ເຫັນວ່າ, ໂຄງການຢູ່ທັງພາຍໃນ ແລະ ຕ່າງປະເທດ,ມີໂຄງການລະດັບສູງຫຼາຍສິບລະບົບ,ເຊັ່ນ,ສະໜາມບິນ,ຕຶກອາຄານ(ຫຼາຍຊັ້ນ),ຫໍປະຊຸມ ແລະ ວາງສະແດງ,ສະໜາມກິລາ,ບຳບັດນ້ຳເປື້ອນ,ອຸດສາຫະກຳເຄມີນ້ຳມັນເຊື້ອໄຟ,ພື້ນຖານໂຄງລ່າງ ແລະ ອື່ນໆ.ໃນໂຄງການເຫຼົ່ານີ້,ມີໂຄງການສັນຍາລັກຫຼາຍໂຄງການ, ເຊັ່ນ:ສະໜາມບິນຊາງສຸຍຄຸນໝິງ,ສຳນັກງານຄະນະພັກແຂວງຢຸນນານ, ໂຄງການຍົກຍ້າຍປະຊາຊົນເມືອງສຸຍຈ່ຽງນະຄອນຈາວທົງ, ໂຄງການເສີມສ້າງຫໍປະຊຸມງານວາງສະແດງສິນຄ້າຈີນ-ອາຊີໃຕ້, ໂຄງການທໍ່ສົ່ງນ້ຳມັນ ແລະ ອາຍແກັສທຳມະຊາດຈີນ-ມຽນມາ,ສຳນັກງານລັດຖະບານກຳປູເຈຍ,ອາຄານສຳນັກງານໃຫຍ່ບໍລິສັດອາຍແກັສທຳມະຊາດແຫ່ງຊາດກີເນເສັ້ນສູນສູດ, ໂຄງການໂຮງແຮມກອງປະຊຸມສຸດຍອດອາຊຽນ 9 ຂອງລາວ, ເຂດພັດທະນາສັງລວມໄຊເສດຖານະຄອນຫຼວງວຽງຈັນ ແລະ ອື່ນໆ.

ໃນຊຸມປີມໍ່ໆມານີ້,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ສຳເລັດສິ່ງກໍ່ສ້າງປະເພດຕ່າງໆລວມເປັນເນື້ອທີ່ 94 ລ້ານກວ່າຕາແມັດ,ມີມູນຄ່າ 180 ຕື້ກວ່າຢວນ,ໄດ້ຮັບລາງວັນລູບ່ານດ້ານໂຄງການກໍ່ສ້າງ 21 ລາງວັນ,ລາງວັນທີ 2 ດ້ານໂຄງການຄຸນນະພາບດີລະດັບຊາດ 30 ລາງວັນ,ໄດ້ຮັບສະເໜີຊື່ເຂົ້າປະກວດລາງວັນໂຄງການໂຍທາຈ່ານທ່ຽນຢີ້ວ 1 ລາຍການ,ໂຄງການທີ່ລູກຄ້າເພິ່ງພໍໃຈລະດັບຊາດ 13 ລາງວັນ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີລະດັບຊາດ ແລະ ລະດັບແຂວງ 400 ກວ່າລາງວັນ,ລາງວັນໂຄງການຄຸນນະພາບດີລະດັບກະຊວງ 359 ລາງວັນ;ມີຄຸນວຸດທິດ້ານຂອບເຂດທຸລະກິດຫຼັກ ແລະ ທຸລະກິດເພີ່ມເຕີມຂອງວິສາຫະກິດວິສະວະກຳການກໍ່ສ້າງ 91 ຢ່າງ,ໃນນັ້ນ,ມີຄຸນວຸດທິລະດັບພິເສດທີ່ເປັນຜູ້ຮັບເໝົາໂຄງການກໍ່ສ້າງໂດຍລວມ 2 ຢ່າງ,ຄຸນວຸດທິລະດັບໜຶ່ງດ້ານການຮັບເໝົາລວມ ແລະ ຄຸນວຸດທິລະດັບໜຶ່ງດ້ານວິຊາການປະເພດຕ່າງໆ 60 ກວ່າຢ່າງ;ປະຈຸບັນມີສູນເຕັກນິກລະດັບຊາດ 1 ແຫ່ງ,ສູນເຕັກນິກລະດັບແຂວງ 7 ແຫ່ງ,ໄດ້ເປີດໂຄງການດຳເນີນງານຂອງບັນດິດ ແລະໂຄງການ

ເໜືອປະລິນຍາເອກ,ເຊິ່ງເປັນແຫ່ງທຳອິດໃນວິສາຫະກິດປະເພດວິສະວະກຳກໍ່ສ້າງຂອງພາກຕາເວັນຕົກຈີນ, ມີຜູ້ອາວຸໂສອອກແບບ 4 ຄົນ,ມີສິດທິບັດດ້ານປະດິດສ້າງ 13 ຢ່າງ,ສິດທິບັດອື່ນໆ 20 ຢ່າງ,ວິທີການກໍ່ສ້າງລະດັບຊາດ 32 ຢ່າງ,ການຜະລິດເບຕົງສະມັດຖະພາບສູງ ແລະ ປອດສານມົນລະພິດເຂົ້າສູ່ 10 ອັນດັບທຳອິດຂອງທົ່ວປະເທດ.

ປີ 2012,ໂຄງການກໍ່ສ້າງຍົກຍ້າຍປະຊາຊົນຂອງຈາວທົງໄດ້ສຳເລັດລົງຢ່າງສະດວກ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ສ້າງເມືອງສຸຍຈ່ຽງໃນເວລາບໍ່ຮອດໜຶ່ງປີ,5 ເມືອງນ້ອຍຢູ່ເຂດອ່າງເກັບນ້ຳຊ້ຽງເຈ່ຍປ້າ,6 ເມືອງນ້ອຍຢູ່ເຂດອ່າງເກັບນ້ຳຊີລົ້ວຕູ້ໄດ້ຍົກຍ້າຍໂດຍລວມ,ໂດຍຮັບປະກັນບ່ອນຢູ່ອາໄສຂອງປະຊາຊົນຍົກຍ້າຍ 6 ໝື່ນຄົນ,ອ່າງເກັບນ້ຳໄດ້ເລີ່ມເຮັດວຽກຕາມເວລາກຳນົດ,ເຊິ່ງໄດ້ສ້າງສະຖິຕິຄວາມໄວສູງໃນຂະແໜງການກໍ່ສ້າງ ແລະ ສ້າງເລື່ອງອັດສະຈັນໃນຂະແໜງການກໍ່ສ້າງ;ປີ 2014,ຢູ່ເມືອງຫຼູຕ້ຽນແຂວງຢຸນນານຫຼັງຈາກໄພແຜ່ນດິນໄຫວ"ວັນທີ 3 ສິງຫາ",ໄດ້ສຳເລັດໜ້າທີ່ສ້າງເຮືອນຊົ່ວຄາວ 1 ແສນ 6 ໝື່ນຕາແມັດກ່ອນເວລາກຳນົດ;ແຕ່ປີ 2012 ມາຮອດປະຈຸບັນ,ໄດ້ສຳເລັດການລົງທຶນສ້າງເຮືອນນະໂຍບາຍຫຼາຍກວ່າ 15 ຕື້ຢວນ,ມູນຄ່າເຮືອນນະໂຍບາຍທີ່ສ້າງສຳເລັດແລ້ວມີເຖິງ 12,35 ຕື້ຢວນ,ໂຄງການມີຢູ່ 10 ກົ່ວແຂວງ ແລະ ນະຄອນຂອງແຂວງຢຸນນານເຊິ່ງລວມທັງນະຄອນຄຸນໝິງ;ການສ້າງສຳເລັດຂອງເມືອງໃໝ່ວິສະວະກຳກໍ່ສ້າງ,ໄດ້ແກ້ໄຂບັນຫາທີ່"ກຳມະກອນກໍ່ສ້າງບໍ່ມີເຮືອນຢູ່ເອງ"ນັ້ນໃນຫຼາຍສິບປີມານີ້,ເຮັດໃຫ້ຄວາມຝັນຂອງຄົນກຸ່ມບໍລິສັດຫຼາຍຮຸ່ນຄົນປາກົດຜົນເປັນຈິງ,ເຮັດໃຫ້ພະນັກງານທັງຫຼາຍຮ່ວມກັນຊົມໃຊ້ໝາກຜົນແຫ່ງການປະຕິຮູບ ແລະ ການພັດທະນາຂອງກຸ່ມບໍລິສັດ,ນຳພາຊາວກະສິກອນຜູ້ເຮັດວຽກໃນຕົວເມືອງ 1 ແສນກວ່າຄົນກ້າວສູ່ຄວາມອີ່ມໜຳສຳລານ.



ຕ້າເຊີນໂຖຕົງ
拓东大城

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ເລັ່ງລັດຫັນຈາກການຮັບເໝົາກໍ່ສ້າງໂຄງການແຕ່ຢ່າງດຽວມາເປັນກຸ່ມບໍລິສັດກໍ່ສ້າງຂະໜາດໃຫຍ່ທີ່ກວມລວມການລົງທຶນ,ການລະດົມທຶນ,ການພັດທະນາອະສັງຫາລິມະຊັບ ແລະ ການຮັບເໝົາກໍ່ສ້າງໂຄງການ.

ໃນດ້ານໜຶ່ງ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ສະເໜີທັດສະນະທຸລະກິດໂດຍເປັນກຸ່ມຄະນະ,ເສີມຂະຫຍາຍທ່າແຮງທີ່ເປັນກຸ່ມຄະນະ,ເພີ່ມທະວີການຮ່ວມມືຍຸດທະສາດກັບກຸ່ມບໍລິສັດ,ອົງກອນການທະນາຄານ ແລະ ພາກສ່ວນລັດຖະບານຕ່າງໆ,ຫັນຈາກທຸລະກິດດ້ານໂຄງການເປັນທຸລະກິດດ້ານຊັບພະຍາກອນ.ທົ່ວກຸ່ມບໍລິສັດໄດ້ສຸມກຳລັງຢ່າງແຂງແຮງ,ໂດຍຜ່ານຈາກທ່າແຮງດ້ານຕ່າງໆ,ເຊັ່ນ:ຍີ່ຫໍ້,ເຕັກນິກ,ການບໍລິຫານ,ຜູ້ມີຄວາມຮູ້ຄວາມສາມາດ ແລະ ທຶນຮອນ,ຍົກສູງຂະໜາດທຸລະກິດ,ຂອບເຂດທຸລະກິດ,ລະດັບທຸລະກິດ ແລະ ຄຸນນະພາບທຸລະກິດຂອງກຸ່ມບໍລິສັດ,ເພີ່ມທະວີກຳລັງແຂ່ງຂັນແກ່ນກາງ ແລະ ຄວາມສາມາດພັດທະນາແບບຕໍ່ເນື່ອງ,ພັດທະນາເປັນກຸ່ມຄະນະໃຫຍ່,ທຸລະກິດຂະໜາດໃຫຍ່ ແລະ ກ້າວກະໂດດອັນໃຫຍ່ຫຼວງ.ປະຈຸບັນ,ມູນຄ່າສັນຍາທຸລະກິດເກືອບ 60% ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນມາຈາກຜົນການຮ່ວມມືຍຸດທະສາດທີ່ເປັນກຸ່ມຄະນະ.

ອີກດ້ານໜຶ່ງ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ກຳໂອກາດຕະຫຼາດຢ່າງທັນການ,ຍຶດໝັ້ນຖືການລົງທຶນເປັນສິ່ງນຳພາ,ບັນລຸການເລື່ອນລະດັບຂຶ້ນເປັນຮູບການທີ່ຜະລິດຕະກຳກັບການທະນາຄານພັດທະນາພ້ອມກັນ.ໃນຊຸມປີມໍ່ໆມານີ້,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ຖືການລະດົມທຶນເປັນວຽກງານສຳຄັນທີ່ສຸດ.ໄດ້ສ້າງ 5 ເວທີລົງທຶນ ແລະ ລະດົມທຶນ,ຄື:ສຳນັກງານໃຫຍ່ຂອງກຸ່ມບໍລິສັດ,ບໍລິສັດລົງທຶນກໍ່ສ້າງຕົວເມືອງ ແລະ ຊົນນະບົດແຂວງຢຸນນານ,ກຸ່ມບໍລິສັດພັດທະນາອະສັງຫາລິມະຊັບແຂວງຢຸນນານ,ບໍລິສັດລົງທຶນຕ່າງປະເທດ ແລະ ມູນນິທິລົງທຶນສິດຫຸ້ນສ່ວນ,ວາງແຜນການລົງທຶນໃນ 7 ຂົງເຂດເປັນຢ່າງດີ,ຄື:

ເຮືອນນະໂຍບາຍ,ເຂດເຮືອນຕູບເກົ່າ,ອະສັງຫາລິມະຊັບ,ຕະຫຼາດຕ່າງປະເທດ,ການລົງທຶນລັກສະນະທຸລະກິດ, ສິດຫຸ້ນສ່ວນ ແລະ ການລົງທຶນໃນຊັບສິນຄົງທີ່ທີ່ສຳຄັນ, ສະພາບການທຸລະກິດທີ່ເນັ້ນໃສ່ຜະລິດຕະກຳ ແລະ ການທະນາຄານຂອງກຸ່ມບໍລິສັດໄດ້ປາກົດຕົວຂຶ້ນຕື່ມອີກ.

ການດຳເນີນທຸລະກິດເປັນກຸ່ມຄະນະ ແລະ ເນັ້ນໃສ່ຜະລິດຕະກຳ ແລະ ການທະນາຄານທີ່ເປັນແຮງຊຸກຍູ້ສອງຢ່າງນັ້ນ,ເຮັດໃຫ້ໂຄງການຜະລິດຕະກຳຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ເປີດກວ້າງອອກ ແລະ ປັບປຸງດີຂຶ້ນ ແລະ ໄດ້ເລື່ອນລະດັບໃຫ້ສູງຂຶ້ນອີກ.ໃນການກໍ່ສ້າງເຮືອນນະໂຍບາຍ ແລະ ປັບປຸງເຂດເຮືອນຕູບເກົ່າ,ບໍລິສັດລົງທຶນກໍ່ສ້າງຕົວເມືອງ ແລະ ຊົນນະບົດແຂວງຢຸນນານທີ່ຂຶ້ນກັບກຸ່ມບໍລິສັດນັ້ນ, ປີ 2012 ໄດ້ສ້າງເຮືອນນະໂຍບາຍ 1 ແສນ 2 ໝື່ນ 5 ແສນຊຸດ,ປີ 2013 ໄດ້ສ້າງເຮືອນນະໂຍບາຍ 6 ໝື່ນກວ່າຊຸດ,ມູນຄ່າລົງທຶນມີປະມານ 11,495 ຕື້ຢວນ;ປີ 2014, ແຜນການລົງທຶນໃນໂຄງການເຮືອນນະໂຍບາຍເປັນມູນຄ່າ 20 ຕື້ຢວນ,ປະຈຸບັນໄດ້ລົງມືກໍ່ສ້າງຢ່າງຮອບດ້ານແລ້ວ.ກຸ່ມບໍລິສັດໄດ້ສະແດງໃຫ້ເຫັນກຳລັງແຮງແຫ່ງການພັດທະນາໃນການປັບປຸງເຂດເຮືອນຕູບເກົ່າຂອງແຂວງຢຸນນານ,ໄດ້ລະດົມທຶນປະມານ 60 ຕື້ຢວນ,ເຊິ່ງສ່ອງແສງເຖິງຄວາມສາມາດອັນເຂັ້ມແຂງໃນການລົງທຶນ ແລະ ລະດົມທຶນ.ພ້ອມກັນນັ້ນ,ຍັງໄດ້ສ້າງພື້ນຖານທຸລະກິດຫຼັກໃຫ້ໜັກແໜ້ນ,ປັບປຸງຂົງເຂດວິຊາການໃຫ້ເຂັ້ມແຂງຂຶ້ນ,ປັບປຸງໂຄງປະກອບຕະຫຼາດ ແລະ ໂຄງປະກອບຜະລິດຕະກຳໃຫ້ດີຂຶ້ນ,ເຊິ່ງມີສິ່ງຄ້ຳປະກັນຫຼາຍດ້ານ ແລະ ພັດທະນາແບບຫຼາຍເຄົ້າ.ໂດຍຢູ່ບົນເສັ້ນທາງດັ່ງກ່າວ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ປະຕິບັດພຶດຕິກຳທີ່ໂດດເດັ່ນຢ່າງບໍ່ຢຸດຢັ້ງ.

ກຸ່ມບໍລິສັດໄດ້ສະເໜີອອກຢ່າງຈະແຈ້ງວ່າ,ຈະຫັນຈາກວິສາຫະກິດທີ່ມີແຕ່ທຸລະກິດຮັບເໝົາໂຄງການຢ່າງດຽວພັດທະນາເປັນສະພາບການທີ່ມີການລົງທຶນ ແລະ ການລະດົມທຶນ,ອະສັງຫາລິມະຊັບ ແລະ ການຮັບເໝົາໂຄງການກໍ່ສ້າງທັງໝົດ 3 ຢ່າງພັດທະນາພ້ອມກັນ,ສ້າງເປັນກຸ່ມບໍລິສັດກໍ່ສ້າງຂະໜາດໃຫຍ່ທີ່ມີຄວາມສາມາດດ້ານການອອກແບບ,ຄົ້ນຄວ້າວິທະຍາສາດ,ປະຕິບັດການກໍ່ສ້າງ,ໃຫ້ຄຳປຶກສາ,ການລົງທຶນ ແລະ ລະດົມທຶນເຊື່ອມໂຍງເຂົ້າກັນ,ມີໂຄງປະກອບຜະລິດຕະກຳຫຼາຍລະດັບ,ມີກຳລັງແຂ່ງຂັນສັງລວມ ແລະ ອິດທິພົນສາກົນ.

ໃນດ້ານການພັດທະນາອະສັງຫາລິມະຊັບທີ່ເປັນທຸລະກິດຫຼັກອັນດັບສອງ,ບໍລິສັດພັດທະນາອະສັງຫາລິມະຊັບແຂວງຢຸນນານທີ່ສັງກັດກຸ່ມບໍລິສັດໄດ້ກາຍເປັນບໍລິສັດອະສັງຫາລິມະຊັບທີ່ມີຄຸນວຸດທິພັດທະນາອະສັງຫາລິມະຊັບລະດັບ 1,ປະຈຸບັນ,ໄດ້ຕັ້ງຈຸດຢືນຢູ່ນະຄອນຄຸນໝິງ ແລະ ແຜ່ຂະຫຍາຍໄປສູ່ກິ່ງແຂວງ ແລະ ນະຄອນຕ່າງໆ,ພວມພັດທະນາໂຄງການ 10 ກວ່າໂຄງການ.

ເພື່ອບູລະນະຕ່ອງໂສ້ຜະລິດຕະກຳ,ຍົກສູງກຳລັງແຂ່ງຂັນສັງລວມ,ເລັ່ງລັດຊຸກຍູ້ຫັນປ່ຽນຮູບການພັດທະນາ ແລະ ຍົກລະດັບໃຫ້ສູງຂຶ້ນ,ກຸ່ມບໍລິສັດໄດ້ອອກແຮງພັດທະນາຫຼາຍຂົງເຂດວິຊາການ,ເຊັ່ນ,ຊົນລະປະທານ,ໄຟຟ້ານ້ຳຕົກ,ຕິດຕັ້ງອຸປະກອນ,ໂຄງຮ່າງເຫຼັກ,ໂຄງການເຄຫະສະຖານ,ພື້ນຖານສ້າງເຮືອນ,ເບຕົງ,ວັດແທກອອກແບບ,ໃຫ້ຄຳປຶກສາດ້ານເຕັກນິກ,ຄົ້ນຄວ້າເຕັກນິກການກໍ່ສ້າງ,ວິທະຍາສາດເຕັກໂນໂລຊີຂອງວັດສະດຸກໍ່ສ້າງ,ການບໍລິການແຮງງານກໍ່ສ້າງ,ມູນນິທິສິດຫຸ້ນສ່ວນ ແລະ ອື່ນໆ.ໂຄງປະກອບຜະລິດຕະກຳໄດ້ກວມລວມທົ່ວຂອບເຂດຂະແໜງການກໍ່ສ້າງ,ຕ່ອງໂສ້ຜະລິດຕະກຳເປີດກວ້າງໄປສູ່ທັງສອງເບື້ອງ,ຕ່ອງໂສ້ແຫ່ງກຳໄລກາຍເປັນໂຄຈອນວົງປິດທີ່ມີປະສິດທິຜົນສູງ.

ໂດຍຜ່ານຈາກການລົງທຶນເພື່ອເພີ່ມທະວີສິດປະກອບຄຳເຫັນໃນຕະຫຼາດ,ຜ່ານຈາກການຊຸກຍູ້ຜະລິດຕະກຳກັບການລົງທຶນ ແລະ ການລະດົມທຶນເພື່ອຊຸກຍູ້ທຸລະກິດຫຼັກ,ການໝູນວຽນດ້ານທຶນຮອນ ແລະ ການພັດທະນາຂອງທຸລະກິດຮູບປະທຳໄດ້ກາຍເປັນການໝູນວຽນທີ່ຄ້ຳຊູເຊິ່ງກັນ ແລະ ກັນເປັນຢ່າງດີ.ປະຈຸບັນ,ກຸ່ມບໍລິສັດໄດ້ພົ້ນອອກຈາກສະພາບການດຳເນີນທຸລະກິດທີ່ເປັນຜູ້ຮັບເໝົາໂຄງການແຕ່ຢ່າງດຽວ,ໄດ້ມີບາດກ້າວນັບມື້ນັບໄວຂຶ້ນບົນເສັ້ນທາງພັດທະນາແບບກ້າວກະໂດດທີ່ກາຍເປັນກຸ່ມບໍລິສັດກໍ່ສ້າງຂະໜາດໃຫຍ່ທີ່ມີການລົງທຶນການລະດົມທຶນ,ອະສັງຫາລິມະຊັບ ແລະ ຮັບເໝົາໂຄງການໂດຍລວມໂດຍເຊື່ອມໂຍງເຂົ້າເປັນເອກະພາບດຽວ.

ພາຍໃນການຮຽກຮ້ອງຂອງຍຸດທະສາດ“ກ້າວສູ່ພາຍນອກ”ຂອງລັດ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ກ້າວສູ່ຕະຫຼາດສາກົນ ແລະ ໄດ້ສ້າງຊື່ສຽງດົງດັງໃນສາກົນ.

ໂດຍຜ່ານຄວາມພະຍາຍາມຫຼາຍປີ,ປະຈຸບັນກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ວາງແຜນຜັງບຸກເບີກຕະຫຼາດສາກົນ,ໂດຍມີ 3 ຕະຫຼາດໃຫຍ່ຢູ່ຕ່າງປະເທດ,ຄື:ອາຊີຕາເວັນອອກສຽງໃຕ້,ອາຊີໃຕ້ ແລະ ເຂດຕາເວັນອອກກາງ,ອາຟຼິກາ.ປະຈຸບັນນີ້,ກຸ່ມບໍລິສັດໄດ້ສ້າງໂຄງການທີ່ມີລັກສະນະສັນຍາລັກຈຳນວນຫຼວງຫຼາຍຢູ່ 3 ຕະຫຼາດໃຫຍ່ດັ່ງກ່າວ.ໃນເວລາ 3 ປີຜ່ານມາ,ກຸ່ມບໍລິສັດປະມູນໄດ້ໂຄງການຕ່າງປະເທດ 49 ໂຄງການ,ມູນຄ່າທຸລະກິດປີ 2012 ສູງກວ່າ 4,5 ຕື້ຢວນ,ປີ 2013 ມີເຖິງ 6 ຕື້ຢວນ,ເນື້ອທີ່ຂອງໂຄງການທີ່ສ້າງສຳເລັດແລ້ວມີເຖິງ 1 ແສນ 3 ໝື່ນຕາແມັດ,ປະຈຸບັນມູນຄ່າສັນຍາໂຄງການທີ່ກຳລັງກໍ່ສ້າງຢູ່ມີປະມານ 7,5 ຕື້ຢວນ,ອັດຕາສ່ວນຂອງທຸລະກິດສາກົນເພີ່ມຂຶ້ນຢ່າງຫຼວງຫຼາຍ.ໄດ້ຫັນຈາກໂຄງການໜຶ່ງດຽວກາຍມາເປັນກຸ່ມໂຄງການຄົບຊຸດ,ຫັນຈາກການຮ່ວມມືດ້ານໂຄງການກາຍເປັນການຮ່ວມມືດ້ານຍຸດທະສາດ,ການເຊັນສັນຍາລົງທຶນ ແລະ ລະດົມທຶນເພີ່ມຂຶ້ນທຸກປີ,ກໍ່ໄດ້ຊຸກຍູ້ການສົ່ງອອກວັດສະດຸກໍ່ສ້າງ,ເຕັກນິກອອກແບບ ແລະ ແຮງງານຕໍ່ຕ່າງປະເທດ,ແລະ ໄດ້ຮັບໃບສັ່ງທີ່ມີມູນຄ່າສູງຫຼາຍກວ່າເກົ່າໃຫ້ແກ່ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ.ກຸ່ມບໍລິສັດໄດ້ຍົກລະດັບຄວາມສາມາດບໍລິຫານດ້ານການຮັບເໝົາໂຄງການໂດຍລວມ,ການລົງທຶນ ແລະ ການລະດົມທຶນສາກົນໃນພຶດຕິກຳຕົວຈິງທີ່ເປີດກວ້າງຕະຫຼາດຕ່າງປະເທດ,ໄດ້ມີຄວາມສາມາດອັນດີເດັ່ນໃນທຸລະກິດ,ຄຸ້ມຄອງ,ເຕັກນິກ,ທຶນຮອນ ແລະ ການຄ້າໃນຫຼາຍດ້ານຫຼາຍຂົງເຂດ,ເຊັ່ນ,ອອກແບບ,ປະຕິບັດການກໍ່ສ້າງ,ບໍລິການ,ຈັດຊື້ສິນຄ້າຂ້າມແດນ,ດຳເນີນທຸລະກິດ ແລະ ລະດົມທຶນເປັນຕົ້ນ.ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ຮ່ວມມືກັບວິສາຫະກິດຂອງປະເທດຕ່າງໆ,ຮ່ວມກັບລັດຖະບານປະເທດຕ່າງໆພ້ອມກັນພັດທະນາໂຄງການ ແລະ ໄດ້ສ້າງມິດຕະພາບອັນເລິກເຊິ່ງກັບປະຊາຊົນປະເທດຕ່າງໆ.

文 / 楚 然 图 /CFP

# ລະດູແຫ່ງຫິມະ ແລະ ນ້ຳກ້ອນມະໄປຫລິ້ນສະກີຢູ່ພູຊາງໄບ

### 冰雪季到长白山滑雪去

进入每年的 11 月，紧邻长白山天池西坡的万达长白山国际滑雪场便又迎来了近半年的滑雪期。这期间，众多的滑雪旅游者会选择到这里休闲度假，一边感受大自然的冰雪魅力，一边在滑雪场里体验一场速度与激情的运动。

ພໍເຂົ້າສູ່ເດືອນ ພະຈິກ ຂອງທຸກປີ,ສະໜາມສະກີສາກົນພູຊາງໄບວ້ານຕາທີ່ແປະກັບເປີ້ນພູຕາເວັນຕົກຂອງໜອງທ່ຽນຊືພູຊາງໄບນັ້ນກໍ່ເຂົ້າສູ່ໄລຍະຫຼິ້ນສະກີເປັນເວລາເກືອບເຄິ່ງປີ.ໃນໄລຍະນີ້,ຜູ້ມັກຫຼິ້ນສະກີຈຳນວນຫຼວງຫຼາຍຈະເລືອກມາພັກຜ່ອນຢູ່ນີ້,ສຳຜັດກັບຄວາມມີສະເໜ່ຂອງຫິມະ ແລະ ນ້ຳກ້ານແບບທຳມະຊາດ,ທັງຫຼິ້ນກິລາສະເກັດທີ່ເຕັມໄປດ້ວຍຄວາມຕື່ນເຕັ້ນຂອງຄວາມໄວໃນສະໜາມສະກີ.

ສະໜາມສະກີສາກົນພູຊາງໄບວ້ານຕາ,ຕັ້ງຢູ່ບ່ອນເຊື່ອມຈອດກັນຂອງກະແສອາກາດລັກສະນະທະເລຂອງ





ທະເລຍີ່ປຸ່ນກັບດິນຟ້າອາກາດນໍລະສູນຊີເບເຣຍ,ປະລິມານຫິມະຕົກຫຼາຍ,ໄລຍະການຫຼິ້ນສະກີແມ່ນຈາກຕົ້ນເດືອນ ພະຈິກ ຮອດກາງເດືອນ ເມສາ ຂອງປີຕໍ່ໄປ,ເຊິ່ງມີຫິມະສະສົມໄວ້ເປັນເວລາຍາວເຖິງ 140 ວັນ.ສະໜາມສະກີກວມເນື້ອທີ່ 7 ກິໂລຕາແມັດ,ມີພູດອຍອ້ອມຮອບຢູ່ 3 ດ້ານ,ເຊິ່ງມີພູມສັນຖານເປັນບ່ອນລີ້ລົມແຮງ,ບວກກັບວ່າມີແສງແດດເປັນເວລາຍາວຫຼາຍແດ່,ເຊິ່ງປາກົດເປັນດິນຟ້າອາກາດທີ່ມີແສງແດດອົບອຸ່ນໃນລະດູໜາວ,ອຸນຫະພູມ ແລະ ຄວາມຊຸ່ມຊື່ນພໍດ້ານພໍດີ,ເຮັດໃຫ້ຜູ້ຫຼິ້ນສະກີສາມາດປາສະຈາກລົມໜາວຂອງລະດູໜາວ ແລະ ສຳຜັດກັບຄວາມມ່ວນຊື່ນຂອງການຫລິ້ນສະກີ.

ຢູ່ໃນສະໜາມສະກີແຫ່ງນີ້ມີທາງສະກີລະດັບສູງ,ລະດັບກາງ ແລະ ລະດັບເບື້ອງຕົ້ນທັງໝົດ 43 ສາຍ,ມີທາງສະກີມາດຕະຖານຂອງງານກິລາໂອລິມປິກລະດູໜາວ 9 ສາຍ,ເຊິ່ງລວມທັງພູມສັນຖານຫຼາຍຊະນິດ,ໃນນັ້ນມີສະໜາມສະກີຮູບໂຕ U ສຳລັບແປ້ນດ່ຽວຕາມມາດຕະຖານສາກົນ,ສວນຫຼິ້ນສະກີແປ້ນດ່ຽວ,ສະໜາມສະກີສຳລັບເດັກນ້ອຍ ແລະ ລາຍການອື່ນໆ;ຢູ່ແຄມທາງສະກີຈຳນວນໜຶ່ງໄດ້ຕັ້ງໄຟເຍືອງທາງ,ຖ້າວ່ານັກຫຼິ້ນສະກີໃນຕອນຄ່ຳ,ກໍ່ສາມານຫຼິ້ນໄດ້ຢູ່ແຫ່ງນີ້.ຢູ່ໃນສະໜາມສະກີແຫ່ງນີ້ຍັງມີກຸ່ມອູ່ໄຟຟ້າລະດັບກ້າວໜ້າທີ່ນຳເຂົ້າຈາກຕ່າງປະເທດ,ຢູ່ສະໜາມສະກີລະດັບເບື້ອງຕົ້ນໄດ້ຕິດຕັ້ງເຄື່ອງຂົນສົ່ງດ້ວຍສາຍພານ.ເມື່ອນັ່ງຢູ່ໃນອູ່ແບບປິດລ້ອມ,ສາມາດເບິ່ງຊົມສິ່ງກໍ່ສ້າງ ແລະ ປ່າໄມ້ທີ່ປົກຫຸ້ມ



ດ້ວຍຫີມະຢູ່ອ້ອມອ້າງສະໜາມສະກີ້.ຈອມພູໄບຢຸນທີ່ເປັນຈອມພູຫຼັກຂອງສາຍພູຊາງໄບຢູ່ທິດຕາເວັນອອກຂອງສະໜາມສະກີ້,ສາມາດເຫັນໄດ້ຢ່າງຈະແຈ້ງພາຍໃຕ້ແສງແດດອັນອົບອຸ່ນ.

ຫີມະຢູ່ເທິງພູຊາງໄບທັງເບົາທັງອ່ອນ,ຂາວສະອາດບໍລິສຸດ,ມອງໄປແລ້ວຈະໄດ້ເຫັນວ່າດິນແດນແຜ່ນນີ້ແມ່ນປົກຫຸ້ມດ້ວຍຫີມະຂາວຈ່ານຜ່ານ,ເມື່ອລົມພັດມາ,ຕົ້ນໄມ້ທີ່ມີຫີມະຕິດກິ່ງງ່ານັ້ນປຽບເໝືອນຄື້ນທະເລທີ່ຂາວຈູນພູນ.ຊັບພະຍາກອນປ່າໄມ້ຢູ່ໃນສາຍພູຊາງໄບ,ໄດ້ເພີ່ມຄວາມລຶກລັບຂອງກິລາສະກີ,ເມື່ອສະກີຢູ່ທ່າມກາງປ່າໄມ້ທີ່ມີອາຍຸມາດົນນານແລ້ວ,ຈະມີຄວາມຮູ້ສຶກພິເສດທີ່ຕ່າງກັນກັບຢູ່ສະໜາມສະກີທຳມະດາ.

ນອກຈາກຊົມທິວທັດຫີມະທີ່ສວຍງາມແບບອັດສະຈັນ ແລະ ສຳຜັດກັບທາງສະກີ້ໃນລະດັບຄວາມຫຍຸ້ງຍາກຕ່າງໆແລ້ວ,ເມືອງນ້ອຍທີ່ປານິດໜ້າຮັກຈະຜ່ອນຄາຍຄວາມອິດເມື່ອຍຫຼັງຈາກການຫຼິ້ນສະກີ້.ຢູ່ເມືອງນ້ອຍແຫ່ງນີ້,ໄດ້ເຕົ້າໂຮມການຈັດຊື້ສິນຄ້າ,ການພັກຜ່ອນຢ່ອນອາລົມ,ຮ້ານອາຫານ,ຮ້ານບັນເທີງ ແລະ ວັດທະນະທຳໃຫ້ເຊື່ອມໂຍງເຂົ້າກັນ,ສິ່ງກໍ່ສ້າງແບບເອີຣົບປະຈັກຕາທີ່ສຸດພາຍໃຕ້ການປະດັບຂອງຫີມະຂາວຈູນພູນ ແລະ ປ່າໄມ້ທຳມະຊາດ,ຜູ້ທີ່ມາພັກຜ່ອນ ແລະ ຫຼິ້ນສະກີຢູ່ນີ້ສາມາດຢູ່ໃກ້ກັບທຳມະຊາດທັງສາມາດສຳຜັດກັບຄວາມມ່ວນຊື່ນແລະຊຸມແຊວໃນຕົວເມືອງອີກດ້ວຍ.







文/楚 然 图/CFP



# ຮູບປັ້ນ"ລຸງກະຕ່າຍ"ຂອງປັກກິ່ງ

## 老北京兔爷泥塑

兔爷是老北京特有的一种以兔首人身为基本形式的彩绘泥塑，至今已有数百年的历史。在北京人的眼里，兔爷是最有北京特色的吉祥物。

"ລຸງກະຕ່າຍ"ເປັນຮູບປັ້ນລາຍສີຊະນິດໜຶ່ງທີ່ເປັນຫົວກະຕ່າຍ ແລະ ຮ່າງກາຍມະນຸດ,ເຊິ່ງເປັນຮູບປັ້ນພິເສດຂອງປັກກິ່ງ,ມາຮອດປະຈຸບັນໄດ້ມີປະຫວັດຫຼາຍຮ້ອຍປີແລ້ວ.ໃນສາຍຕາຂອງຄົນປັກກິ່ງ,"ລຸງກະຕ່າຍ"ເປັນສິ່ງນຳໂຊກທີ່ມີສີສັນພິເສດຂອງປັກກິ່ງ.

ກ່ຽວກັບທີ່ມາຂອງ"ລຸງກະຕ່າຍ"ມີເລື່ອງເລົ່າແບບໜຶ່ງ,ແຕ່ກ່ອນຢູ່ປັກກິ່ງໄດ້ເກີດພະຍາດຕິດແປດຢ່າງຮ້າຍແຮງ,ເທບທິດາຊາງເອີຢູ່ໃນຫໍກວາງຮານຢູ່ເທິງດວງພະຈັນນັ້ນໄດ້ເຫັນຄວາມຫຍຸ້ງຍາກລຳບາກຂອງມະນຸດ,ຈຶ່ງໄດ້ສົ່ງກະຕ່າຍສັກສິດລົງສູ່ໂລກມະນຸດເພື່ອຊ່ວຍເຫຼືອປິ່ນປົວປະຊາຊົນ.ກະຕ່າຍສັກສິດໂຕນີ້ຂີ່ກວາງ ແລະ ເສືອ,ໄປແຈກຢາຍຢາສີຂາວ ແລະ ສີແດງໃຫ້ປະຊາຊົນຢູ່ໃນເມືອງ ແລະ ນອກເມືອງ ແລະ ໄດ້ປິ່ນປົວພະຍາດຕິດແປດໃຫ້ຫາຍເປັນປົກກະຕິ.ຫຼັງຈາກນັ້ນ,ກະຕ່າຍສັກສິດກໍ່ກັບຄືນສູ່ຫໍກວາງຮານຢູ່ເທິງດວງພະຈັນ.ດັ່ງນັ້ນປະຊາຊົນຈຶ່ງແຕ່ງຮູບປັ້ນຂອງກະຕ່າຍສັກສິດ,ມີຮູບຂີ່ກວາງ,ຮູບຂີ່ນົກຫົງ,ຮູບໃສ່ເສື້ອເກາະ,ກໍ່ມີຮູບໃສ່ເສື້ອກຳມະກອນຊະນິດຕ່າງໆ,ເຊິ່ງມີຊີວິດຊີວາ ແລະ ເປັນຕາຮັກທີ່ສຸດ.ພໍຮອດມື້ຂຶ້ນ 15 ຄ່ຳເດືອນແປດຕາມຈັນທະຄະຕິຈີນ,ແຕ່ລະຄອບຄົວຈະກຽມໝາກໄມ້ ແລະ ຜັກເພື່ອກາບໄຫວ້ກະຕ່າຍສັກສິດ,ເພື່ອສະແດງຄວາມຂອບອົກຂອບໃຈນຳເພິ່ນທີ່ໄດ້ນຳເອົາຄວາມເປັນສິລິມຸງຄຸນ ແລະ ຄວາມຜາສຸກໃຫ້ແກ່ໂລກມະນຸດ,ທັງເອີ້ນເພິ່ນເປັນ"ລຸງກະຕ່າຍ"ຫຼື"ແມ່ເຖົ້າກະຕ່າຍ"ຢ່າງສະໜິດສະໜົມ.ຕັ້ງແຕ່ລາຊະວົງໝິງເປັນຕົ້ນມາ,ປະຊາຊົນປັກກິ່ງກໍ່ມີຮີດຄອງປະເພນີທີ່ເຊີນ"ລຸງກະຕ່າຍ"ເຂົ້າສູ່ເຮືອນຕົນເອງ ແລະ ຕ້ອນ"ລຸງກະຕ່າຍ"ໃຫ້ແກ່ພີ່ນ້ອງໝູ່ເພື່ອນ,ການເຊີນ"ລຸງກະຕ່າຍ"ໝາຍເຖິງນຳເຂົ້າຄວາມສະຫງົບສຸກ,ການຕ້ອນ"ລຸງກະຕ່າຍ"ໝາຍເຖິງຝາກຄວາມຜາສຸກ ແລະ ຄວາມສິລິມຸງຄຸນໃຫ້ແກ່ກັນ.

ຮູບປັ້ນຂອງ"ລຸງກະຕ່າຍ"ແມ່ນເນັ້ນໃສ່ຄວາມສະຫງ່າງາມຂອງການນຸ່ງຖື ແລະ ທ່າທາງຢູ່ເທິງໃບໜ້າ,ສ່ວນຫຼາຍແມ່ນສ່ອງຕາເບິ່ງຊື່ໆໄປທາງໜ້າ,ສົບແວ່ງຍຸ້ມ,ຢູ່ເທິງໃບໜ້າທາແປ້ງໜ້ອຍໜຶ່ງ,ໃນຄວາມງາມກໍ່ມີຄວາມສະຫງ່າຜ່າເຜີຍ,ໃນຄວາມຄ່ຽມຄົມກໍ່ມີລັກສະນະຄວາມເປັນເດັກ,ມີຊີວິດຊີວາໜ້າຮັກຫຼາຍ.ປະຈຸບັນ,ຮູບປັ້ນ"ລຸງກະຕ່າຍ"ທີ່ເຫັນເລື້ອຍໆນັ້ນສາມາດແບ່ງອອກເປັນປະເພດຕົວລະຄອນງິ້ວ ແລະ ປະເພດຊີວິດປະຈຳວັນ.ໃນປະເພດຕົວລະຄອນງິ້ວນັ້ນບໍ່ວ່າໜ້າກາກ ຫຼືການນຸ່ງຖືແມ່ນສະຫງ່າຜ່າເຜີຍ;ສຳລັບປະເພດຊີວິດປະຈຳວັນ,ຕົວຢ່າງວ່າ,ຜູ້ຂາຍເຂົ້າໜົມ,ຜູ້ຂາຍນ້ຳຊາ ແລະ ອື່ນໆ,ສະແດງໃຫ້ເຫັນກຸ່ມຄົນຕ່າງໆໃນສັງຄົມ.ເຖິງວ່າມີຮູບຊົງ ແລະ ທ່າທາງຕ່າງກັນກໍ່ຕາມ,ແຕ່ຫູຍາວໆ,ສົບແວ່ງ ແລະ ທ່າທາງໜ້າຊົມຊື່ນນັ້ນເປັນສັນຍາລັກພິເສດຂອງ"ລຸງກະຕ່າຍ".

ປະຈຸບັນນີ້,"ລຸງກະຕ່າຍ"ນອກຈາກມີຄວາມໝາຍຂັບໄລ່ສິ່ງທີ່ບໍ່ດີ,ອວຍພອນຄວາມເປັນສິລິມຸງຄຸນແລ້ວນັ້ນ,ຍັງກາຍເປັນນາມບັດດ້ານວັດທະນະທຳຂອງປັກກິ່ງ,"ລຸງກະຕ່າຍ"ທີ່ມີຮູບຊົງຕ່າງໆຢ່າງງາມປານີດບໍ່ພຽງແຕ່ໄດ້ກ້າວອອກໄປຖະໜົນຫົນທາງເຂົ້າໄປສູ່ຮ້ານຄ້າ ແລະ ສະຖານທີ່ວັດທະນະທຳຊະນິດຕ່າງໆເທົ່ານັ້ນ,ຍັງໄດ້ກ້າວອອກຈາກປັກກິ່ງໄປຕ່າງປະເທດ,ເປັ່ງຄວາມມີສະເໜ່ໃນສາຍຕາຂອງຄົນຕ່າງປະເທດນຳອີກ.



文/楚 然

# ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນ

## 中国矿业大学

中国矿业大学坐落于江苏省徐州市，是一所具有一百多年办学历史、特色鲜明的多科性研究型高水平大学，对中国煤炭能源行业和地方经济社会发展发挥着不可替代的引领和支撑作用。

ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນຕັ້ງຢູ່ນະຄອນຊູໂຈ່ວແຂວງຈ່ຽງຊູ່ຈີນ,ເປັນມະຫາວິທະຍາໄລແບບຄົ້ນຄວ້າທີ່ມີຫຼາຍວິຊາ,ມີປະຫວັດສາດ 100 ກວ່າປີແລ້ວ ແລະ ມີສີສັນພິເສດອັນພົ້ນເດັ່ນ,ມີບົດບາດນຳພາ ແລະ ຄ້ຳຊູແບບຫາອັນອື່ນມາແທນບໍ່ໄດ້ຕໍ່ຂະແໜງການພະລັງງານຖ່ານຫີນຂອງຈີນ ແລະ ການພັດທະນາຂອງເສດຖະກິດສັງຄົມທ້ອງຖິ່ນ.

ໃນ 100 ກວ່າປີມານີ້,ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນໄດ້ພັດທະນາພ້ອມກັບວິວັດທະນາການຂອງການຫັນເປັນອຸດສາຫະກຳຂອງຈີນ,ໄດ້ຜ່ານການຍົກຍ້າຍສະຖານທີ່ 14 ເທື່ອ,ປ່ຽນຊື່ 12 ເທື່ອ,ຜ່ານຜ່າຄວາມຫຍຸ້ງຍາກລຳບາກຢ່າງຫຼວງຫຼາຍ,ສືບທອດມາຮອດປະຈຸບັນນີ້.ຫຼັງຈາກຄວາມພະຍາຍາມຢ່າງບໍ່ລົດລະຂອງຄູອາຈານ ແລະ ນັກສຶກສາຫຼາຍເຊັ່ນຄົນ,ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນໄດ້ສ້າງຍີ່ຫໍ້ອັນດັບໜຶ່ງດ້ານການສຶກສາລະດັບສູງຂອງຂະແໜງການຖ່ານຫີນຈີນ ແລະ ແບບແຜນວັດທະນະທຳນ້ຳໃຈແບບພິເສດຂອງຕົນ,ຄືຄະຕິປະຈຳໂຮງຮຽນທີ່ວ່າ"ດຸໝັ່ນຮ່ຳຮຽນ,ພະຍາຍາມດຳເນີນພຶດຕິກຳຕົວຈິງ,ສະແຫວງຫາຄວາມເປັນຈິງ ແລະ ປະດິດສ້າງໃໝ່,ບາກບັ່ນສູ້ຊົນຢ່າງທໍລະຫົດອົດທົນ,ສ້າງຄວາມເຂັ້ມແຂງດ້ວຍຕົນເອງຢ່າງບໍ່ລົດລະ",ມີຫັດສະນະດຳເນີນການສຶກສາທີ່ວ່າ"ຮຽນເກົ່າແລ້ວກໍ່ນຳໃຊ້ຕົວຈິງ,ຮຽນເກົ່ງແລ້ວກໍ່ປະດິດສ້າງໃໝ່",ມີແບບແຜນໂຮງຮຽນທີ່"ດຸໝັ່ນ,ສະແຫວງຫາຄວາມເປັນຈິງ,ມີຈິດໃຈກ້າວໄປໜ້າ ແລະ ອຸທິດກຳລັງ".

ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນໄດ້ປາກົດມີລະບົບວິຊາການທີ່ຖືວິຊາການຊ່າງເປັນຫຼັກ,ວິຊາການບໍ່ແຮ່ເປັນສີສັນພິເສດ,ວິຊາວິທະຍາສາດ,ການຊ່າງ,ວັນນະຄະດີ ແລະ ການບໍລິຫານພັດທະນາພ້ອມກັນຢ່າງກົມກຽວກັນ ແລະ ພັດທະນາເປັນມະຫາວິທະຍາໄລຫຼາຍວິຊາ.ມີທ່າແຮງ ແລະ ສີສັນອັນພົ້ນເດັ່ນໃນຫຼາຍຂົງເຂດ,ເຊັ່ນ,ການສຳຫຼວດ,ຂຸດຄົ້ນ,ນຳໃຊ້ພະລັງງານຖ່ານຫີນ,ການກໍ່ສ້າງບໍ່ແຮ່,ຄວາມປອດໄພ,ການວັດແທກແຕ້ມແຜນທີ່,ກົນຈັກ,ເຕັກໂນໂລຊີຂໍ້ມູນຂ່າວສານ,ການຟື້ນຟູຊີວະພາບ,ການຄຸ້ມຄອງໂຄງການທີ່ກ່ຽວພັນເຖິງຊັບພະຍາກອນ,ສິ່ງແວດລ້ອມ ແລະ ການຜະລິດ.

ປະຈຸບັນ,ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນມີວິຊາລະດັບປະລິນຍາຕີ 59 ວິຊາ, 35 ວິຊາລະດັບທີ 1 ສຳລັບປະລິນຍາໂທ,ມີສິດມອບໃບປະກາດສະນີຍະບັດ 10 ວິຊາສະເພາະ,16 ວິຊາລະດັບທີ 1 ສຳລັບປະລິນຍາເອກ,14 ອົງການຄົ້ນຄວ້າວິທະຍາສາດເໜືອປະລິນຍາເອກ.ມີຖັນແຖວພະນັກງານການສຶກສາທີ່ມີລະດັບສູງ,ໃນນັ້ນ,ມີທີມງານການສຶກສາລະດັບຊາດ 4 ທີມ,ຄະນະຄົ້ນຄວ້າປະດິດສ້າງໃໝ່ທີ່ສັງກັດຄະນະກຳມະການກອງທຶນວິທະຍາສາດທຳມະຊາດແຫ່ງຊາດ 2 ຄະນະ,ທີມງານປະດິດສ້າງໃໝ່ທີ່ສັງກັດກະຊວງສຶກສາທິການຈີນ 4 ທີມ.




ໂຮງຮຽນຍຶດໝັ້ນຖືການອົບຮົມນັກສຶກສາເປັນພື້ນຖານຕະຫຼອດມາ,ສຸມກຳລັງເພື່ອບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດລະດັບສູງທີ່ພັດທະນາທາງຮອບດ້ານ,ມີຄວາມຮັບຜິດຊອບດ້ານສັງຄົມ,ມີແນວຄິດປະດິດສ້າງ ແລະ ມີຄວາມສາມາດໃນພຶດຕິກຳຕົວຈິງ.ຕັ້ງໜ້າຊຸກຍູ້ການປະຕິຮູບດ້ານການສຶກສາ,ໄດ້ຮັບຜົນງານຢ່າງຫຼວງຫຼາຍ.ແຕ່ການສ້າງຕັ້ງຂຶ້ນເປັນຕົ້ນມາ,ໂຮງຮຽນໄດ້ອົບຮົມນັກສຶກສາ 2 ແສນກວ່າຄົນໃຫ້ແກ່ປະເທດ ແລະ ສັງຄົມ,ໃນນັ້ນຫຼາຍຄົນໄດ້ກາຍເປັນກຳລັງແກ່ນກາງດ້ານວິທະຍາສາດເຕັກໂນໂລຊີ ແລະ ການບໍລິຫານໃນການສ້າງສາປະເທດໃຫ້ທັນສະໄໝ ແລະ ພັດທະນາຂະແໜງການ.ໂຮງຮຽນອອກແຮງດຳເນີນການຄົ້ນຄວ້າວິທະຍາສາດ,ຍົກສູງຄວາມສາມາດປະດິດສ້າງໃໝ່ຂອງໂຮງຮຽນ,ໄດ້ຮັບໝາກຜົນວິທະຍາສາດເຕັກໂນໂລຊີລະດັບສູງຢ່າງຫຼວງຫຼາຍ.

ໂຮງຮຽນໄດ້ຕັ້ງໜ້າດຳເນີນການແລກປ່ຽນ ແລະ ການຮ່ວມມືດ້ານວິຊາການກັບອົງການພາຍໃນ ແລະ ຕ່າງປະເທດ,ຊຸກຍູ້ວຽກງານການສຶກສາເຊື່ອມໂຍງກັບສາກົນຢ່າງບໍ່ຢຸດຢັ້ງ.ປະຈຸບັນ,ມະຫາວິທະຍາໄລເຕັກໂນໂລຊີການບໍ່ແຮ່ຈີນໄດ້ເຊັນສັນຍາຮ່ວມມືກັບໂຮງຮຽນຊັ້ນສູງ 25 ແຫ່ງທີ່ຢູ່ໃນ 200 ໂຮງຮຽນເຂັ້ມແຂງຂອງໂລກ.ໄດ້ປະດິດສ້າງຮູບການຮ່ວມມືສາກົນອັນໃໝ່ໃນດ້ານການສຶກສາຊັ້ນສູງ,ສ້າງວິທະຍາໄລສາກົນ,ສ້າງຕັ້ງເວທີຮ່ວມມືສາກົນຕ່າງໆ,ເຊັ່ນ,ສູນຄົ້ນຄວ້າການບໍ່ແຮ່ຈີນ-ອົດສະຕຼາລີເປັນຕົ້ນ,ຮ່ວມກັບມະຫາວິທະຍາໄລທີ່ມີຊື່ສຽງ10 ກວ່າແຫ່ງຂອງຕ່າງປະເທດສ້າງຕັ້ງ"ສະຫະພັນການສຶກສາຊັ້ນສູງສາກົນກ່ຽວກັບການບໍ່ແຮ່,ພະລັງງານ ແລະ ສິ່ງແວດລ້ອມ".ໄດ້ສ້າງສະຖາບັນຂົງຈືດ້ານການທ່ອງທ່ຽວຢູ່ມະຫາວິທະຍາໄລກຼິນເຟີສຂອງອົດສະຕຼາລີ.ເຄີຍໄດ້ຈັດກອງປະຊຸມວິຊາການສາກົນຫຼາຍຄັ້ງຢ່າງສຳເລັດຜົນ,ເຊັ່ນ,ກອງປະຊຸມວິທະຍາສາດ ແລະ ເຕັກໂນໂລຊີການບໍ່ແຮ່ສາກົນ,ກອງປະຊຸມປະຈຳປີຂອງພະແນກອຸດສາຫະກຳເຄມີ,ຫຼອມໂລຫະ ແລະ ໂຄງການວັດຖຸຂອງສະພາບັນດິດວິສະວະກຳຈີນ ແລະ ອື່ນໆ.

图/中新社

# ຊີ່ລານຄາພູ:ສິ່ງອັດສະຈັນໃນຫັດຖະກຳເຜົ່າທູເຈ່ຍ

### 西兰卡普：土家族工艺中的奇葩

“西兰卡普”是土家族民族工艺中的一朵奇葩。在湖北省五峰土家族自治县的采花乡和湾潭镇，土家山民家庭里都有土家织锦“西兰卡普”。土家语中的“西兰卡普”是一种土家织锦。

“ຊີ່ລານຄາພູ”ເປັນສິ່ງອັດສະຈັນໃນຫັດຖະກຳຂອງເຜົ່າທູເຈ່ຍຂອງຈີນ.ຢູ່ຕາແສງໄຊ້ຮວາ ແລະ ເມືອງນ້ອຍວ່ານທານຂອງເມືອງປົກຄອງຕົນເອງເຜົ່າທູເຈ່ຍອູເຟີ່ງແຂວງຫູເປີຍຈີນ,ແຕ່ລະຄອບຄົວລ້ວນແຕ່ມີແຜ່ນແພເຜົ່າທູເຈ່ຍ“ຊີ່ລານຄາພູ”.ໃນພາສາຂອງເຜົ່າທູເຈ່ຍ,“ຊີ່ລານຄາພູ”ໝາຍເຖິງແຜ່ນແພຊະນິດໜຶ່ງ.“ຊີ່ລານ”ແປວ່າ“ໜ້າຜ້າຫົ່ມ”,“ຄາພູ”ແປວ່າ“ດອກໄມ້”,“ຊີ່ລານຄາພູ”ກໍ່ແມ່ນຜ້າຫົ່ມລາຍດອກຂອງເຜົ່າທູເຈ່ຍ.ມີເລື່ອງເລົ່າລືອີກຊະນິດໜຶ່ງວ່າ,ຊີ່ລານແມ່ນຊື່ຄົນ,ຄາພູແມ່ນຜ້າລາຍທີ່ຜະລິດໂດຍຊີ່ລານ.



## ສີມືຕ່ຳແຜ່ນແພເຜົ່າທູເຈ່ຍແບບພິເສດ

ແຜ່ນແພເຜົ່າທູເຈ່ຍມີສີມືແບບພິເສດ,ມີຮູບແບບອັນສວຍງາມ ແລະ ລວດລາຍຢ່າງອຸດົມສົມບູນ,ຊ່ຽວຊານກ່າວວ່າມັນເປັນສິລະປະມານດາທີ່ມີຊື່ສຽງດັ່ງດັງ ເທົ່າກັບເຄື່ອງຖັກແສ່ວຊູ່ຊຽງຊີ໋ວ.ບ້ານເຜົ່າທູເຈ່ຍຖືສີມືຖັກແສ່ວເກັ່ງ ຫຼື ບໍ່ເປັນສັນຍາລັກທີ່ສາວເຜົ່າທູເຈ່ຍເປັນຄົນຫົວດີມີສີມື ຫຼື ບໍ່.





ສາວເຜົ່າທູເຈ່ຍແຕ່ອາຍຸ 7 ປີຫາ 13 ປີ,ຮອດລະດູໜາວທຸກປີກໍ່ຈະຖັກແສ່ວລວດລາຍຂອງສາຍມັດແອວ,ລວດລາຍເຫຼົ່ານີ້ໂຮມເຂົ້າກັນແລ້ວກໍ່ແມ່ນພື້ນຖານຂອງລວດລາຍຢູ່ເທິງໜ້າຜ້າຫົ່ມ“ຊີ່ລານຄາພູ”.ກ່ອນການສ້າງຄອບຄົວໜຶ່ງປີ,ສາວເຜົ່າທູເຈ່ຍຈະບໍ່ໄດ້ອອກໄປເຮັດວຽກໄຮ່ການນາແລ້ວ,ຫາກແມ່ນຖັກ“ຊີ່ລານຄາພູ”ໂດຍສະເພາະຢູ່ໃນເຮືອນ,ຢ່າງໜ້ອຍຕ້ອງຜະລິດສອງຜືນ,ບາງເທື່ອຈະຫຼາຍເຖິງ 8 ຜືນ,ເຊິ່ງມີລວດລາຍ 100 ກວ່າຊະນິດ,ເຊັ່ນ,“ດາວເຕັມຟ້າ” “ຮອຍຕີນໝາ” “48 ເກາະ”ແລະ ອື່ນໆ.ສະນັ້ນ,ສາວເຜົ່າທູເຈ່ຍແມ່ນຮຽນສີມືນຳຜູ້ໃຫຍ່ມາແຕ່ຍາມເດັກ,ໃນເວລາສ້າງຄອບຄົວ,ຈະນຳເອົາເຄື່ອງແຜ່ນແພຄົບຊຸດເປັນເຄື່ອງຕ້ອນຂອງໃພ້ໃໝ່.

## ສ່ອງແສງເຖິງວັດທະນະທຳຊົນເຜົ່າທູເຈ່ຍ

“ຊີ່ລານຄາພູ”ເປັນສ່ວນປະກອບອັນສຳຄັນຂອງວັດທະນະທຳຊົນເຜົ່າທູເຈ່ຍ,ລວດລາຍແຜ່ນແພແມ່ນປະດິດແຕ່ງຈາກດ້ານຕ່າງໆໃນຊີວິດການເປັນຢູ່ຂອງປະຊາຊົນເຜົ່າທູເຈ່ຍ,ໃນນັ້ນ,ລວດລາຍມູນເຊື້ອທີ່ກຳນົດເປັນຮູບປະຈຳໂດຍພື້ນຖານນັ້ນມີເຖິງປະມານ 120 ຊະນິດ.

ລວດລາຍທີ່ເອົາດອກໄມ້ເປັນຫົວຂໍ້ນັ້ນມີດອກເມີຍ,ດອກບົວ,ດອກມູຕ່ານ,ດອກຜັກແປັ້ນ ແລະ ອື່ນໆ;ລວດລາຍທີ່ເອົາຮູບສັດເປັນຫົວຂໍ້ນັ້ນມີນົກກະຈອກ,ນົກແອ່ນ,ລາຍເສືອ,ຮອຍຕີນແມວເປັນຕົ້ນ;ລວດລາຍຂອງເຄື່ອງໃຊ້ປະຈຳວັນມີໂຕະ ແລະ ຕັ່ງເປັນຕົ້ນ;ລວດລາຍຮູບເລຂາຄະນິດມີ 8 ເກາະດ່ຽວ ແລະ 20 ເກາະເປັນຕົ້ນ;ລວດລາຍເປັນຕົວໜັງສືມີຮູບ "卍", ຮູບ “王”, ແລະ ຮູບ “喜”ເປັນຕົ້ນ;ລວດລາຍທີ່ເປັນຮູບສິລິມຸງຄຸນມີນົກຫົງຊອດດອກມູຕ່ານ,ນົກເດັດດອກບົວ,ນົກຫົງຄູ່ໄຫວ້ພະອາທິດ,ມັງກອນຄູ່ຍາດໄຂ່ມຸກ,ນົກແຊວຮ້ອງເພງຢູ່ເທິງກິ່ງຕົ້ນເມີຍ ແລະ ອື່ນໆ.

ການປະດິດແຕ່ງລວດລາຍຂອງ“ຊີ່ລານຄາພູ”ມີສາຍພົວພັນຢ່າງໃກ້ຊິດກັບຮີດຄອງປະເພນີຂອງປະຊາຊົນເຜົ່າທູເຈ່ຍ,ສະແດງໃຫ້ເຫັນເຖິງການພົວພັນອັນກົມກຽວກັນລະຫວ່າງປະຊາຊົນເຜົ່າທູເຈ່ຍກັບທຳມະຊາດ.

ທູກຢູ່ພາຍໃຕ້ກຳມືຂອງແມ່ຍິງເຜົ່າທູເຈ່ຍປຽບເໝືອນອີກໂລກໜຶ່ງ,ເຊິ່ງຈະສາມາດພັນລະນາຮູບພາບຂອງສິ່ງທີ່ມີຢູ່ເທິງພູດອກ ແລະ ຢູ່ທ່າມກາງດິນນາ.ເຖິງວ່າເຂົາເຈົ້າບໍ່ຄ່ອຍມີລະດັບການສຶກສາສູງປານໃດກໍ່ຕາມ,ແຕ່ສາມາດປະດິດແຕ່ງຮູບລວດລາຍ“ຊີ່ລານຄາພູ”ທີ່ມີລັກສະນະນາມມະທຳຈຳນວນໜຶ່ງ.

# ບໍລິສັດລາວເຈແລ່ມເຈົ໋າຈຳກັດ

## 老挝成捷企业有限公司







ທ່ານ ຮວງ ຈິນພູ ປະທານບໍລິສັດ
黄金浦 董事长

ທີ່ຢູ່:ຫຼັກ 8 ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856-21-314880
856-20-55763908
传真：856-21-314882













鼎顺货运
DINGSHUN LOGISTICS

# 云南鼎顺货运代理有限公司

## Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for “China ASEAN free trade zone” .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

**中国昆明、老挝、泰国、缅甸、越南、柬埔寨 货运专线　大型项目配套物流**

**海运、陆运、空运、国际运输、物资采购　保险代理、单证缮制、代理报关、外汇结算，提供门到门服务**

**Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.**

**Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service**









Http：www.dingshun88.com　E-MAIL：168606284@QQ.COM
Customer QQ：1459997464、168606284　TEL：0086-871-68381415
ADD:No.11C Entrance2 Building 7th Xichunyuan
Century Town Kunming Province Yunnan China

网站：www.dingshun88.com　E-MAIL：168606284@QQ.COM
商务QQ：1459997464、168606284　电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C

文/杨晓梅 蓝天

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

### 情景会话：春节旅游去哪里？

### ບົດສົນທະນາ: ບຸນກຸດຈີນໄປທ່ອງທ່ຽວໃສ?

zhè gè chūn jié cháng jià zhǔn bèi qù nǎ lǐ
A. 这个春节长假准备去哪里？
ບຸນກຸດຈີນປີນີ້ພັກເວລາຍາວ,ເຈົ້າກຽມໄປທ່ຽວໃສ?

jù tǐ qù nǎ er hái méi dìng dàn xiǎng dài zhe jiā rén zhǎo gè wēn nuǎn de dì fāng dù jià nǐ jiàn yì yí xià ma
B. 具体去哪儿还没定，但想带着家人找个温暖的地方度假，你建议一下嘛。
ຈະໄປບ່ອນໃດຍັງບໍ່ທັນຕົກລົງເທື່ອ,ແຕ່ວ່າ,ຢາກຊອກຫາບ່ອນທີ່ອົບອຸ່ນນັ້ນພາຄອບຄົວໄປພັກຜ່ອນຢ່ອນໃຈ,ເຈົ້າມີຄວາມເຫັນແນວໃດລອງແນະນຳໃຫ້ຂ້ອຍເບິ່ງ.

wēn nuǎn de dì fāng ya nà běi fāng jiù bú yào kǎo lǜ le yào kàn hǎi qù hǎi nán de sān yà guǎng xī de běi hǎi bú kàn hǎi jiù xuǎn yún nán de hé kǒu bǎn nà téng chōng huò zhě ruì lì zhè xiē dì fāng dōu wēn nuǎn shū shì
A. 温暖的地方呀，那北方就不要考虑了。要看海去海南的三亚、广西的北海，不看海就选云南的河口、版纳、腾冲或者瑞丽，这些地方都温暖舒适。
ບ່ອນທີ່ອົບອຸ່ນນັ້ນ,ພາກເໜືອກໍບໍ່ຕ້ອງພິຈາລະນາແລ້ວ,ຄັນວ່າຢາກເບິ່ງທະເລຈະຕ້ອງໄປຊານຢາໄຫນານ,ປາຍໄຫກວາງຊີ;ຄັນບໍ່ຢາກເບິ່ງທະເລກໍຈະຕ້ອງເລືອກເອົາເຫີໂຂວ,ສິບສອງພັນນາ,ເຖິງຊົ່ງ ຫຼື ຢຸຍຫລີຂອງຢຸນນານ.

nǐ shuō de zhè xiē dì fāng wǒ mén dōu qù guò xiàn zài hái zi fàng hán jià le tā de yuàn wàng shì dào yì guó qíng diào de dì fāng qù lǚ yóu zhǎng zhǎng jiàn shi
B. 你说的这些地方我们都去过，现在孩子放寒假了，他的愿望是到异国情调的地方去旅游，长长见识。
ບ່ອນທີ່ເຈົ້າເວົ້າມານັ້ນ,ພວກເຮົາເຄີຍໄປແລ້ວ,ປັດຈຸບັນນີ້,ພວກເດັກນ້ອຍລ້ວນແຕ່ໄດ້ພັກຮຽນຍາມໜາວແລ້ວ,ຄວາມປາຖະໜາຂອງພວກເດັກນ້ອຍນັ້ນຢາກໄປທ່ອງທ່ຽວບ່ອນທີ່ມີຮີດຄອງປະເພນີຕ່າງປະເທດເພື່ອເພີ່ມຄວາມຮູ້ຮື່ນຕື່ມອີກ.

ò nà wǒ jiàn yì nǐ gàn cuì qǐng nián xiū jià hé chūn jié cháng jià bìng zài yì qǐ zì jià yóu qù lǎo wō tài guó nà xiē dì fāng wēn nuǎn shū shì néng xiǎng shòu yì guó fēng qíng hái néng kàn hǎi
A. 哦，那我建议你干脆请年休假，和春节长假并在一起自驾游，去老挝、泰国，那些地方温暖舒适，能享受异国风情还能看海。
ໂອ໋,ຂ້ອຍສະເໜີໃຫ້ເຈົ້າຂໍພັກປະຈຳປີບວກກັບພັກກຸດຈີນເວລາຍາວຂັບລົດເອົາເອງໄປທ່ຽວລາວ,ໄທ,ບ່ອນນັ້ນມີອາກາດອົບອຸ່ນສະບາຍ,ບໍ່ພຽງແຕ່ຈະຊົມເບິ່ງຮີດຄອງປະເພນີຕ່າງແດນໄດ້ຍັງສາມາດມອງເຫັນທະເລອີກດ້ວຍ.

wán zhè yí tàng yào duō shǎo tiān ne
B. 玩这一趟要多少天呢？
ໄປທ່ຽວບ່ອນທີ່ເວົ້າມານັ້ນຕ້ອງການຈັກວັນ?

wǒ yuán dàn qī jiān gāng qù guò dà gài tiān zuǒ yòu
A. 我元旦期间刚去过，大概15天左右。
ໃນລະຍະປີໃໝ່ສາກົນ,ຂ້ອຍຫາກໍ່ໄປເທື່ອໜຶ່ງ,ຕ້ອງການປະມານ15 ວັນ.

ò bǐ jiào hé shì shuō shuō jù tǐ xíng chéng ma
B. 哦，比较合适。说说具体行程嘛！
ໂອ໋,ເໝາະສົມສົມຄວນ.ລອງເວົ້າວາລະການເດີນທາງລະອຽດໃຫ້ຟັງແນ່.

hǎo de cóng kūn míng kāi chē chū fā dào měng là xiàn jìng nèi de mó hān kǒu àn yào yì tiān shí jiān yán tú yǒu chuān guò yà rè dài yǔ lín de gāo sù gōng lù jǐng sè tè bié hǎo cóng mó hān zài dào lǎo wō de láng bó lā bāng yǒu bǎi duō gōng lǐ yě yào yì tiān shí jiān dì èr tiān yào zài láng bó lā bāng yóu lǎn yì tiān
A. 好的。从昆明开车出发到勐腊县境内的磨憨口岸要一天时间，沿途有穿过亚热带雨林的高速公路景色特别好；从磨憨再到老挝的琅勃拉邦有3百多公里，也要一天时间，第二天要在琅勃拉邦游览一天。
ກໍໄດ້.ຂັບລົດອອກຈາກຄຸນໝິງໄປຮອດດ່ານບໍ່ຫານໃນເມືອງຫລ້າຈະຕ້ອງການເວລາ 1 ວັນ,ໃນລະຍະທາງມີທາງດ່ວນທີ່ລອດຜ່ານປ່າດົງຝົນແຖບຮ້ອງສຳຮອງທີ່ມີພາບວິວທິວທັດອັນດີງາມທີ່ສຸດສະເພາະຕົວ.ຈາກບໍ່ຫານເຖິງຫລວງພະບາງລາວມີ 300 ກວ່າກິໂລແມັດ,ກໍຈະຕ້ອງເວລາ 1 ວັນ,ມື້ທີ 2,ຈະຕ້ອງໄປທ່ອງທ່ຽວຢູ່ຫລວງພະບາງ 1 ວັນ.

láng bó lā bāng ya nà kě shì dōng nán yà wén míng de lǚ yóu shèng dì wǒ yào duō wán er yì tiān
B. 琅勃拉邦呀！那可是东南亚闻名的旅游胜地，我要多玩儿一天。
ສຳລັບຫລວງພະບາງນັ້ນກໍແມ່ນສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງໂດ່ງດັງໃນອາຊີຕາເວັນອອກສ່ຽງໃຕ້,ຂ້ອຍຢາກທ່ຽວຫຼາຍອີກມື້ໜຶ່ງ.

cóng láng bó lā bāng dào wàn róng zhǐ yǒu gōng lǐ zǎo shàng chū fā dào wàn róng hòu kě yǐ qù nán sòng hé wán piāo liú cóng wàn róng dào lǎo wō shǒu dū wàn xiàng yǒu gōng lǐ wàn xiàng shì méi gōng hé yán àn zuì měi lì de dà dū shì rán hòu cóng wàn xiàng dào tài guó de bā tí yǎ yǒu gōng lǐ bā tí yǎ shì zhù míng de hǎi bīn dù jià shèng dì yě shì yǒu míng de bú yè chéng kě yǐ chū hǎi dào shān hú dǎo cān jiā gè zhǒng shuǐ shàng huó dòng hái kě yǐ yóu lǎn rè dài huā yuán
A. 从琅勃拉邦到万荣只有250公里，早上出发到万荣后，可以去南宋河玩漂流；从万荣到老挝首都万象有160公里，万象是湄公河沿岸最美丽的大都市；然后从万象到泰国的芭提雅有640公里，芭提雅是著名的海滨度假胜地，也是有名的不夜城，可以出海到珊瑚岛参加各种水上活动，还可以游览热带花园。
ຈາກຫລວງພະບາງຮອດວັງວຽງມີແຕ່ 250 ກິໂລແມັດ,ເລີ່ມອອກເດີນທາງຕອນເຊົ້າເມື່ອໄປຮອດວັງວຽງແລ້ວ,ຈະໄປລ່ອງນ້ຳໃນນ້ຳຊ່ອງໄດ້.ຈາກວັງວຽງໄປນະຄອນຫຼວງວຽງຈັນມີແຕ່ 160 ກິໂລແມັດ.ນະຄອນວຽງຈັນເປັນຕົວເມືອງໃຫຍ່ອັນສວຍງາມທີ່ສຸດຕາມແຄມແມ່ນ້ຳຂອງ.ຈາກວຽງຈັນໄປພັດທະຢາຂອງໄທມີ 640 ກິໂລແມັດ,ພັດທະຢາເປັນສະຖານທີ່ແຄມທະເລພັກຜ່ອນຢ່ອນອາລົມທີ່ມີຊື່ສຽງໂດ່ງດັງ,ທັງເປັນຕົວເມືອງໄຮ້ກາງຄືນທີ່ມີຊື່ສຽງ,ຈະຂີ່ເຮືອອອກຈາກທະເລໄປເກາະຫີນປະກາລັງເຂົ້າຮ່ວມກິດຈະກຳເທິງນ້ຳຕ່າງໆໄດ້,ທັງທ່ຽວຊົມສວນດອກໄມ້ແຖບຮ້ອນໄດ້.

zhī dào wǒ yǐ qián qù guò
B. 知道，我以前去过。
ເຂົ້າໃຈແລ້ວ,ແຕ່ກ່ອນ,ຂ້ອຍເຄີຍໄປແລ້ວ.

cóng bā tí yǎ dào màn gǔ yǒu gōng lǐ zhōng tú kě yǐ yóu lǎn yě shēng dòng wù yuán hé hǎi yáng shì jiè zài màn gǔ kě yǐ wán yī dào liǎng tiān rán hòu cóng màn gǔ dào qīng mài yǒu gōng lǐ wǎn shàng kě yǐ qù yóu qīng mài de yè shì cóng qīng mài dào qīng lái gōng lǐ cóng qīng lái dào qīng kǒng gōng lǐ qīng kǒng yǒu gè chuán qí de měi sī lè zhōng guó cūn kě yǐ qù kàn kàn zuì hòu cóng qīng kǒng huí dào zhōng guó de měng là yǒu gōng lǐ
A. 从芭提雅到曼谷有160公里，中途可以游览野生动物园和海洋世界，在曼谷可以玩一到两天；然后从曼谷到清迈有730公里，晚上可以去游清迈的夜市；从清迈到清莱250公里，从清莱到清孔60公里，清孔有个传奇的美思乐“中国村”，可以去看看；最后从清孔回到中国的勐腊有280公里。
ຈາກພັດທະຢາເຖິງບາງກອກປະມານ 160 ກິໂລແມັດ,ໃນໄລຍະທາງຈະໄປທ່ຽວຊົມສວນສັດທຳມະຊາດ ແລະ ໂລກທະເລໄດ້,ຢູ່ບາງກອກຈະຫຼິ້ນ 1-2 ວັນໄດ້,ແລ້ວຈາກບາງກອກໄປຊຽງໃໝ່ມີ 730 ກິໂລແມັດ,ຕອນຄ່ຳຈະໄປທ່ຽວຕະຫລາດການຄືນຂອງຊຽງໃໝ່ໄດ້;ຈາກຊຽງໃໝ່ໄປຊຽງລາຍ 250 ກິໂລແມັດ,ຈາກຊຽງລາຍເຖິງຊຽງຂອງ 60 ກິໂລແມັດ,ຊຽງຂອງມີ“ບ້ານຈີນບ້ານໜຶ່ງ”ຊື່ໝາຍສະລອງແບບເທບນິຍານ,ຈະໄປຊົມເບິ່ງໄດ້.ທ້າຍສຸດ,ຈາກຊຽງຂອງກັບຄືນສູ່ເມືອງຫລ້າຈີນມີ 280 ກິໂລແມັດ.

ò zhè tiáo lǚ yóu xiàn lù zhēn de hěn hǎo wǒ yào zhǎo gè lǚ xíng shè bào míng gēn zhe zì jià yóu chē duì yì qǐ zǒu yí lù shàng yǒu rén zhào hù jiù hòu gù wú yōu le
B. 哦，这条旅游线路真的很好！我要找个旅行社报名，跟着自驾游车队一起走，一路上有人照护就后顾无忧了。

ໂອ໋,ສາຍທ່ອງທ່ຽວເສັ້ນນີ້ແມ່ນດີແທ້ອີ່ຫລີ! ຂ້ອຍຈະຊອກຫາບໍລິສັດທ່ອງທ່ຽວສະເໜີຕົວໄປນຳກັນກັບທີມຂັບລົດເອົາເອງ,ຕະຫລອດທາງມີຄົນເບິ່ງແຍ່ງກໍບໍ່ມີຫຍັງເປັນຫ່ວງແລ້ວ.

## 二、词汇积累 ສະສົມຄຳສັບ

jǐn zhāng
紧 张 ຕື່ນເຕັ້ນ,ເຄັ່ງຕຶງ

yòu yào kǎo shì le wǒ yǒu diǎn er jǐn zhāng
又要考试了，我有点儿紧张。
ຈະຕ້ອງດຳເນີນການສອບເສັງແລ້ວ,ຂ້ອຍມີຄວາມເຄັ່ງຕຶງໜ້ອຍໜຶ່ງ.

jīng cǎi
精 彩 ຍອດຢ້ຽມ

liáng lǎo shī de shì fàn kè hěn jīng cǎi
梁老师的示范课很精彩。
ບົດອະທິບາຍແບບຢ່າງຂອງອາຈານລຽງອະທິບາຍໄດ້ຍອດຢ້ຽມຫຼາຍ.

jīng shén
精 神 ນ້ຳໃຈ,ຈິດໃຈ

zhù rén wéi lè de léi fēng jīng shén yǐng xiǎng le zhōng guó jǐ dài rén
助人为乐的雷锋精神影响了中国几代人。
ຈິດໃຈລູຍຟົງທີ່ຊ່ວຍຄົນເພື່ອຄວາມສະບາຍໃຈໄດ້ມີຜົນສະທ້ອນຕໍ່ຫຼາຍເຊັ່ນຄົນຈີນ.

## 三、文化知识 ຄວາມຮູ້ວັດທະນະທຳ

### 中国民间“过年”的传说

### ຕຳນານເລົ່າລືກ່ຽວກັບ“ບຸນປີໃໝ່”ພື້ນເມືອງຈີນ

中国的春节是农历（又叫阴历年）正月初一，俗称“过年”。相传：中国古时侯有一种叫“年”的怪兽，头长尖角，凶猛异常，“年”兽长年深居海底，每到除夕夜（农历正月初一的前夜），就爬上岸来吞食牲畜、伤害人命。因此，村寨里的人在除夕前纷纷扶老携幼，逃往深山，以躲避“年”的伤害。

有一年的除夕，乡亲们都忙着收拾东西逃往深山，这时候来了一位白发老人，他对一户老婆婆说只要让他在她家住一晚，他定能将“年”兽驱走。众人不信，老婆婆劝其还是上山躲避的好，老人坚持留下，众人见劝他不住，便纷纷上山躲避去了。

半夜时分，“年”兽闯进村。它发现村里气氛与往年不同，有一户人家门贴大红纸，屋内灯火通明。“年”兽浑身一抖，怪叫了一声。

突然传来白发老人燃响的爆竹声，“年”兽浑身颤栗，再也不敢向前凑了，原来“年”兽最怕红色、火光和炸响。这时大门大开，院内一位身披红袍的老人哈哈大笑，“年”兽大惊失色，仓皇而逃。

第二天，当人们从深山回到村里时，发现村里安然无恙，这才恍然大悟，原来白发老人是帮助大家驱逐“年”兽的神仙，人们还发现了白发老人驱逐“年”兽的三件法宝。从此，每年的除夕，家家都贴红对联，燃放爆竹，户户灯火通明，守更待岁。

这风俗越传越广，成了中国民间最隆重的传统节日“过年”。 （本期完）

ບຸນກຸດຈີນແມ່ນຂຶ້ນ 1 ຄ່ຳເດືອນຈຽງປະຕິທິນຈີນ,ປະເພນີເອີ້ນວ່າ“ບຸນກຸດຈີນ”.ໄດ້ມີຕຳນານເລົ່າລືກັນມາວ່າ,ໃນສະໄໝບູຮານຈີນມີສັດແປກປະລາດແນວໜຶ່ງເອີ້ນວ່າກຸດຫລືປີ,ສັດປະຫລາດນີ້ຢູ່ເທິງຫົວມີເຂົາແຫລມ,ໂຫດຮ້າຍຜິດປົກກະຕິ,ໂຕກຸດນີ້ອາໄສຢູ່ພື້ນທະເລເລິກຕະຫລອດປີ,ເມື່ອເຖິງວັນສິ່ງທ້າຍປີເກົ່າ,ກໍຂຶ້ນມາກິນສັດບ້ານ,ທຳຮ້າຍຊີວິດຄົນ.ເນື່ອງດ້ວຍເຫດນີ້,ໃນກາງຄືນວັນສິ່ງທ້າຍປີເກົ່າ,ຄົນທັງຫຼາຍໃນບ້ານນີ້ກໍພາກັນຈູງຜູ້ເຖົ້າເຈຍເດັກນ້ອຍໄປຫລົບຫລີ້ຢູ່ໃນປ່າ,ເພື່ອຫລີກເວັ້ນການທຳຮ້າຍຈາກໂຕກຸດ.

ມີວັນສິ່ງທ້າຍປີເກົ່າປີໜຶ່ງ,ພວກໄທບ້ານຟ້າວຟັ່ງມ້ຽນເຄື່ອງໄປຫລົບຫລີ້ເຂົ້າພູເຂົາປ່າເລິກ,ຂະນະນີ້ມີຜູ້ເຖົ້າຜົມງອກຜູ້ໜຶ່ງມາ,ເຖົ້າເວົ້າຕໍ່ແມ່ເຖົ້າຜູ້ໜຶ່ງວ່າ,ຖະແນມແຕ່ໃຫ້ລາວນອນຢູ່ເຮືອນແມ່ເຖົ້າຄືນໜຶ່ງ,ລາວຈະຂັບໄລ່ສັດກຸດໜີອອກໄປຢ່າງແນ່ນອນ.ຄົນທັງຫຼາຍບໍ່ເຊື່ອ,ແມ່ເຖົ້າຕັກເຕືອນລາວໃຫ້ໄປຫລົບຫລີ້ຢູ່ພູເຂົາປ່າເລິກຈະດີກວ່າ,ພໍ່ເຖົ້າຍັງຢືນການວ່າຈັ່ງໃດກໍຈະຢູ່ໃນບ້ານ,ຜູ້ຄົນທັງຫຼາຍເຕືອນລາວບໍ່ໄຫວ,ກໍພາກັນເດີນທາງເຂົ້າໄປຫລີ້ຢູ່ພູເຂົາປ່າເລິກພຸ້ນແລ້ວ.

ໃນເວລາທ່ຽງຄືນ,ສັດກຸດເຂົ້າສູ່ບ້ານ,ກຸດເຫັນບັນຍາກາດໃນບ້ານແຕກຕ່າງກັນກັບເມື່ອກ່ອນ,ມີເຮືອນຫລັງໜຶ່ງ,ເທິງປະຕູໄດ້ຕິດເຈັ້ຍສີແດງ,ໃນເຮືອນໄຟທຽນແຈ້ງສະຫວ່າງຕະຫລອດ.ໂຕກຸດຢ້ານສັ່ນທັງຮ້ອງສຽງແປກອອກມາ.

ບັງເອີນໄດ້ຍິນສຽງໝາກກະໂພກທີ່ພໍ່ເຖົ້າຈູດດັງຂຶ້ນນັ້ນ,ສັດກຸດຢ້ານສັ່ນທົດໆ,ບໍ່ກ້າເຂົ້າມາອີກແລ້ວ.ທີ່ຈິງແລ້ວໂຕກຸດຢ້ານສີແດງ,ແສງໄຟ ແລະ ສຽງລະເບີດ.ເວລານີ້,ປະຕູໂຂງໄຂອອກ,ໃນສວນບ້ານມີຜູ້ເຖົ້າຜູ້ໜຶ່ງນຸ່ງເຄື່ອງສີແດງຫົວຮ້າໆອອກມາຫມົດແຮງ,ໂຕກຸດຕື່ນຕົກໃຈຈົນອ້າປາກຕາກເຫື່ອກ,ຟ້າວປົບໜີໄປຢ່າງໄວ.

ມື້ທີສອງ,ໃນເວລາຄົນທັງຫຼາຍກັບມາຈາກພູເຂົາປ່າເລິກ,ປະກົດເຫັນໃນບ້ານສະຫງົບງຽບບໍ່ມີຫຍັງເກີດຂຶ້ນ,ຈຶ່ງຮູ້ສຶກແປກໃຈ,ເຂົ້າໃຈວ່າຜູ້ເຖົ້າຜົມງອກຜູ້ນີ້ແມ່ນເທວະດາທີ່ມາຊ່ວຍພວກເຮົາຂັບໄລ່ໂຕກຸດ.ຜູ້ຄົນທັງຫຼາຍຍັງປະກົດເຫັນ“ຂອງປະເສີດລັບ”ສາມຢ່າງຂອງຜູ້ເຖົ້າທີ່ຂັບໄລ່ສັດໂຕກຸດ.ແຕ່ນີ້ໄປໜ້າ,ມື້ສິ່ງທ້າຍປີເກົ່າທຸກປີ,ທຸກໆຄອບຄົວລ້ວນແຕ່ຕິດຄຳໂຄງຄູ່ເທິງປະຕູ,ຈູດໝາກກະໂພກ,ໂຄມໄຟແຈ້ງສະຫວ່າງຕະຫລອດຄືນໃນໝົດທຸກຄອບຄົວ,ເຝົ້າຄືນສິ່ງທ້າຍປີເກົ່າຕ້ອນຮັບປີໃໝ່.

ຮີດຄອງປະເພນີດັ່ງກ່າວນີ້ເຜີຍແຜ່ໄປຢ່າງກວ້າງຂວາງ,ກາຍເປັນ“ການສະຫລອງບຸນປີໃໝ່”ຊຶ່ງແມ່ນເທດສະການປະເພນີທີ່ເປັນມູນເຊື້ອຢ່າງຄຶກຄື້ນທີ່ສຸດໃນໝູ່ປະຊາຊົນຂອງຈີນ.

(ຈົບສະບັບນີ້)







ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ,ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໂລກພະຍາດແລະໄລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສຳນັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສຳນັກງານຕັ້ງຢູ່ຄຸນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກຳປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກສຸດປາຍ,ເພື່ອສະໜອງບໍລິການ “ໂດຍໄວ,ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ” ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。







总经理：张惠平先生
ທ່ານ ຈາງຮຸ້ຍຜິງ

主营业务
★国际货代、货物进出口
★中国—老挝—泰国 专线往返海路、陆路运输
★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ
★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ
★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ

公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）
ສຳນັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ
电话TEL：0691-8811237、8811437 、13518799245(张惠平) E-MAIL: 168606284@qq.com
传真FAX：0691-8811237 客服QQ：783667765
网站：www.ydjck.com E-mail: 783667765@qq.com
老挝万象办公室地址（OFFICE LAO)：万象市T2路（中国茅台酒专卖店对面）
ສຳນັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ
电话：00856-20-22992286、22564918 电话/传真：00856-21-214071
泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120
Tel:+66-838247785, +66-906364278 , 021-534852
Email: 168606284@QQ.com

# 云南阳光道桥股份有限公司
## YUNNAN SUNNY ROAD & BRIDGE CO.,LTD
## ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດ




具有五十多年历史的云南阳光道桥股份有限公司,拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

地址：中国　昆明市官南大道1588号
电话：0871-67017107　67017108
网址：WWW.YNROAD.COM

ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທິຊັ້ນ 1 ໃນການຮັບເໝົາລວມວິສະວະກຳສ້າງທາງ ແລະ ມີສິດດຳເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສຳເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທຳອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ IS09001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຼິກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107　67017108
ເວັບໄຊ: WWW.YNROAD.COM

做人守德　感恩做人　做事守道　负责做事
ເປັນຄົນຕ້ອງມີຄຸນສົມບັດ　ຮູ້ຕອບບຸນແທນຄຸນ　ເຮັດວຽກປະຕິບັດຕາມຫຼັກການ　ກ້າແບກຫາບໜ້າທີ່ຮັບຜິດຊອບ




Wow !
ມາແລ້ວ
ໂປໂມຊັນ ພິເສດ

Grandly Open
On 2nd Dec. 2014




ສຳລັບ ບັດສະມາຊິກ
ຂອງ VIENTIANE CENTER*
( ຂໍ້ມູນເພີ່ມເຕີມ ສາມາດຕິດຕໍ່ພົວພັນກັບທາງພວກເຮົາໄດ້ )

More Than One Hundred International Brands
Head the list of Vientiane Center Brands

OMEGA　PLATINUM cineplex　The PIZZA Company

TONY MOLY　benefit　SHISEIDO　Guy Laroche　LONGINES　Arrow
absorba　bsc　RADO　ENFANT　ESTĒE LAUDER　Dior
Wacoal　ELLE　St.Andrews　Wacoal Blouse　Little Walcoal　POPLINE
GUCCI　CLINIQUE　Mix-Self　How　LANCÔME　MAC

Hotline/+856 20- 5922 5777　5922 6777

投资商：云南建工集团有限公司暨云南省海外投资有限公司
ຜູ້ລົງທຶນໂຄງການ: ບໍລິສັດວິສະວະກຳກໍ່ສ້າງຢູນນານກຸ່ມຈຳກັດ-ບໍລິສັດລົງທຶນຕ່າງປະເທດແຂວງຢູນນານຈຳກັດ
INVESTORS: YUNNAN CONSTRUCTION ENGINEERING GROUP CO.,LTD. AND YUNNAN PROVINCIAL OVERSEAS INVESTMENT CO.,LTD.

吉达蓬集团公司
ບໍລິສັດກິດຕະພົງກຸ່ມຈຳກັດ
KRITTAPHONG GROUP CO.,LTD.

开发商：北隆赞湖综合发展有限公司
ຜູ້ພັດທະນາໂຄງການ: ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ
DEVELOPER: NORTH NONGCHAN COMPLEX DEVELOPMENT CO.,LTD.

◇Facebook:www.facebook.com/www.vientiane center.com.cn
◇Http:www.vclaos.com

项目地址：老挝万象市库央路
ທີ່ຢູ່ໂຄງການ: ຖະໜົນຄູວຽງ-ນະຄອນຫຼວງວຽງຈັນ
PROJECT ADDRESS:KHOU VIENG ROAD, VIENTIANE, LAOS

ການບິນລາວ
Lao Airlines

# More Miles, More Privileges







## ChamPa MuangLao Member card

**Gold Card**




**Silver Card**




ISO 9001:2008
CERTIFIED
TICKETING & RESERVATIONS

For more information please contact Lao Airlines ticketing office
Tel: +856 21 212 051-54 ; Fax: +856 21 212 056
Email: ticketing@laoairlines.com ; reservation@laoairlines.com
www.laoairlines.com

Muangthong Hotel
Tel : +856 71 254 976
Fax : +856 71 252 974
Email: reservation@meuangthonglpb.com

Champa Holidays
Tel : +856 21 212 051-54
Fax : +856 21 212 056
Email: tour@laoairlines.com